IUCN
The World Conservation Union

# ແຜນງານຍຸດທະສາດ 2007-2011

## ສຳລັບອົງການອະນຸລັກຊັບພະຍາກອນທຳມະຊາດສາກົນ ໃນ ສປປ ລາວ



IUCN Lao PDR Country Office

ກົນໄກການປົກຄອງບໍລິຫານ,ປ່າສະຫງວນ,ຊີວະນາໆພັນກະສິກຳ ແລະ ນ້ຳ(ນ້ຳ, ດິນບໍລິເວນນ້ຳ ແລະ ແຫຼ່ງນ້ຳ),
ວິທີການຂອງອົງການ IUCN ແລະ ລະບົບນິເວດວິທະຍາ ຢູ່ໃນ ສປປ ລາວ

IUCN – ອົງການອະນຸລັກທຳມະຊາດສາກົນ, ໄດ້ເຕົ້າໂຮມເອົາທັງປະເທດ, ບັນດາອົງການຈັດຕັ້ງໃນພາກລັດ, ຫລາຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (NGOs), ແລະ ບັນດານັກວິທະຍາສາດ ແລະ ຊ່ຽວຊານຕ່າງໆ ຈຳນວນ 10,000 ທ່ານ ປະກອບຢູ່ໃນ 6 ຄະນະກຳມະທິການ ຈາກ 181 ປະເທດ ເຂົ້າມາເປັນຄູ່ຮ່ວມງານ ທີ່ມີເອກະລັກສະເພາະ ໃນທົ່ວໂລກ. ກອງເລຂາຂອງ ອົງການ IUCN ປະກອບມີພະນັກງານຫລາຍກ່ວາ 1,000 ຄົນ ຢູ່ໃນສຳນັກງານຕ່າງໆ ໃນ 42 ປະເທດໃນ ທົ່ວໂລກ.

ໃນປີ 1969, ກະຊວງການຕ່າງປະເທດຂອງ ລັດທະບານ ລາວ ໄດ້ເປັນສະມາຊິກ ພາກລັດຂອງອົງການ IUCN ແລະ ໃນປີ 1992 ຫ້ອງການຂອງອົງການ IUCN ລາວ ໄດ້ຖືກສ້າງຕັ້ງຂຶ້ນ. ນັບແຕ່ນັ້ນມາ ຫ້ອງການ ໄດ້ນຳໃຊ້ປະສົບການ ໃນປະເທດ ແລະ ເຄືອຂ່າຍລະດັບໂລກ ເພື່ອໃຫ້ການສະໜັບສະໜູນ ດ້ານຄວາມຮູ້ ແລະ ວິຊາການທີ່ສຳຄັນ ໃຫ້ແກ່ລັດຖະບານກ່ຽວກັບ ບັນຫາການອະນຸລັກ ແລະ ການດຳລົງຊີວິດ.

# ແຜນງານຍຸດທະສາດ 2007- 2011

## ການອະນຸລັກຊັບເພື່ອການກດຳລົງຊີວິດບງບຍືນຍົງ

## ຢູ່ ສ.ປ.ປ ລາວ

ກົມໄກການປົກຄອງບໍລິຫານ, ປ່າສະຫງວນ, ຊີວະນາໆພັນກະສິກຳ, ນ້ຳ ແລະ ນ້ຳ (ແຫຼ່ງນ້ຳ)
ວິທີການຂອງອົງການ IUCN –ເພື່ອການດຳລົງຊີວິດ ແລະ ລະບົບນິເວດວິທະຍາ

ການສະເໜີສະຖານທີ່ທາງພູມີປະເທດໃນປຶ້ມຫົວນີ້ ແລະ ການນໍາສະເໜີເນື້ອໃນຕ່າງໆ ແມ່ນບໍ່ໄດ້ໝາຍເຖິງ ສະເພາະ ແນວຄິດຂອງຜູ້ໃດນຶ່ງ ແຕ່ IUCN ມີຄວາມສົນໃຈ ກ່ຽວກັບສະພາບການ ທາງກົດໝາຍຂອງແຕ່ ລະປະເທດ, ຂອບເຂດອໍານາດອະທິປະໄຕ ຫຼື ພື້ນທີ່ນຶ່ງ, ຫຼື ການຈັດຕັ້ງບໍລິຫານໃດນຶ່ງ, ຫລື ຂອບເຂດຊາຍ ແດນຂອງປະເທດດັ່ງກ່າວນັ້ນ. ບັນດາແນວຄວາມຄິດທັດສະນະຕ່າງໆ ທີ່ສະແດງອອກໃນປຶ້ມຫົວນີ້ ກໍ່ບໍ່ ໝາຍຄວາມວ່າເປັນ ທັດສະນະຂອງອົງການ IUCN ຫລື ຂອງອົງການຈັດຕັ້ງ ທີ່ມີສ່ວນຮ່ວມ.

ຈັດພິມໂດຍ : IUCN ປະຈໍາລາວ

ລິຂະສິດ : 2006 ອົງການສາກົນ ເພື່ອການອະນຸລັກທໍາມະຊາດ ແລະ ຊັບພະຍາກອນທໍາມະ ຊາດ

ແປໂດຍ: ທ່ານ ນາງ ລັດສະໃໝ ສີລາວົງ, ທ່ານ Nathan Badenoch, ທ່ານ ພູວົງ, ທ່ານ ຄໍາເພັດ.

ຮູບພາບໜ້າປົກ : McWilliam, ຮູບພາບກ່ຽວເຂົ້າຢູ່ແຂວງຫລວງນໍ້າທາ ປີ 2006

ຜູ້ຮຽບຮຽງ: ທ່ານ Nathan Badenoch

ພິມໂດຍ : ບໍລິສັດ Studio Terra ຈໍາກັດ, ບາງກອກ, ປະເທດໄທ

ຕິດຕໍ່ໄດ້ທີ່ : ອົງການ IUCN Lao

082/01 ຖະໜົນຟ້າງຸ່ມ, ບ້ານວັດຈັນ

P. O. Box 4340, ວຽງຈັນ, ສປປ ລາວ

ໂທ : 856 (21) 216401, 222167, 219009

ໂທລະສານ : +856 (21) 216127

info@iucnlao.org

http://www.iucn.org/places/asia

## ການສະແດງຄວາມຂອບໃຈ

ອົງການອະນຸລັກຊັບພະຍາກອນທໍາມະຊາດສາກົນ (IUCN) ປະຈໍາລາວ ຂໍສະແດງຄວາມຮູ້ບຸນຄຸນນໍາ ຫລາຍໆ ທ່ານ ທີ່ໄດ້ປະກອບສ່ວນໃສ່ ເອກະສານແຜນງານສະບັບນີ້. ພວກເຮົາຂໍຂອບໃຈນໍາຄູ່ຮ່ວມງານຫລັກເຊັ່ນ: ກະ ຊວງການຕ່າງປະເທດ, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດ ລ້ອມ (ອວຕສ) ທີ່ໄດ້ປະກອບສ່ວນອັນໃຫ່ຍຫລວງ ໂດຍຜ່ານການປຶກສາຫາລື ແລະ ກອງປະຊຸມຢ່າງເປັນທາງ ການ ໃນໄລຍະປີຜ່ານມາ ແລະ ຂໍຂອບໃຈນໍາ IUCN Asia Regional Communications ໃນການສະໜັບ ສະໜູນ ດ້ານວິທີການ. ອົງການ IUCN ປະຈໍາລາວ ຢາກຂໍສະແດງ ຄວາມຂອບໃຈນໍາຜູ້ທີ່ມີສ່ວນຮ່ວມໃນຄວາມ ພະຍາຍາມ ແລະ ສະລະເວລາຂອງຕົນໃຫ້ແກ່ວຽກງານການພັດທະນາ ແລະ ອະນຸລັກ. ອົງການ IUCN ປະຈໍາ ລາວ. ຂໍສະແດງຄວາມຂອບໃຈນໍາອົງການ SIDA ໃນການສະໜັບສະໜູນທີ່ດີງາມ ແລະ ການຮ່ວມມືຢ່າງໃກ້ສິດ ໃນການພັດທະນາ ແລະ ທົບທວນຍຸດທະສາດ. ທ້າຍສຸດ ພວກເຮົາຢາກຂໍຂອບໃຈນໍາເຄືອຄ່າຍຂອງ ອົງການ IUCN, ໂດຍສະເພາະ ກຸ່ມປະເທດທີ 1 ທີ່ມີໜ້າທີ່ປະສານງານກັບ ແຜນງານ ສປປ ລາວ, ກໍາປູເຈຍ ແລະ ຫວຽດນາມ ລວມທັງຫ້ອງການປະຈໍາພາກພື້ນອາຊີຢູ່ບາງກອກສໍາລັບການຊ່ວຍເຫລືອໃນການກະກຽມ, ຂໍ້ແນະ ນໍາຕ່າງໆ ແລະ ການສະໜັບສະໜູນແຜນງານຍຸດທະສາດປະຈໍາ 5 ປີ

# ສາລະບານ

*ບົດນຳ* ..... *i*

*ບັນຊີຕົວອັກສອນຫຍໍ້* ..... *iii*

*ສະຫລຸບຫຍໍ້* ..... *iv*

*1. ພາກສະເໜີ* ..... *1*

*2. ແນວຄວາມຄິດໃໝ່ ຂອງ ອົງການ IUCN ປີ 2007- 2011* ..... *3*

2.1 ອົງການ IUCN ລາວ: ການອະນຸລັກເພື່ອການດຳລົງຊີວິດ ..... 4

2.2 ບົດຮຽນທີ່ໄດ້ຖອດຖອນມາໃນລະຫວ່າງປີ 20022006 ..... 4

2.3 ທົບທວນແນວຄວາມຄິດ ແລະ ວິທີທາງ ..... 5

*3. ແຜນງານໃຈກາງ ປີ 20072011 ຂອງອົງການ IUCN ລາວ* ..... *7*

*4. ກົນໄກການປົກຄອງ* ..... *10*

4.1 ເປັນຫຍັງຈິ່ງເລືອກຫົວຂໍ້ກົນໄກການປົກຄອງ? ບົກສູງຜົນໄດ້ຮັບ ຂອງວຽກງານ ການອະນຸລັກ ແລະ ການພັດທະນາ ..... 10

4.2 ກົນໄກການປົກຄອງໃນ ສປປ ລາວ: ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບົດບາດ ແລະ ໜ້າທີ່ຮັບຜິດຊອບ ລະຫວ່າງພາກສ່ວນຕ່າງໆ ..... 10

4.3 ອົງການ IUCN ລາວ ແລະ ກົນໄກການປົກຄອງ ..... 12

4.4 ການເປັນເພື່ອນຮ່ວມງານເພື່ອເສີມສ້າງການປົກຄອງ ..... 14

*5. ປ່າສະຫງວນ* ..... *18*

5.1 ເປັນຫຍັງຈິ່ງເລືອກຫົວຂໍ້ປ່າສະຫງວນ?: ການສ້າງຄວາມເຂັ້ມແຂງພື້ນຖານ ..... 18

5.2 ປ່າສະຫງວນຂອງ ສປປ ລາວ: ການຈັດປະເພດຄືນເພື່ອຫລາຍວັດຖຸປະສົງ ..... 18

ການຄຸ້ມຄອງປ່າສະຫງວນຂອງອົງການ IUCN ມີ 6 ປະເພດຄື: ..... 20

5.3 ອົງການ IUCN ລາວ ແລະ ແຜນງານປ່າສະຫງວນ ..... 20

5.4 ທິດທາງຍຸດທະສາດ ແລະ ຈຸດປະສົງຂອງວຽກງານປ່າສະຫງວນ ..... 21

5.5 ບັນດາຄູ່ຮ່ວມງານຫລັກ: ວຽກງານປ່າສະຫງວນ ..... 22

*6. ຊີວະນາໆພັນກະສິກຳ* ..... *23*

6.1 ເປັນຫຍັງຈິ່ງເລືອກຫົວຂໍ້ ຊີວະນາໆພັນກະສິກຳ? ຄວາມຫລາກຫລາຍດ້ານພືດພັນ ແລະ ລັກສະນະພູມສັນຖານສຳລັບດຳເນີນງານ ........ 23
6.2 ຊີວະນາໆພັນການກະສິກຳຂອງ ສປປ ລາວ: ຮາກຖານໃຫ້ແກ່ການດຳລົງຊີວິດ ແລະ ລະບົບນິເວດ ........ 23
6.3 ອົງການ IUCN ລາວ ແລະ ຊີວະນາໆພັນກະສິກຳ ........ 24
6.4 ແນວທາງຍຸດທະສາດ ແລະ ຈຸດປະສົງຂອງຊີວະນາໆພັນກະສິກຳ ........ 25
6.5 ຄູ່ຮ່ວມງານຫລັກ: ຊີວະນາໆພັນກະສິກຳ ........ 26
*7. ນ້ຳ, ດິນບໍລິເວນນ້ຳ ແລະ ແຫລ່ງນ້ຳ ........ 28*
7.1 ເປັນຫຍັງຈິ່ງເລືອກຫົວຂໍ້ນ້ຳ? ພື້ນຖານຂອງຈະເລີນຮຸ່ງເຮືອງ, ສຸກຂະພາບ ແລະ ຄວາມປອດໄພ... 28
7.2 ນ້ຳໃນ ສປປ ລາວ: ຮັບຮູ້ຄຸ້ນຄ່າຂອງຄວາມອຸດົມສົມບູນ, ຄວາມອຸດົມສົມບູນເຕັມໄປດ້ວຍຄຸ້ນຄ່າ. 28
7.3 ອົງການ IUCN ລາວ ແລະ ນ້ຳ ........ 30
7.4 ຈຸດປະສົງຂອງຫົວຂໍ້ນ້ຳ ແລະ ແນວທາງດ້ານຍຸດທະສາດ ........ 31
7.5. ຜູ້ຮ່ວມງານຫຼັກໃນວຽກງານນ້ຳ ........ 32
*8. ບັນຫາອື່ນໆທີ່ກຳລັງປະກົດຂຶ້ນມາ ........ 33*
8.1 ການປ່ຽນແປງຂອງສະພາບດິນຟ້າອາກາດ ........ 33
8.2 ບັນຫາສິ່ງແວດລ້ອມໃນຕົວເມືອງ ........ 34
8.3 ບັນຫາອື່ນໆ ........ 34
*ເອກະສານສະໜັບສະໜູນ ........ 35*
ເອກະສານຊ້ອນທ້າຍ 1: ປະຫວັດຄວາມເປັນມາ ແລະ ແຜນງານຍຸດທະສາດ ຂອງອົງການ IUCN ລາວ ........ 35
ເອກະສານຊ້ອນທ້າຍ 2: ອົງການ IUCN ປະຈຳພາກພື້ນອາຊີ ........ 37
ເອກະສານຊ້ອນທ້າຍ 3: ຂະບວນການວາງແຜນຍຸດທະສາດ 2007-2011 ........ 38
*ເອກະສານອ້າງອີງ ........ 41*

# ບົດນຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ເປັນປະເທດທີ່ມີຄວາມສວຍສົດງົດງາມ ດ້ວຍພູຜາ, ປ່າໄມ້, ທົ່ງນາ ແລະ ແມ່ນ້ຳ. ນັກທ່ອງທ່ຽວ ມາຢ້ຽມຢາມເຂດເພັດສີຂຽວນີ້ຂອງເຂດແມ່ນ້ຳຂອງ ຊຶ່ງມັກຈະໃຫ້ຄຳແນະນຳວ່າ ເປັນສະຖານທີ່ໆມີຄວາມງຽບສະຫງົບ, ໂດຍສະເພາະ ຖ້າສົມທຽບກັບປະເທດ ໃກ້ຄຽງ. ແຕ່ຕ້ອງຄຳນຶງວ່າແມ່ນຫຍັງຈະເກີດຂຶ້ນໃນອານາຄົດ? ດັ່ງທີ່ໄດ້ລະບຸໃນແຜນງານຍຸດທະສາດ, ສປປ ລາວ ເປັນປະເທດໜຶ່ງທີ່ນອນໃນໃຈກາງ ພາກພື້ນແມ່ນ້ຳຂອງ, ແລະ ມີຊາຍແດນຕິດພັນກັບ ປະເທດຕ່າງໆ ເຊັ່ນ: ປະເທດໄທ, ຫວຽດນາມ, ສປປ ຈີນ, ກຳປູເຈຍ ແລະ ພະມ້າ. ພ້ອມດຽວກັນນັ້ນ ເສດຖະກິດຂອງປະເທດ ໃນຂົງເຂດພາກພື້ນແມ່ນ້ຳຂອງ ກຳລັງເຕີບໃຫຍ່ຂະຫຍາຍຕົວ ແລະ ເປັນໄປ ໃນຮູບແບບປະສົມປະສານຫລາຍຂຶ້ນ, ສິ່ງດັ່ງກ່າວໄດ້ພັດທະນາຜ່ານ ສປປ ລາວ ເຊິ່ງຈະເຫັນໄດ້ ການເພີ້ມຂຶ້ນຂອງພາກສ່ວນເສດຖະກິດການຈຳນໜ່າຍ ແລະ ການຄ້າ.

ສປປ ລາວ ກຳລັງປະເຊີນໜ້າກັບການປ່ຽນແປງເສດຖະກິດໃນເຂດຊົນນະບົດຢ່າງວ່ອງໃວ, ໃນຂະນະດຽວກັນ ຍັງເປັນນຶ່ງໃນປະເທດທີ່ທຸກຍາກທີ່ສຸດ ໃນພາກຕາເວັນອອກສ່ຽງໃຕ້, ດ້ວຍອັດຕາ ການຂະຫຍາຍຕົວປະຈຳປີ ເກືອບຮອດ 7%. ສປປ ລາວ ໄດ້ທຸ້ມເທ ເພື່ອໃຫ້ບັນລຸໄດ້ຄາດໝາຍທີ່ວາງໄວ້ ສຳລັບເປົ້າໝາຍການພັດທະນາໃນສະຫະສະວັດ. ບາງເປົ້າໝາຍຫລັກສຳລັບ ຄວາມທຸກຍາກ ແລະ ສຸຂະພາບ ລວມມີ: ການຫລຸດຜ່ອນຄວາມທຸກຍາກ ແລະ ຄວາມອຶດຫິວໃຫ້ໄດ້ເຄິ່ງໜຶ່ງ, 98% ຂອງເດັກນ້ອຍທັງໝົດໃຫ້ໄດ້ເຂົ້າໂຮງຮຽນປະຖົມ, ແລະ ຫລຸດຜ່ອນອັດຕາການຕາຍ ຂອງເດັກນ້ອຍເກີດໃໝ່ ຈາກ 134/1000 ໃນປີ 1990 ຫາ 45/100 ໃນປີ 2015. ເປົ້າໝາຍສຳລັບຄວາມຍືນຍົງດ້ານສິ່ງແວດລ້ອມ (ເປົ້າໝາຍ 7) ສຳລັບປ່າໄມ້ ແລະ ຊີວະນາໆພັນ ແມ່ນຍັງໃນການພິຈາລະນາໂດຍລັດຖະບານ. ໃນຂະນະທີ່ ວຽກງານກະສິກຳ ຍັງສືບຕໍ່ເປັນຂະແໜງການຫລັກທາງດ້ານເສດຖະກິດ, ການກະສິກຳໂດຍອີງໃສ່ທຳມະຊາດໃນບາງບ່ອນແມ່ນກຳລັງປ່ຽນແປງຈາກທົ່ງນາຂະໜາດນ້ອຍ ເປັນປ່າປູກໄມ້ອຸດສະຫະກຳ ເຊັ່ນ ຢາງພາລາ, ໄມ້ຢູຄາລິບຕັດ ແລະ ຕົ້ນປາມ. ມີຫລາຍການລົງທຶນຂອງຕ່າງປະເທດ ໃນຂະແໜງການພະລັງງານໄຟຟ້າ ແລະ ການລົງທຶນບໍ່ແຮ່ ທີ່ກຳລັງຂະຫຍາຍຕົວຢ່າງວ່ອງໄວ. ສປປ ລາວ ໃນອານາຄົດ ຈະມີຄວາມແຕກຕ່າງ ຢ່າງຫລວງຫລາຍ ຈາກສະພາບໃນປະຈຸບັນ. ວິທີການໃດທີ່ຈະບັນລຸໄດ້ເປົ້າໝາຍການພັດທະນາ ສະຫະສະວັດ ແລະ ການຫັນປ່ຽນເສດຖະກິດຂອງປະເທດ, ໃນຂະນະທີ່ເວລາດຽວກັນ ເພື່ອຮັບປະກັນໃຫ້ໄດ້ວ່າ ຊັບພະຍາກອນທຳມະຊາດ ໄດ້ຖືກຄຸ້ມຄອງແບບຍືນຍົງ ແມ່ນສິ່ງທ້າທາຍທີ່ ສປປ ລາວ ກຳລັງປະເຊີນໜ້າ.

ເພື່ອຕອບຮັບກັບສິ່ງທ້າທາຍເຫຼົ່ານີ້, ອົງການ IUCN ລາວ ຈິ່ງໄດ້ກະກຽມແຜນງານຍຸດທະສາດ ປີ 2007 - 2011 ຂຶ້ນ. ແຜນງານຍຸດທະສາດ ເປັນການເສີມສ້າງຄວາມຮ່ວມມືຢ່າງໃກ້ສິດ ເພື່ອເປັນຄູ່ຮ່ວມງານໄລຍະຍາວ ລະຫວ່າງອົງການ IUCN ກັບ ສປປ ລາວ ທີ່ໄດ້ເລີ່ມຕົ້ນຂຶ້ນໃນປີ 1992 ຕັ້ງແຕ່ເລີ່ມຕົ້ນຫ້ອງການຂອງອົງການ IUCN ລາວ ຢູ່ວຽງຈັນ. ການເປັນຄູ່ຮ່ວມງານ ໄດ້ກ້າວເຂົ້າ ສູ່ໄລຍະໃໝ່ໃນປີ 2001 ເມື່ອເວລາແຜນງານຍຸດທະສາດ 5 ປີສຳລັບອົງການ IUCN ລາວ ທີ່ມີຊື່ວ່າ ການອະນຸລັກ ເພື່ອການດຳລົງຊີວິດແບບຍືນຍົງ ໄດ້ຖືກສ້າງຂຶ້ນ ແລະ ໄດ້ຮັບການຈັດຕັ້ງປະຕິບັດ ໂດຍຜ່ານຂະບວນການຮ່ວມມືກັບລັດຖະບານ. ມາຮອດປັດຈຸບັນ

ນີ້ ແຜນງານໃໝ່ເຊິ່ງແມ່ນ ການອະນຸລັກເພື່ອ ການດຳລົງຊີວິດ ແບບຍືນຍົງ  ຢູ່ສປປ ລາວ - ແນວຄວາມຄິດ ໃໝ່ ຈຶ່ງໄດ້ຖືກກະກຽມຂຶ້ນ.

ຜ່ານຂະບວນການປຶກສາຫາຫລື ແລະ ການຈັດກອງປະຊຸມຮ່ວມກັນກັບລັດຖະບານ, ອົງການຈັດຕັ້ງສາ ກົນບໍ່ສັງກັດລັດຖະບານ, ອົງການຈັດຕັ້ງສາກົນ ແລະ ສະຖາບັນຕ່າງໆຂອງນາໆຊາດ, ຍຸດທະສາດປະ ຈຸບັນ ສະທ້ອນໃຫ້ເຫັນເຖິງ ພັນທະທີ່ມີຢ່າງຕໍ່ເນື່ອງ ເພື່ອການເປັນຄູ່ຮ່ວມງານ, ການສ້າງຂີດຄວາມສາ ມາດ, ການປຶກສາຫາລື, ຂະບວນການມີສ່ວນຮ່ວມ ແລະ ການປະສົມປະສານ ລະຫວ່າງຈຸດປະສົງການ ອະນຸລັກ ແລະ ການພັດທະນາເຂົ້າກັນ. ຍຸດທະສາດອັນໃໝ່ນີ້ ຮຽກຮ້ອງໃຫ້ພວກເຮົາ ເພື່ອທົບທວນແນວ ຄວາມຄິດ ຂອງພວກເຮົາຄືນ ເພື່ອແກ້ໄຂຄວາມກົດດັນ ຕໍ່ດ້ານສິ່ງແວດລ້ອມ ແລະ ເສດຖະກິດທີ່ກຳລັງ ປະກົດຂຶ້ນຢ່າງຈິງຈັງ. ອົງການ IUCN ມີຄວາມຍິນດີ ຮັບເອົາກາລະໂອກາດ ເພື່ອສືບຕໍ່ເຮັດວຽກເປັນເພື່ອນ ຮ່ວມງານກັບປະຊາຊົນລາວບັນດາເຜົ່າ ແລະ ລັດຖະບານຂອງ ສປປ ລາວ ເພື່ອກຳນົດວິທີທາງອັນໃໝ່ ເຊິ່ງແມ່ນແນວຄວາມຄິດໃໝ່ “Refreshed”  ທີ່ຈະສະໜັບສະໜູນ ການພັດທະນາແບບຍືນຍົງໂດຍການ ປະສົມປະສານຈຸດປະສົງຂອງວຽກງານສິ່ງແວດລ້ອມ ແລະ ເສດຖະກິດເຂົ້າກັນ

ຂ້າພະເຈົ້າມີຄວາມດີອົກດີໃຈ ນຳທິດທາງຂອງແຜນງານໃນ ສປປ ລາວ ຂອງພວກເຮົາ ທີ່ກຳລັງກ້າວໄປ, ສືບຕໍ່ດຳເນີນງານກັບຄູ່ຮ່ວມງານ ລັດຖະບານຢ່າງແຂງແຮງ ແລະ ກັບຄູ່ຮ່ວມງານໃໝ່ ກຳລັງສ້າງຂຶ້ນ ສຳ ລັບໃນອານາຄົດ. ອົງການ IUCN ຈະສືບຕໍ່ພັນທະຂອງຕົນ ເພື່ອຊ່ວຍເຫລືອ ສປປ ລາວ  ໃນການອະນຸ ລັກຊັບພະຍາກອນທຳມະຊາດໄວ້ເພື່ອຄົນລຸ້ນຕໍ່ໜ້າ ເພື່ອນຳເອົາຜົນປະໂຫຍດຕ່າງໆ ໃຫ້ແກ່ປະຊາຊົນ ທີ່ດຳລົງຊີວິດຢູ່ທ່າມກາງຄວາມທຸກຍາກໃນປັດຈຸບັນນີ້

# ບັນຊີຕົວອັກສອນຫຍໍ້

| | |
|---|---|
| CBD | Convention on Biological Diversity |
| CEDS | Centre for Environment and Development Studies |
| CITES | Convention on the International Trade of Endangered Species |
| COPs | Conventions of the Parties |
| CPI | Committee for Planning and Investment |
| DoE | Department of Environment |
| DoF | Department of Forestry |
| EPF | Environment Protection Fund |
| ERI | Environment Research Institute |
| FoF | Faculty of Forestry |
| FoS | Faculty of Science |
| FS2020 | Forestry Strategy to the Year 2020 of Lao PDR |
| GoL | Government of Lao PDR |
| KEG | Knowledge, empowerment and governance |
| LAA | Land Allocation Authority |
| Lao PDR | Lao Peoples' Democratic Republic |
| LAREC | Living Aquatic Resource and Research Centre |
| LNCCI | Lao Chamber of Commerce and Industry |
| LNMC | Lao National Mekong Commission |
| MAF | Ministry of Agriculture and Forestry |
| MEA | Multinational Environment Agreements |
| MoIC | Ministry of Commerce and Industry |
| NAFRI | National Agriculture and Forestry Research Institute |
| NBS | National Biodiversity Strategy to 2020 and Action Plan to 2010 |
| NEC | National Environment Committee |
| NGPES | National Growth and Poverty Eradication Strategy 2020 |
| NPA | National Protected Areas |
| NTA | National Tourism Administration |
| NTFPs | Non-timber forest products |
| NUoL | National University of Lao PDR |
| PROFOR | Program on Forests |
| Ramsar | Convention on Wetlands |
| STEA | Science, Technology and Environment Agency |
| UNFCCC | United Nations Framework Convention on Climate Change |
| WCS | Wildlife Conservation Society |
| WRCC | Water Resources Coordination Committee |
| WWF | World Wildlife Fund for Nature |
| WWRP | Water and Water Resources Policy |

# ສະຫລຸບຫຍໍ້

ໃນ 15 ປີຜ່ານມາ ຕັ້ງແຕ່ ຫ້ອງການຂອງອົງການ IUCN ຢູ່ ສປປ ລາວ ໄດ້ຖືກສ້າງຕັ້ງຂຶ້ນ, ໄດ້ມີຄວາມຄືບໜ້າຫລາຍອັນເກີດຂຶ້ນ ໃນການສ້າງພື້ນຖານຄວາມຮູ້, ວິຊາການ ແລະ ສະຖາບັນ ໃຫ້ເຂັ້ມແຂງ ສຳລັບ ວຽກງານອະນຸລັກ ຊັບພະຍາກອນທຳມະຊາດ ແລະ ຄວາມຫລາກຫລາຍ ທາງດ້ານຊີວະນາໆພັນ ຂອງ ສປປ ລາວ. ເຖິງຢ່າງໃດກໍ່ຕາມ, ການອະນຸລັກຊັບສິນທາງທຳມະຊາດຂອງ ສປປ ລາວ ຍັງເປັນບຸລິມະສິດທີ່ສຳຄັນຂອງຊາດ. ໃນທ້າຍປີ 2001- 2006 ຂອງການສ້າງແຜນງານຂອງ ອົງການ IUCN ລາວ ເຊິ່ງເປັນໂອກາດດີ ເພື່ອຕີລາຄາຄືນ ແຜນງານຍຸດທະສາດຂອງ ອົງການ IUCN ລາວ ໃນການສະໜັບສະໜູນ ບຸລິມະສິດດັ່ງກ່າວ ເຊິ່ງມີການປະສານສົມທົບເອົາແນວຄວາມຄິດ, ເຄື່ອງມື ແລະ ວິທີການໃໝ່ ທີ່ໄດ້ເກັບກຳມາຈາກ ປະສົບການເຮັດວຽກຢູ່ໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ລະດັບໂລກ.

ໃນປີ 2006, ອົງການ IUCN ລາວ ໄດ້ດຳເນີນ ຂະບວນການວາງແຜນຍຸດທະສາດ ເຊິ່ງປະກອບດ້ວຍ ຂະບວນການວາງແຜນພາຍໃນທີ່ສຳຄັນ ແລະ ການປຶກສາຫາລື ກັບບັນດາຜູ້ຮວ່ມງານ ແລະ ຜູ້ມີສ່ວນຮ່ວມ ພາຍນອກ. ແນວຄິດໃໝ່ຂອງແຜນງານປີ 2007 - 2011 ໄດ້ສ້າງຂຶ້ນ ອີງໃສ່ຫລັກການພື້ນຖານ 3 ອັນຄື: 1) ການຮ່ວມງານໄລຍະຍາວ; 2) ຄວາມຮູ້, ໃຫ້ສິດອຳນາດ ແລະ ກົນໄກການປົກຄອງ ແລະ 3) ການຕອບຮັບ. ຜ່ານຂະບວນການດັ່ງກ່າວນີ້, ອົງການ IUCN ລາວ ໄດ້ພັດທະນາກອບທິດທາງ ທີ່ຈະແຈ້ງ ເພື່ອປະເຊີນກັບ ສິ່ງທ້າທາຍທີ່ສຳຄັນຕ່າງໆ ເຊິ່ງລວມມີ: ການປະເມີນລາຄາຊັບພະຍາກອນຕ່ຳ, ການເພີ້ມຄວາມກົດດັນ ຕໍ່ກັບຊັບພະຍາກອນເຫລົ່ານີ້ ແລະ ໂຄງສ້າງກົນໄກການປົກຄອງ ທີ່ບໍ່ທັນພຽງພໍ ເພື່ອດຳເນີນ ກັບສິ່ງທ້າທາຍຕ່າງໆ ທີ່ກຳລັງເກີດຂຶ້ນ ຢ່າງມີປະສິດຕິຜົນ ແລະ ໃຫ້ການສະໜັບສະໜູນ ອັນທີ່ຈຳເປັນ ແກ່ຄູ່ ຮ່ວມງານຝ່າຍ ສປປ ລາວ. ຍຸດທະສາດປີ 2007 - 2011 ໄດ້ປະກອບມີ 4 ຫົວຂໍ້ແຜນງານໃຫ່ຍ ໂດຍນຳໃຊ້ ວິທີທາງ ການອະນຸລັກເພື່ອການດຳລົງຊີວິດ, ທີ່ມີພັນທະຕໍ່ປະຊາຊົນທີ່ທຸກຍາກທີ່ສຸດ ທີ່ອາໃສຢູ່ໃນສັງຄົມ ແລະ ລະບົບນິເວດ ທີ່ພວກເຂົາເພິ່ງພາອາໃສຢູ່.

1. ຫົວຂໍ້ກົນໄກການປົກຄອງ, ນອນຢູ່ໃຈກາງຂອງແຜນງານ, ສະແດງໃຫ້ເຫັນຄວາມພະຍາຍາມທີ່ສືບເນື່ອງເພື່ອເສີມສ້າງຂີດຄວາມສາມາດ ໃຫ້ແກ່ບັນດາສະຖາບັນຂອງ ສປປ ລາວ ຢູ່ຫລາຍລະດັບ ແລະ ກັບພາກສ່ວນທີ່ມີສ່ວນຮ່ວມຕ່າງໆ ເພື່ອບັນລຸເປົ້າໝາຍ ການພັດທະນາ ແລະ ການອະນຸລັກຂອງຊາດ.ວຽກງານຫລັກ ຂອງຫົວຂໍ້ກົນໄກການປົກຄອງ ລວມມີ ພັນທະ ຕໍ່ຂະບວນການຕັດສິນໃຈໃນການແບ່ງຂັ້ນຄຸ້ມຄອງ,ວິທີການທີ່ປະສົມປະສານ ແລະ ການຕັດສິນໃຈທີ່ມີຄວາມຮັບຜິດຊອບ ແລະ ມີສ່ວນຮ່ວມ.

2. ຫົວຂໍ້ປ່າສະຫງວນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນປ່າສະຫງວນ ແມ່ນມີຄວາມສຳຄັນຕໍ່ກັບການດຳລົງຊີວິດ ແລະ ການພັດທະນາ. ໂດຍການປັບປຸງທິດທາງ ໃນການຄຸ້ມຄອງປ່າສະຫງວນ, ອົງການ IUCN ລາວ ຈະຊ່ວຍໃນການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບລະບົບ ປ່າສະຫງວນແຫ່ງຊາດຂອງ ສປປ ລາວ ໂດຍນຳໃຊ້ ການຈັດປະເພດ ປ່າສະຫງວນຂອງອົງການ IUCN ແລະ ພະຍາຍາມເພີ່ມທະວີປະສິດຕິພາບ ໃນການຄຸ້ມຄອງ, ປັບປຸງວຽກງານອະນຸລັກ ໃນລະດັບຄວາມເປັນຈິງທີ່ປະຕິ

ບັດໄດ້ ແລະ ຈະປະກອບສ່ວນເຂົ້າ ໃນການລຶບລ້າງຄວາມທຸກຍາກ ໃນລະດັບຊຸມຊົນ ດ້ວຍວິທີການທີ່ເໝາະສົມ ກັບຄວາມສາມາດທີ່ມີແລ້ວ

3. ຫົວຂໍ້ຊີວະນາໆພັນກະສິກຳ ແມ່ນຄວາມຫລາກຫລາຍຂອງ ສິ່ງທີ່ມີຊີວິດ ຊຶ່ງປະກອບສ່ວນເຂົ້າ ໃນຄວາມຍືນຍົງຂອງ ຊັບພະຍາກອນສະບຽງອາຫານ ແລະ ການກະສິກຳ ເຊິ່ງຊີວິດການເປັນຢູ່ ຂອງທ້ອງຖິ່ນ ຂຶ້ນກັບຢ່າງຫລວງຫລາຍ. ອົງການ IUCN ລາວ ໄດ້ທຸ້ມເທເຂົ້າ ໃນການເພີ່ມຄວາມຮູ້, ທົດລອງການນຳໃຊ້ທີ່ຊານສະຫລາດ, ແລະ ດຳເນີນຂະບວນການວາງແຜນ ຮ່ວມກັບສະຖາບັນ ຫລາຍລະດັບໃນຂົງເຂດກິດຈະກາ ວຽກງານເຄື່ອງປ່າຂອງດົງ, ການປູກຝັງ ແລະ ກິດຈະກຳຕ່າງໆ ໃນລະດັບພື້ນທີ່

4. ຫົວຂໍ້ນ້ຳ: (ນ້ຳ, ດິນບໍລິເວນນ້ຳ ແລະ ແຫລ່ງນ້ຳ) ນອກຈາກຄຸນລັກສະນະຂອງນ້ຳ ແລະ ການ ໃຊ້ທີ່ຫລາກຫລາຍແລ້ວ, ກິດຈະກຳນ້ຳຕ່າງໆ ແມ່ນມີກອບກວມລວມ ແນໃສ່ແຫລ່ງນ້ຳ ແລະ ພື້ນ ທີ່ດິນຊຸ່ມ ແລະ ຊັບພະຍາກອນທຳມະຊາດຕ່າງໆທີ່ກ່ຽວພັນ. ໂດຍການນຳໃຊ້ຄວາມສາມາດ ແລະ ຖານະເປັນອົງການຢູ່ສາຍກາງ ທີ່ເຕົ້າໂຮມເອົາພາກສ່ວນຕ່າງໆ ມາປຶກສາຫາລື, ອົງການ IUCN ລາວຈະສືບຕໍ່ວຽກງານກ່ຽວກັບນ້ຳ ຂອງຕົນໂດຍ ການເຕົ້າໂຮມເອົາພາກສ່ວນທີ່ກ່ຽວຂ້ອງທັງຫລາຍ ມາຮ່ວມກັນປຶກສາຫາລື ເພື່ອປັບປຸງຄວາມເຂົ້າໃຈ ກ່ຽວກັບຊັບພະຍາກອນນີ້, ຈະຊ່ວຍປັບປຸງກົນໄກ ການປົກຄອງໃຫ້ມີປະສິດຕິຜົນ ແລະ ປູກຈິດສຳນຶກ ກ່ຽວກັບຄວາມກົດດັນທີ່ເກີດຂຶ້ນ ຕໍ່ກັບຊັບພະ ຍາກອນແຫລ່ງນ້ຳຂອງ ສປປ ລາວ.

# 1. ພາກສະເໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ມີພູມສັນຖານຕັ້ງຢູ່ໃຈກາງ ຂອງອາຊີ ຕາເວັນອອກສຽງໃຕ້, ມີຊາຍແດນຕິດກັບປະເທດຈີນ, ໄທ, ພະມ້າ, ກຳປູເຈັຍ ແລະ ຫວຽດນາມ. ຊັບພະຍາ ກອນທຳມະຊາດຂອງ ສປປ ລາວ, ທີ່ຍັງບໍ່ທັນໄດ້ຮັບການຂຸດຄົ້ນ ຖ້າສົມທຽບໃສ່ທັງ ພົນລະເມືອງທີ່ມີຂະ ໜາດນ້ອຍປະມານ 6.5 ລ້ານຄົນ ແລະ ເປັນ "ຂຸມຊັບ" ທີ່ບໍ່ທັນຖືກຄົ້ນພົບຢູ່ໃນພາກພື້ນ ຕາມຕຳນານຂອງ ສປປ ລາວ.

ມີຄວາມເຂົ້າໃຈໂດຍທົ່ວໄປວ່າ ສປປລາວ ເປັນປະເທດທີ່ຢູ່ໂດດດ່ຽວ, ແລະໃນປະຈຸບັນ ໄດ້ເລີ່ມຕົ້ນ ພິຈາລະນາຕົນເອງ ວ່າເປັນປະເທດທີ່ມີແຜນດິນເຊື່ອມຕໍ່ ແທນຄວາມເຂົ້າໃຈວ່າເປັນ ປະເທດທີ່ບໍ່ມີ ຊາຍແດນຕິດກັບທະເລ. ສປປລາວ ກຳລັງສ້າງການປະສານສົມທົບ ແລະ ການຮ່ວມມື ໃນພາກພື້ນ ອາຊີຕາເວັນອອກສຽງໃຕ້. ສິ່ງດັ່ງກ່າວໝາຍເຖິງ ສິ່ງທ້າທາຍຕ່າງໆ ຕໍ່ກັບຄວາມສາມາດຂອງ ລັດຖະບານ ສປປ ລາວ (GoL) ໃນການຄຸ້ມຄອງ ມໍລະດົກທາງທຳມະຊາດ ແລະ ສົ່ງເສີມການດຳລົງຊີວິດ ຂອງປະຊາຊົນໃຫ້ດີຂື້ນ. ແຕ່ວ່າ ລັດຖະບານ ສປປ ລາວ ປະຕິບັດໄດ້ໝາກຜົນຢ່າງໜ້າສັນລະເສີນ ໃນການປັບປຸງການຈັດຕັ້ງ ໃນລະດັບຊາດໂດຍລວມ ເພື່ອການອະນຸລັກ ແລະ ການພັດທະນາ. ນອກຈາກ ການສ້າງສະຖາບັນກ່ຽວກັບ ນະໂຍບາຍ ແລະ ກົດໝາຍ ດ້ານສະພາບແວດລ້ອມແລ້ວ, ລັດຖະບານ ຍັງໄດ້ດຳເນີນຢ່າງຈິງຈັງ ກ່ຽວກັບພັນທະ ແລະ ໂອກາດ ພາຍໃຕ້ ຂໍ້ຕົກລົງສາກົນ ສະພາບແວດລ້ອມ ທີ່ຕົນໄດ້ເປັນພາຄີ.

ໃນດ້ານສະພາບແວດລ້ອມທາງທຳມະຊາດ, ສປປລາວ ຖືເປັນໝາກຫົວໃຈ ໃນພາກພື້ນ ທາງດ້ານ ຄວາມຫລາກຫລາຍ ທາງດ້ານຊີວະນາໆພັນ, ການປົກຄຸມຂອງປ່າໄມ້ ແລະ ຊັບພະຍາກອນແຫລ່ງນ້ຳ. ພື້ນຖານດ້ານສະພາບແວດລ້ອມຂອງ ສປປ ລາວ ສິ່ງດັ່ງກ່າວໄດ້ສະແດງໃຫ້ເຫັນ ຄຸນຄ່າມໍລະດົກ ທາງດ້ານເສດຖະກິດ, ວັດທະນາທຳ ແລະ ທຳມະຊາດທີ່ສຳຄັນ ໃນລະດັບໂລກ ແລະ ລະດັບພາກພື້ນ. ພື້ນຖານດ້ານຊັບ ພະຍາກອນທຳມະຊາດ ຈະສືບຕໍ່ເປັນກະດູກສັນຫລັງ ຂອງເສດຖະກິດຂອງສປປ ລາວ ໃນອານາຄົດອັນໃກ້ນີ້ ແລະ, ມັນຈະເຮັດໃຫ້ມີ ການພັດທະນາດ້ານເສດຖະກິດ ຢ່າງໜັກໜ່ວງ ຕໍ່ກັບຄວາມສົມບູນ ຂອງລະບົບນິເວດ ໃນ ສປປ ລາວ.

ປະຈຸບັນນີ້ ສປປ ລາວ ແມ່ນໜຶ່ງໃນປະເທດ ທີມີລະດັບຄວາມທຸກຍາກ ສູງທີ່ສຸດໃນໂລກ ແລະ ເປັນຕົວຢ່າງປະເທດທີ່ປະຊາຊົນອາໃສ ຊັບພະຍາກອນທຳມະຊາດ ແລະ ຄວາມຫລາກຫລາຍຂອງຊີວະນາໆພັນ ຢ່າງມະຫາສານ ເພື່ອການດຳລົງຊີວິດ, ເຊັ່ນ: ປາ ແລະ ຊັບພະຍາກອນຈາກແລ່ງນ້ຳຕ່າງໆ ທີ່ກວມເອົາຮອດ 90% ຂອງສະບຽງອາຫານຂອງທ້ອງຖິ່ນ, ແລະ ອີງໃສ່ຜະລິດຕະພັນເຄື່ອງປ່າຂອງດົງ (NTFPs) ຄາດວ່າມີເຖິງ 30% ຂອງພະລິດຕະພັນລວມຍອດຂອງປະເທດ.

ໃນປີ 2001, ອົງການອະນຸລັກຊັບພະຍາກອນທຳມະຊາດສາກົນ ປະຈຳ ລາວ ໄດ້ດຳເນີນ ວຽກງານອະນຸລັກທີ່ມີທິດທາງຍຸດທະສາດເພື່ອ ການດຳລົງຊີວິດແບບຍືນຍົງ ໂດຍມີການຮ່ວມມື ກັບຜູ້ມີສ່ວນໄດ້ສ່ວນເສຍ ຢູ່ທ້ອງຖິ່ນ ໂດຍມີຈຸດປະສົງ ເພື່ອບັນລຸໃຫ້ໄດ້ ວຽກງານພັດທະນາຢູ່ ສປປລາວ ໃຫ້ມີຄວາມສະເໝີພາບ ທາງດ້ານສັງຄົມ ແລະ ຄວາມຍືນຍົງ ທາງດ້ານນິເວດວິທະຍາ. ອົງການ IUCN ລາວ ໄດ້ຜັນຂະຫຍາຍແນວຄິດ

ອັນໃໝ່ນີ້ ລວມທັງ: ຂົງເຂດວຽກງານຫລັກ, ການຮ່ວມງານທີ່ມີການຮວ່ມມື, ການສ້າງ ຄວາມເຂັ້ມແຂງໃຫ້ ສະຖາບັນ ແລະ ການຊີ້ສານແນວຄິດຕ່າງໆ ແລະ ເອກະສານວາງແຜນຍຸດທະສາດ ປັດຈຸບັນສຳລັບ ປີ 2007-2011. ເອກະສານນີ້ ແມ່ນໝາກຜົນໄດ້ຮັບ ຈາກການທົບທວນ - ວິເຄາະອັນສຳຄັນຂອງ ວຽກງານອົງການ IUCN ລາວ ທີ່ຜ່ານມາ, ການປຶກສາຫາລື ຢ່າງເອົາຈິງເອົາຈັງ ລວມທັງຄູ່ຮ່ວມງານໃໝ່ ແລະ ໃນປະຈຸບັນ ແລະ ການຄຳນຶງເຖິງ ການສົມທຽບຂົງເຂດວຽກງານ ຂອງອົງການ IUCN ວ່າເປັນອົງການທີ່ມີເຄືອຄ່າຍລະດັບທ້ອງ ຖິ່ນ, ພາກພື້ນ ແລະ ສາກົນ.

ລັດຖະບານລາວ ສືບຕໍ່ສະແດງການສະໜັບສະໜູນ ແຜນງານຂອງອົງການ ແລະ ຫວັງວ່າເອກະ ສານດັ່ງກ່າວ ນີ້ ຈະສະໜອງພື້ນຖານ ເພື່ອການປຶກສາຫາລືກັບ ຄູ່ຮ່ວມງານ ແລະ ຜູ້ມີສ່ວນໄດ້ສ່ວນເສຍ ແລະ ເປັນຈຸດອ້າງ ອີງ ເພື່ອການຮ່ວມມື ໃນຫ້າປີຕໍ່ໜ້າທີ່ຈະມາເຖິງນີ້. ໃນເວລາດຽວກັນນີ້, ເອກະສານ ດັ່ງກ່າວ ຈະໃຫ້ທິດທາງ ເພື່ອປະຕິບັດກິດຈະກຳການວາງແຜນ ແລະ ການຕິດຕາມ ຂອງອົງການ IUCN Lao ຢູ່ພາຍໃນ.

# 2. ແນວຄວາມຄິດໃໝ່ ຂອງ ອົງການ IUCN ປີ 2007- 2011

ອົງການ IUCN ລາວ ຈັດຢູ່ໃນ ກຸ່ມປະເທດທີ່ 1 (Country Group 1). ກຸ່ມປະເທດທີ່ 1 ແມ່ນໜ່ວຍ ງານປະຕິບັດງານຂອງອົງການ IUCN ຢູ່ພາກພື້ນອາຊີ, ຢູ່ພາຍໃຕ້ທິດຊີ້ນໍາຂອງ ສໍານັກງານໃຫຍ່ ອົງການ IUCN ລະດັບໂລກ (ເບິ່ງຂໍ້ມູນເບື້ອງຫລັງຄວາມເປັນມາ ອ່ານເພີ່ມເຕີມໄດ້ຢູ່ທີ່ເອກະສານຕິດຄັດ 1). ດັ່ງນັ້ນ, ວຽກງານຂອງອົງການ IUCN ລາວ ແມ່ນສະໜັບສະໜູນ ແລະ ປະກອບສ່ວນໃຫ້ ພາລະກິດຂອງອົງການ IUCN ສາກົນ ເພື່ອ:

> *ເພື່ອສະທ້ອນ, ຊຸກຍູ້ ແລະ ຊ່ວຍເຫລືອປະຊາຄົມ ໃນທົ່ວໂລກ ໃນການອະນຸລັກ ຄວາມສົມບູນອັນຄົບຖ້ວນ ແລະ ຄວາມຫລາກຫລາຍຂອງທໍາມະຊາດ ໃຫ້ມີຄວາມສະເໝີພາບ ແລະ ມີຄວາມຍືນຍົງທາງດ້ານລະບົບນິເວດ.*

ແນວຄິດໃໝ່ ຂອງອົງການ IUCN ລາວ ຢືນຢັນພັນທະ ເພື່ອບັນລຸເປົ້າໝາຍ ຂອງການສ້າງແຜນງານ ທີ່ກວມລວມ ຄື:

> *ເພື່ອຮັບປະກັນວ່າລະບົບນິເວດ ແລະ ຊັບພະຍາກອນທໍາມະຊາດຂອງ ສປປ ລາວ ໄດ້ຖືກອະນຸລັກ ແລະນໍາໃຊ້ຢ່າງມີປະສິດຕິຜົນ ສະເໝີພາບ ແລະ ຍືນຍົງ ເພື່ອປະກອບສ່ວນເຂົ້າໃນການພັດ ທະນາເສດທະກິດສັງຄົມຂອງຊາດ.*

'ທົບທວນແນວຄິດ"(Refreshed thinking)" ນີ້ໄດ້ໃຫ້ທິດຊີ້ນໍາ ທີ່ເປັນທິດທາງຍຸດທະສາດ ຂອງອົງການ IUCN ໃນປີ 2007-2011. ມັນສະທ້ອນເຖິງຄວາມເຂົ້າໃຈ ກ່ຽວກັບບົດບາດ ແລະ ວິໄສທັດຂອງອົງການ IUCN ລາວ ໃນອາດີດເພື່ອອານາດຄົດ. ແນວຄິດທີ່ກ່າວມານີ້ແມ່ນ:

- ກ່ຽວຂ້ອງກັບ ການປັບປຸງພັນທະ ຂອງອົງການ IUCN ລາວ ໃໝ່ ຕໍ່ກັບການດໍາລົງຊີວິດ ແລະ ແນວຄວາມຄິດການອະນຸລັກເພື່ອ ການດໍາລົງຊີດວິດ;
- ກ່ຽວຂ້ອງກັບການຮັບຮູ້ ແລະ ສ້າງບົດຮຽນປະສົບການ ຂອງອົງການ IUCN ໃນການຊ່ວຍເຫລືອ ສປປ ລາວ ໃນເປົ້າໝາຍວຽກງານ ການອະນຸລັກ ແລະ
- ກ່ຽວຂ້ອງກັບການຕີລາຄາຄືນ ແລະ ການທັນທິດໃຫ້ທັນກັບສະພາບການວ່າ ອົງການ IUCN ລາວ ຈະປະຕິບັດວຽກງານແນວໃດ ເພື່ອຕອບສະໜອງໃຫ້ແທດເໝາະ ກັບວິໃສທັດທີ່ວ່າ ຊັບພະຍາກອນ ທໍາມະຊາດ ໄດ້ເພີ້ມຄວາມເຂົ້າໃຈ, ຮັບຮູ້ຄຸນຄ່າ ແລະ ຖືກຄຸ້ມຄອງເປັນຢ່າງດີ ເພື່ອບັນລຸ ຄວາມເປັນໄປໄດ້ ໃນການປັບປຸງການດໍາລົງຊີວິດ ຂອງປະຊາຊົນລາວທັງໝົດ ຢ່າງມີ ຄວາມສະເໝີພາບ.

## 2.1 ອົງການ IUCN ລາວ: ການອະນຸລັກເພື່ອການດຳລົງຊີວິດ

ຈຸດສຳຄັນຂອງແນວຄິດໃໝ່ຂອງ ອົງການ IUCN ລາວ ແມ່ນການອະນຸລັກ ເພື່ອວິທີທາງການດຳລົງຊີວິດ - ດ້ວຍຄວາມເປັນຫ່ວງຕໍ່ ກຸ່ມຄົນທີ່ທຸກຍາກທີ່ສຸດໃນສັງຄົມ ...

> *ໂດຍສະເພາະຜ່ານການຫລຸດຜ່ອນຜົນກະທົບທາງລົບ ໃຫ້ໜ້ອຍທີ່ສຸດ ຂອງການອະນຸລັກ ຕໍ່ກັບ ກັບປະຊາຊົນທີ່ທຸກຍາກ ແລະ ຫລຸດຜ່ອນສະພາບ ຄວາມທຸກຍາກ ຜ່ານການອະນຸລັກ ແລະ ນຳໃຊ້ລະບົບນິເວດ ຢ່າງມີຄວາມສະເໝີພາບ ແລະ ຍືນຍົງ (IUCN Asia 2004)*

ໃນປີ 2002, ແຜນຍຸດທະສາດ 5 ປີຂອງ ອົງການ IUCN ລາວ ການອະນຸລັກ ເພື່ອການດຳລົງ ຊີວິດແບບ ຍືນຍົງ ໄດ້ສະເໜີການປ່ຽນແປງ ໃນແນວຄວາມຄິດ ໂດຍການລວມເອົາທິດທາງ ການດຳລົງຊີວິດ ເຂົ້າໃນ ວຽກງານການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ບົດບາດການອະນຸລັກ ທີ່ຕອບສະໜອງ ໃຫ້ແກ່ ປະຊາຊົນ. ທິດທາງການພັດທະນາແຜນງານຂອງອົງການ IUCN ລາວ ແມ່ນຂະບວນການວິວັດທີ່ ສຳຄັນ ໂດຍປະສານງານກັບ ແຜນງານໂຄງການພາກພື້ນ ແລະ ໂລກ. ວຽກງານ ຂອງອົງການ IUCN ລາວ ໃນ 5 ປີຕໍ່ໜ້າ ຈະເສີມສ້າງວຽກງານນີ້, ສືບຕໍ່ຜັນຂະຫຍາຍແນວຄວາມຄິດ ເຂົ້າໃສ່ນະໂຍບາຍ ແລະ ການ ຈັດຕັ້ງປະຕິບັດ.

## 2.2 ບົດຮຽນທີ່ໄດ້ຖອດຖອນມາໃນລະຫວ່າງປີ 2002-2006

ກອບແຜນງານຍຸດທະສາດ ຂອງ ອົງການ IUCN ລາວ ປີ 2007-2011 ມີຈຸດປະສົງສ້າງຂື້ນຈາກຜົນສຳລັດ ຂອງວຽກງານທີ່ຜ່ານມາ, ເພື່ອຕື່ມໃສ່ຊ່ອງວ່າງ ແລະ ເພື່ອປະສົມປະສານ ແລະ ສ້າງຄວາມເຂັ້ມແຂງ ແຜນງານຫລັກຂອງອົງການ ພາຍໃຕ້ກອບຍຸດທະສາດໃນທີ່ຜ່ານມາ. ຜົນສະທ້ອນ ກ່ຽວກັບຈຸດດີ ແລະ ຈຸດອ່ອນ ຂອງວຽກງານ ໃນຂະບວນການວຽກແຜນຫຍຸດທະສາດ ໄດ້ໃຫ້ບົດຮຽນ ຄືດັ່ງລຸ່ມນີ້:

- ນອກຈາກ ການສືບຕໍ່ໃຫ້ການສະໜັບສະໜູນ ໃຫ້ແກ່ຄູ່ຮ່ວມງານລັດທີ່ມີຢູ່ແລ້ວ, ກົນໄກການປົກຄອງ (Governance) ຂອງອົງການ IUCN ລາວ ແມ່ນມີຄວາມພະຍາຍາມເພື່ອ ດຳເນີນວຽກງານຮ່ວມກັບ ພາກສ່ວນອື່ນໃຫ້ກ້ວາງຂວາງເພີ່ມຂຶ້ນ, ລວມທັງສະຖາບັນການສຶກສາ, ອົງການຈັດຕັ້ງບໍ່ຫວັງຜົນກຳໄລ ແລະ ຂະແໜງການເອກະຊົນອື່ນໆ;
- ໃນຂະນະທີ່ວຽກງານປ່າສະຫງວນໄດ້ຮັບໝາກຜົນຫລາຍໆຢ່າງ, ວິທີການໃນປັດຈຸບັນ ຈະບໍ່ສາມາດ ຕອບສະໜອງຄວາມຕ້ອງການ ໃນການບໍລິຫານຄຸ້ມຄອງ ທີ່ກຳລັງປະກົດຂຶ້ນ ຫລື ແກ້ໄຂຄວາມກົດດັນ ທີ່ກຳລັງເພີ່ມຂຶ້ນເລື້ອຍໆ ໃຫ້ໄດ້ຮັບຜົນສຳເລັດໄດ້. ດັ່ງນັ້ນຈຶ່ງຕ້ອງການ ວິທີທາງແບບໃໝ່;
- ບົດບາດຫລັກຂອງອົງການ IUCN ຄື ອົງການຈັດຕັ້ງໜຶ່ງ ທີ່ສະໜັບສະໜູນຄູ່ຮ່ວມງານຂອງຕົນ ໂດຍກຳນົດບັນຫາຕ່າງໆ ແລະ ເອື້ອອຳນວຍໃນການກະຈາຍຂໍ້ມູນ ແລະ ໝາກຜົນ ຈາກວຽກງານ ອະນຸລັກ ແລະ ຊີວິດການເປັນຢູ່. ອົງການ IUCN ລາວ ໄດ້ຮັບຮູ້ເຖິງຄວາມຕ້ອງການ ເພື່ອຫັນຊັບ ພະຍາກອນຕ່າງໆ ເຂົ້າໃນການອະນຸລັກພັນພືດ ຫລື ຊີວະນາໆພັນການກະເສດ ເພື່ອການດຳລົງຊີວິດ ແບບຍືນຍົງ ແລະ ເພື່ອປັບປຸງໜ້າທີ່ຂອງລະບົບນິເວດ ແລະ

- ວຽກງານທີ່ອົງການ IUCN ລາວ ແລະ IUCN ອາຊີພາກພື້ນ ທີ່ເຮັດໄດ້ດີທີ່ສຸດ ແມ່ນການດຳເນີນ ເວທີປຶກສາຫາລື ໃຫ້ແກ່ຜູ້ມີສ່ວນໄດ້ສ່ວນເສຍ ຫລາຍພາກສ່ວນ ໃນດ້ານຄວາມກົດດັນທີ່ພົວພັນກັບ ນ້ຳ, ດິນບໍລິເວນນ້ຳ ແລະ ອ່າງໂຕ່ງ ຢູ່ໃນ ສ ປປ ລາວ ແລະ ຢູໃນພາກ ຕາເວັນອອກສຽງໄຕ້. ໂດຍການນຳໃຊ້ຄວາມສາມາດໃນການປຶກສາຫາລື ແລະ ຕຳແໜ່ງຂອງຕົນເປັນອົງກອນກາງ, ອົງການ IUCN ຄວນຈະສືບຕໍ່ ນຳເອົາຜູ້ມີສ່ວນຮ່ວມຕ່າງໆ ມາຮ່ວມປຶກສາຫາລືກັນ, ຂະຫຍາຍວຽກງານ ຂອງຕົນເຂົ້າໃນການປຶກສາຫາຫລືຮ່ວມ ລະຫ່ວາງ ຂະແໜງການຕ່າງໆທີ່ພົວພັນດ້ານສັງຄົມ ຕໍ່ກັບບັນຫາອື່ນໆທີ່ກຳລັງເກີດຂຶ້ນ;

ແຜນງານຂອງອົງການ IUCN ລາວ ໄດ້ປະກອບເອົາແນວຄວາມຄິດ ແລະ ຄຳແນະນຳຈາກຄູ່ຮ່ວມງານ. ກອງປະຊຸມປຶກສາຫາລື ລະຫວ່າງຜູ້ມີສ່ວນຮ່ວມ ໄດ້ຈັດຂຶ້ນໃນລະຫວ່າງເດືອນສິງຫາ ແລະ ທັນວ່າປີ 2006 ເພື່ອແລກປ່ຽນບົດຮຽນ ແລະ ຊອກຫາການປະກອບສ່ວນທີ່ເປັນຮູບປະທຳ ກ່ຽວກັບຂອບເຂດວຽກງານ ການເຂົ້າຮ່ວມ, ວິທີທາງທີ່ສຳຄັນຕໍ່ກັບການຮ່ວມງານ, ຍຸດທະສາດ ສຳລັບການປຶກສາຫາລື ດ້ານນະໂຍບາຍ ແລະ ວິທີການເຜີຍແຜ່ຂໍ້ມູນຂ່າວສານ.

ຜົນສະທ້ອນດັ່ງກ່າວນີ້ເປັນ ສາຍເຫດໃຫ້ມີການປັບປຸງການຈັດຕັ້ງ ແລະ ສຸມໃສ່ຈຸດປະສົງ ແລະ ກິດຈະກຳດ້ານການປະຕິບັດງານຂອງອົງການ IUCN ລາວ ຄື້ນໃໝ່, ໃຫ້ສອດຄ່ອງກັບການພັດທະນາ ໂຄງຮ່າງນະໂຍບາຍຂອງ ສປປ ລາວ ໃນປະຈຸບັນ ແລະ ໃຫ້ສອດຄ່ອງກັບ ການສະແດງແນວຄິດຢ່າງຊັດເຈນຂອງຄູ່ຮ່ວມງານຫລັກ.

## 2.3 ທົບທວນແນວຄວາມຄິດ ແລະ ວິທີທາງ

ວິທີທາງຂອງອົງການ IUCN ລາວ ສຳລັບປີ 2007-2011 ທີ່ຈະມາເຖິງນີ້ ແມ່ນຖືກສ້າງຂຶ້ນ ອີງໃສ່ 3 ຫລັກການພື້ນຖານໃນການເຮັດວຽກຄື:

1. ການຮວ່ມງານໄລຍະຍາວ ທີ່ຊ່ວຍສ້າງຄວາມສາມາດໃຫ້ສັງຄົມ ເພື່ອແກ້ໄຂບັນຫາ ດ້ານການດຳລົງຊີວິດ ແລະ ການອະນຸລັກ. ສິ່ງທີ່ຕິດພັນກັບຫລັກການນີ້ ພັນທະຂອງອົງການ ແມ່ນສ້າງຂະບວນ ການທີ່ມີສ່ວນຮ່ວມ ແລະ ແນວຄິດໃນການຜັກດັນໃຫ້ມີຜົນປະໂຫຍດຮ່ວມ - ເຊິ່ງ ທຸກຂະແໜງກາໃນສັງຄົມ ສາມາດປະກອບສ່ວນ ເພື່ອເປັນເອກະພາບ ໃນເປົ້າໝາຍຫລັກ ແລະ ຮ່ວມມືກັນເພື່ອເຮັດ ໃຫ້ເປົ້າໝາຍດັ່ງກັນ ບັນລຸຜົນເປັນຈິງ.

2. ຄວາມຮູ້, ໃຫ້ສິດອຳນາດ ແລະ ການປົກຄອງ/ຄຸ້ມຄອງບໍລິຫານ (Knowledge, Empowerment and Governance) ສຳລັບການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ. ນີ້ແມ່ນຍຸດທະສາດຫລັກຂອງແຜນງານທົ່ວໄປຂອງອົງການ IUCN ແລະ ອີງຕາມການສັນນິຖານທີ່ວ່າເມື່ອເວລາມີຄວາມຮູ້, ຄົນ ແລະ ສະຖາບັນໄດ້ມີອຳນາດນຳໃຊ້ມັນ, ພວກເຂົາສາມາດເຂົ້າຮ່ວມຢ່າງມີປະສິດຕິຜົນຫລາຍ ຂຶ້ນໃນການຕັດສິນໃຈເພື່ອປັບປຸງກົດໝາຍ, ນະໂຍບາຍ, ກົນໄກ ແລະ ສະຖາບັນຕ່າງໆ.

3. ການຕອບຮັບ ແລະ ພັນທະ ທີ່ສະແດງໃຫ້ວ່າ ເປັນສະຖາບັນທີ່ຕອບຮັບທັນສະພາບ. ຕໍ່ກັບການສ້າງຕັ້ງຖານະຂອງຕົນຢູ່ ສປປ ລາວ ກັບຄູ່ຮ່ວມງານ ແລະ ຜູ້ທີ່ມີສ່ວນຮ່ວມ, ປັດຈຸບັນ ອົງການ IUCN ລາວ ແມ່ນໄດ້ວາງທິດທາງເປັນຢ່າງດີ ເພື່ອທີ່ຈະປະເຊີນກັບ ສິ່ງທ້າທາຍ ດ້ານການພັດທະນາ ແລະ ສະພາບແວດລ້ອມ ທີ່ກຳລັງປະກົດຂຶ້ນຢູ່ ສປປ ລາວ ຢ່າງ ຫ້າວຫັນຕັ້ງໜ້າ ແລະ ທັນການ.

ດັ່ງທີ່ເປັນສ່ວນໜຶ່ງຂອງ "ການທົບທວນແນວຄວາມຄິດ", ອົງການ IUCN ລາວ ໄດ້ເລີ່ມຕົ້ນປັບປຸງສາຍພົວພັນຂອງອົງການ ໃນຮູບແບບຍຸດທະສາດໃໝ່ ກັບອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບ ລັດຖະບານ ຢູ່ສປປ ລາວ ລວມທັງກຸ່ມຜູ້ໃຫ້ທຶນນຳອີກ. ການຮ່ວມງານເຫລົ່ານີ້ ແມ່ນພາກສ່ວນທີ່ສຳຄັນ ຂອງການຍົກສູງປະສິບການ ແລະ ເພີ່ມທະວີປະສິດຕິຜົນ ໃນການໃຫ້ຂໍ້ມູນ ດ້ານນະໂຍບາຍທີ່ສຳຄັນ. ການຮ່ວມງານ ດ້ານຍຸດທະສາດກັບ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ຈະເຮັດໃຫ້ອົງການ IUCN ລາວ ຍົກສູງບົດບາດ ດ້ານນະໂຍບາຍ ແລະ ວິຊາການ ໃຫ້ແທດເໝາະ ເຂົ້າໃນແຜນງານອັນໃໝ່. ສິ່ງສຳຄັນແມ່ນ ອົງການ IUCN ລາວ ຍັງໄດ້ຮັບຜົນປະໂຫຍດ ຈາກການສະໜັບສະໜູນ ໂຄງຮ່າງວຽກງານ ທີ່ໄດ້ສ້າງຂຶ້ນກັບອົງການຊີດາ, ແລະ ອົງການ IUCN ລາວ ຈະນຳໃຊ້ ກາລະໂອກາດ ຂອງແຜນຍຸດທະສາດ ອັນໃໝ່ນີ້ ຊອກຫາທາງເລືອກ ເພື່ອສ້າງຂໍ້ຕົກລົງທີ່ມີຮູບການດຽວກັນກັບ ຜູ້ໃຫ້ທຶນຮ່ວມກັນອື່ນໆ.

ນອກຈາກການຮ່ວມງານດ້ານຍຸດທະສາດພາຍໃນ ສປປ ລາວແລ້ວ, ອົງການ IUCN ລາວ ຈະໝູນໃຊ້ຊັບພະຍາກອນ ແລະ ຄວາມຊຳນານທີ່ມີ ຢູ່ໃນເຄືອຄ່າຍຄູ່ຮ່ວມງານ ແລະ "ໜ່ວຍງານການດຳລົງຊີວິດ ແລະ ລະບົບນິເວດ" (Ecosystem and Livelihood Groups) ຂອງອົງການ IUCN. ການຊ່ວຍເຫລືອ ດ້ານວິຊາການ ແລະ ພື້ນຖານຄວາມສາມາດທີ່ຫລາກຫລາຍ ຢູ່ໃນປະເທດຕ່າງໆ ຢູ່ພາຍໃນ ແລະ ນອກພາກພື້ນອາຊີ ຈະຖືກນຳມາໃຊ້ ເພື່ອສະໜັບສະໜູນ ການສ້າງແຜນງານຂອງອົງການ IUCN ລາວ.

ນອກຈາກນີ້, ຄວາມຄິດໃໝ່ "refreshed" ຂອງອົງການ IUCN ລາວ ຍັງໃຫ້ຄວາມສຳຄັນຢ່າງສູງກ່ຽວກັບສິ່ງທ້າທາຍຕ່າງຂອງການພັດທະນາ ແລະ ການອະນຸລັກທຳມະຊາດຂ້າມຊາຍແດນ ຫລາຍໆອັນທີ່ປະເທດກຳລັງປະເຊີນ. ການເຂົ້າກ່ຽວຂ້ອງໂດຍກົງໃນແຜນການລິເລີ່ມຮ່ວມຊາຍແດນ ແລະ ພາກພື້ນ ແລະ ການ ສະໜັບສະໜູນຜູ້ຮ່ວມງານເພື່ອໃຫ້ເຂົາເຈົ້າ ເຂົ້າຮ່ວມກິດຈະກຳ ດັ່ງກ່າວນັ້ນ ແມ່ນອົງປະກອບອັນສຳຄັນຂອງແຜນງານຂອງອົງການ IUCN ລາວ.

# 3. ແຜນງານໃຈກາງ ປີ 2007-2011 ຂອງອົງການ IUCN ລາວ

ເອກະສານແຜນຍຸດທະສາດສະບັບນີ້ ໄດ້ລະບຸໂຄງຮ່າງຫົວຂໍ້ແຜນງານໃຈກາງ ແລະ ນຳສະເໜີຂົງເຂດການຮ່ວມມື ພາຍໃຕ້ການພັດທະນາຮ່ວມກັບ ເພື່ອນຮ່ວມງານ. ຂະບວນການປຶກສາຫາລື ກັບຜູ້ມີສ່ວນຮ່ວມ ໄດ້ສະຫລຸບຫຍໍ້ຢູ່ເອກະສານຕິດຄັດ 2.

ໃນຂະນະທີ່ເປົ້າໝາຍ ຂອງແຜນງານ ຍັງຄົງຮັກສາໄວ້ ບໍ່ມີຫຍັງປ່ຽນແປງ, ໜ້າວຽກຂອງແຜນງານ ໃນປະຈຸບັນໄດ້ສະແດງໃຫ້ເຫັນວ່າ ໜຶ່ງໃນສິ່ງທ່າທາຍອັນໃຫ່ຍ ສຳລັບອົງການ IUCN ລາວ ໃນປີທີ່ຈະມາເຖິງນີ້ ແມ່ນຮູບການການດຳເນີນການຈັດຕັ້ງປະຕິບັດ ວຽກງານອະນຸລັກ ເພື່ອວິທີທາງ ການດຳລົງຊີວິດ.

ໂດຍການຊີ້ນຳ ຈາກຫລັກການທີ່ເປັນ ພື້ນຖານຂອງການທົບທວນແນວຄວາມຄິດ "refreshed", ອົງການ IUCN ລາວ ພ້ອມກັບເພື່ອນຮ່ວມງານຂອງ ອົງການ ໄດ້ຜັນຂະຫຍາຍ ແຜນງານແບບປະສົມປະສານ ທີ່ມີແຜນງານໃຈກາງຫລັກ 4 ອັນຄື: ແຜນງານການປົກຄອງ/ການຄຸ້ມຄອງບໍລິຫານ (Governance), ປ່າສະຫງວນ (Protected Areas), ຄວາມຫລາກຫລາຍຊີວະນາໆພັນດ້ານກະເສດ (Agrobiodiversity), ແລະ ແຜນງານນ້ຳ, ດິນບໍລິເວນນ້ຳ ແລະ ອ່າງໂຕ່ງ (Nam: Water, Wetlands and Watersheds) ເຊິ່ງໄດ້ຖືກຈັດວາງພາຍໄຕ້ສະພາບລວມ ຂອງວິທີທາງການດຳລົງຊີວິດ. ແຜນງານດ້ານການປົກຄອງ ແມ່ນຈຸດໃຈກາງຂອງແຜນງານປີ 2007-2011, ປະສົມປະສານເຂົ້າໃນທຸກ 3 ແຜນງານ ທີຍັງເຫລືອນັ້ນ. ໃນເວລາດຽວກັນ, ການປົກຄອງການປະສານງານ ໄດ້ ຖືກຈັດວ່າ ເປັນວຽກງານໜຶ່ງ ຕ່າງຫາກຂອງກິດຈະກຳແຜນງານ. ສະຖານາການນີ້ສະທ້ອນເຖິງພັນທະຂອງ ອົງການ IUCN ລາວ ຕໍ່ຜົນສຳເລັດທີ່ກຳລັງເກີດຂຶ້ນ ໃນການສ້າງ ແລະ ເຜີຍແຜ່ຄວາມຮູ້, ໃຫ້ສິດອຳນາດກຸ່ມຕ່າງໆຢູ່ໃນສັງຄົມ ແລະ ສ້າງຄວາມເຂັ້ມແຂງ ການຄຸ້ມຄອງ-ບໍລິຫານ ໂດຍລວມພາຍໃຕ້ຂະແໜງການຕ່າງໆ ຢູ່ ສປປ ລາວ.

ແຜນງານໃຈກາງ ຂອງອົງການ IUCN ລາວ ແລະ ຈຸດປະສົງ ໄດ້ສະຫລຸບຫຍໍ້ຢູ່ລຸ່ມນີ້:

**ກົນໄກການປົກຄອງບໍລິຫານ**

- ດຳເນີນ ແລະ ສືບຕໍ່ ການປະສານງານ ລະຫວ່າງອົງການຈັດຕັ້ງລັດ ໃນດ້ານບັນຫາການ ຈັດຕັ້ງປະຕິບັດ ແລະ ດ້ານນະໂຍບາຍຫລັກ [ ທີ່ພົວພັນກັບ ວຽກງານປ່າສະຫງວນ, ຊີວະນາໆພັນ ການກະເສດ ແລະ ນ້ຳ.]
- ການເຂົ້າຮ່ວມຂອງອົງການຈັດຕັ້ງສັງຄົມ ແລະ ຂະແໜງການເອກະຊົນ ຢ່າງຈິງຈັງ ໃນການຕັດສິນໃຈ ວຽກງານສະພາບແວດລ້ອມ.
- ຂັ້ນຕອນນະໂຍບາຍ ທີ່ນຳໃຊ້ຫລາຍແຫລ່ງ ຂໍ້ມູນດ້ານວິທະຍາສາດ.
- ການຈັດຕັ້ງປະຕິບັດ ຂໍ້ຕົກລົງຫລາຍຝ່າຍດ້ານສິ່ງແວດລ້ອມທີ່ໄດ້ຄັດເລືອກ (MEAs) ແລະ ການຮ່ວມມືໃນລະດັບພາກພື້ນ ທີ່ຄົບຊຸດ ແລະ ໂປ່ງໃສ.

**ປ່າສະຫງວນ**

- ລະບົບປ່າສະຫງວນແຫ່ງຊາດ ທີ່ມີປະສິດຕິຜົນ (NPA) ທີ່ຕອບສະໜອງ ຄວາມຕ້ອງການ ໃນການອະນຸລັກ ຂອງແຕ່ລະປ່າສະຫງວນແຫ່ງຊາດ ໂດຍສະເພາະ ແລະ ສະໜັບສະໜູນ ການເຂົ້າຮ່ວມຂອງ
- ຊຸມຊົນທ້ອງຖິ່ນ ຢ່າງເລິກເຊິ່ງ.
- ຄວາມເຂົ້າໃຈທີ່ເລິກເຊິ່ງ ກ່ຽວກັບ ສາຍພົວພັນ ລະຫ່ວາງ ການຫລຸດຜ່ອນຄວາມທຸກຍາກ ແລະ ການອະນຸລັກ ທີ່ເອື້ອອຳນວຍໃຫ້ແກ່ການຕັດສິນໃຈ.
- ລະບົບປ່າສະຫງວນແຫ່ງຊາດ ທີ່ມີກົນໄກເສດຖະກິດຍືນຍົງ ແລະ ເປັນເຈົ້າການເອງໄດ້.

**ຊີວະນາໆພັນກະສິກຳ**

- ເພີ່ມທະວີພື້ນຖານຄວາມຮູ້ ໃຫ້ມີຄວາມເຂົ້າໃຈດີຂຶ້ນ ກ່ຽວກັບ ຊີວະນາໆພັນການກະເສດ
- ສະແດງການນຳໃຊ້ ຊີວະນາໆພັນການກະເສດ ຂອງສປປ ລາວ ແບບຊານສະຫລາດ ເພື່ອປັບປຸງການດຳລົງ ຊີວິດ.
- ປັບປຸງສະຖາບັນ ຂະບວນການວາງແຜນ ໃນຫລາຍລະດັບສຳລັບການນຳໃຊ້ຊີວະນາໆພັນ ການກະເສດຂອງ ສປປ ລາວ ໃຫ້ມີຄວາມສະເໝີພາບ ແລະ ທ່ຽງທຳ.

**ນ້ຳ, ດິນບໍລິເວນນ້ຳ ແລະ ອ່າງໂຕ່ງ**

- ປັບປຸງຄວາມເຂົ້າໃຈ ກ່ຽວກັບ ລະບົບນິເວດວິທະຍາ ແລະ ວິທີທາງການດຳລົງຊີວິດ ຕໍ່ການຄຸ້ມຄອງຊັບພະຍາກອນແຫລ່ງນ້ຳ.
- ປັບປຸງສະຖານບັນການຈັດຕັ້ງ ແລະ ຂະບວນການຕ່າງໆ ທີ່ພົວພັນກັບນ້ຳ ເພື່ອສ້າງຂໍ້ຕົກລົງ ແລະ ນະໂບບາຍ ທີ່ມີປະສິດຕິຜົນ ແລະ ເປີດເຜີຍ.

ເອົາໃຈໃສ່ຕໍ່ກັບຄວາມກົດດັນກ່ຽວກັບຊັບພະຍາກອນທີ່ພົວພັນກັບແລ່ງນ້ຳ. ອົງການ IUCN ລາວເຊື່ອວ່າ ກຸນແຈຫນື່ງເພື່ອກ້າວໄປສູ່ ການຈັດຕັ້ງປະຕິບັດ ວິທີທາງການດຳລົງຊີວິດ ທີ່ປະສົບຜົນສຳເລັດ ແມ່ນຕ້ອງເອົາໃຈໃສ່ເປັນພິເສດ ຕໍ່ຂົງເຂດວຽກງານ ທີ່ມີ ການພົວພັນກັນ ລະຫວ່າງ 3 ແຜນງານໃຈກາງ ນັ້ນຄື: ປ່າສະຫງວນ, ຊີວະນາໆພັນການກະເສດ ແລະ ນ້ຳ. ຂົງເຂດວຽກງານທີ່ຄວາມສຳຄັນເທົ່າກັນເຫລົ່ານີ້, ທີ່ຖືວ່າມີສ່ວນພົວພັນກັບການປົກຄອງ/ຄຸ້ມຄ້ອງ-ບໍລິຫານ, ສະ ໜອງກາລະໂອກາດທີ່ສົມບູນເພື່ອໃຫ້ຄວາມຈະແຈ້ງກ່ຽວກັບນະໂຍບາຍ, ເສັ້ນທາງດ້ານວິຊາການ ແລະ ດ້ານຂັ້ນຕອນຕໍ່ກັບການອະນຸລັກ ແລະ ຜົນໄດ້ຮັບທີ່ຕ້ອງການ.




ໂດຍຜ່ານເສັ້ນທາງດ້ານຍຸດທະສາດເຫລົ່ານີ້, ອົງການ IUCN ລາວ ໄດ້ວາງແຜນ ເພື່ອປະກອບສ່ວນອັນໃຫ່ຍຫລວງ ເຂົ້າໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມ ກວດກາ ບັນດານະໂຍບາຍດັ່ງຕໍ່ໄປນີ້:

- ຍຸດທະສາດແຫ່ງຊາດ 2020 ເພື່ອລຶບລ້າງຄວາມທຸກຍາກ ແລະ ການຂະຫຍາຍຕົວ (NGPES)
- ຍຸດທະສາດປ່າໄມ້ຮອດປີ 2020 ຂອງ ສປປ ລາວ (FS2020)
- ຍຸດທະສາດຊີວະນາໆພັນແຫ່ງຊາດ ຮອດປີ 2020 ແລະ ແຜນຈັດຕັ້ງປະຕິບັດ ຮອດປີ 2010 (NBS)
- ນະໂຍບາຍແຫລ່ງນ້ຳ ແລະ ຊັບພະຍາກອນນ້ຳ (WWRP)
- ຍຸດທະສາດແຫ່ງຊາດກ່ຽວກັບສະພາບແວດລ້ອມເຖິງປີ 2020 ແລະ  ແຜນຈັດຕັ້ງປະຕິບັດເຖິງປີ 2010
- ສົນທິສັນຍາສາກົນຕ່າງໆ ລວມມີ:
    - ສົນທິສັນຍາດ້ານຄວາມຫລາກຫລາຍຊີວະນາໆພັນ (CBD)
    - ສົນທິສັນຍາ ດິນບໍລິເວນນ້ຳ (Ramsar)
    - ສົນທິສັນຍາສາກົນວ່າດ້ວຍ ການຄ້າຂາຍ ຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນ (CITES)
    - ສົນທິສັນຍາສາກົນວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC)
    - ສົນທິສັນຍາສາກົນວ່າດ້ວຍການປ່ອຍທາດອາຍພິດ Kyoto Protocol
    - ສົນທິສັນຍາມໍລະດົກໂລກ

# 4. ກົນໄກການປົກຄອງ

ລັດຖະບານ ສປປ ລາວໄດ້ສ້າງຄວາມກ້າວໜ້າໃນການໃຫ້ຄວາມຈະຈ່າງແຈ້ງກ່ຽວກັບກອບ/ໂຄງຮ່າງນະໂຍບາຍເພື່ອການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສ້າງຄວາມກ້າວໜ້າໃນແຜນງານແບ່ງ ຂັ້ນຄຸ້ມຄອງ. ແຕ່ກົນໄກໃນການຮັບປະກັນການເຂົ້າກ່ຽວຂ້ອງຢ່າງກ້ວາງຂວາງຂອງຜູ້ມີສ່ວນຮ່ວມ, ການສ້າງຄວາມເຂັ້ມແຂງໃນການຮ່ວມມືຜ່ານຫລາຍລະດັບ ແລະ ການເພີ່ມທະວີການໝູນວຽນຂໍ້ມູນຂ່າວສານແມ່ນຍັງບໍ່ທັນພຽງພໍ່.

## 4.1 ເປັນຫຍັງຈິ່ງເລືອກຫົວຂໍ້ກົນໄກການປົກຄອງ? ຍົກສູງຜົນໄດ້ຮັບ ຂອງວຽກງານການອະນຸລັກ ແລະ ການພັດທະນາ

ຫົວຂໍ້ກົນໄກການປົກຄອງ ກວມລວມເອົາທຸກໆວຽກງານທີ່ພົວພັນ ກັບການສ້າງຄວາມສາມາດ ດ້ານການຈັດຕັ້ງເພື່ອອະນຸລັກ ແລະ ນຳໃຊ້ຊັບພະຍາກອນໃຫ້ດີຂຶ້ນ ແລະ ມີຄວາມຍືນຍົງ. ອີງການພັດທະນາ, ລັດຖະບານ ແລະ ນັກຄົ້ນຄ້ວາໃນທົ່ວໂລກ ໄດ້ຮັບຮູ້ເຖິງຄວາມສຳຄັນ ຂອງກົນໄກການປົກຄອງ ຕໍ່ກັບກິດຈະກຳ ການພັດທະນາ ແລະ ການອະນຸລັກຢ່າງກ້ວາງຂວາງ.

> ກົນໃກການປົກຄອງ ໃນວຽກງານອະນຸລັກທຳມະຊາດ ແມ່ນ "...ການພົວພັນເຊິ່ງກັນ ແລະ ກັນລະຫວ່າງ ໂຄງສ້າງ, ຂະບວນການ ແລະ ແບບແຜນ ເຊິ່ງກຳນົດ ຂະບວນການນຳໃຊ້ ສິດອຳນາດ ແລະ ຄວາມຮັບຜິດຊອບ ເຂົ້າໃສ່ໃນການຈັດຕັ້ງປະຕິບັດ,ການດຳເນີນ ການຕັດສິນ ໃຈ ແລະການນຳເອົາຄຳຄິດເຫັນ ຂອງປະຊາຊົນ ຫລື ຜູ້ມີ ສ່ວນຮ່ວມອື່ນ ເຂົ້າໃນການ ຄຸ້ມ ຄອງຊັບພະຍາກອນ ທຳມະຊາດ-ລວມທັງການອະນຸລັກຊີວະນາໆພັນ"
> (ສັງລວມຈາກ CMWG, TILCEPA 2004)

ການປົກຄອງ, ການອະນຸລັກເພື່ອຫລຸດຜ່ອນ ຄວາມທຸກຍາກ ແລະ ການພັດທະນາທີ່ຍືນຍົງ ແມ່ນມີການຕິດພັນ ກັນຢ່າງສະໜິດແໜ້ນ. ອົງປະກອບຂອງສະຖາບັນ ພາຍ ໃນສັງຄົມລາວ,ຈາກ ລະດັບຊາດ, ທ້ອງຖິ່ນ ແລະ ບົດບາດຂອງພວກເຂົາໃນອານາຄົດແມ່ນຕົວຕັດສິນ ອັນສຳຄັນ ໃນໝາກຜົນຂອງແຜນງານ ແລະ ນະໂຍບາຍເພື່ອການອະນຸລັກ ແລະ ພັດທະນາທີ່ຍືນຍົງໃນອານາຄົດ. ການໃສ່ໃຈຕໍ່ກັບວຽກງານກົນໄກການປົກຄອງກໍ່ໃຫ້ເກີດມີຄຳຖາມບໍ່ສະເພາະພຽງແຕ່ວ່າຈະຕັດສິນໃຈຫຍັງລົງໄປແຕ່ຍັງພົວພັນກັບພື້ນຖານການຕັດສິນໃຈທີ່ອີງໃສ່ ແລະ ໃຜມີສ່ວນຮ່ວມໃນຂະບວນ ການດັ່ງກ່າວ. ອີກຮູບການໜຶ່ງ, ຂໍ້ມູນຂ່າວສານ, ຄວາມສາມາດ ແລະ ການມີສ່ວນຮ່ວມ ກາຍເປັນອົງປະກອບອັນສຳຄັນ ໃນການສ້າງຄວາມເຂົ້າໃຈ ຕໍ່ຜົນໄດ້ຮັບຂອງ ນະໂຍບາຍ ທາງດ້ານສະພາບແວດລ້ອມ ແລະ ສັງຄົມ.

## 4.2 ກົນໄກການປົກຄອງໃນ ສປປ ລາວ: ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບົດບາດ ແລະ ໜ້າທີ່ຮັບຜິດຊອບ ລະຫວ່າງພາກສ່ວນຕ່າງໆ

ຕາມພື້ນຖານແລ້ວ, ສປປລາວ ແມ່ນມີໂຄງຮ່າງ ແລະ ຂະບວນການ ໃນກົນໄກການປົກຄອງ ແບບລວມສູນ (ເອົາສູນກາງເປັນຈຸດໃຈກາງ). ເຖິງຢ່າງໃດກໍ່ຕາມ, ມີການລິເລີ່ມຄວາມພະຍາຍາມ ທີ່ເດັດດ່ຽວຫລາຍໆອັນເພື່ອປັບປຸງການປົກຄອງຢູ່ໃນປະເທດ. ຈຸດສຸມຂອງຄວາມພະຍາຍາມເຫລົ່ານີ້ ແມ່ນການສົ່ງເສີມວິທີການ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານ ທີ່ໄດ້ແບ່ງຂັ້ນການຄຸ້ມຄອງ, ສະໜັບສະໜູນການສົ່ງເສີມ ການ

ມີສ່ວນຮ່ວມຂອງປະຊາຊົນ ແລະ ການສ້າງຕັ້ງໜ່ວຍງານປະສານງານ ເພື່ອອຳນວຍຄວາມສະດວກ ການຮ່ວມມື ລະຫ່ວາງຂະແໜງການຕ່າງໆ ແລະ ພາຍໃນການຈັດຕັ້ງເອງ. ມີການເໜັ້ນໜັກຢ່າງຈະແຈ້ງ ຕໍ່ກັບການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບ ຂອງພາກສ່ວນທີ່ເຂົ້າກ່ຽວຂ້ອງ ໃນການປົກຄອງ ລວມທັງ ຄວາມສາມາດ, ອຳນາດການປົກຄອງ, ຊັບພະຍາກອນ ແລະ ຂະບວນການຕ່າງໆ ທີ່ຫລາຍພາກສ່ວນໄດ້ເຂົ້າຮ່ວມໃນກົນໄກການປົກຄອງ. ຂະບວນການວາງແຜນຂອງ ອົງການ IUCN ລາວ ໄດ້ເໜັ້ນໜັກໃຫ້ຫລາຍພາກສ່ວນ ທີ່ເຂົ້າຮ່ວມໃນກົນໄກການປົກຄອງ ເປັນຈຸດເລີ່ມຕົ້ນ, ວິເຄາະທ່າແຮງທີ່ບົ່ມຊ້ອນເພື່ອປະກອບສ່ວນເຂົ້າໃນການເສີມສ້າງ ວຽກງານກົນໄກການປົກຄອງບໍລິຫານ ຢູ່ ສປປ ລາວ.

**ອົງການຈັດຕັ້ງພາກລັດ: ການແບ່ງຂັ້ນການຄຸ້ມຄອງ ແລະ ການປະສານງານ**

ລັດຖະບານຂອງ ສປປ ລາວ ໄດ້ທຸ້ມເທ ຄວາມພະຍາຍາມອັນໃຫ່ຍຫລວງ ເຂົ້າໃສ່ວິທີການປັບປຸງ ກົນໄກການຄຸ້ມຄອງ ຊັບພະຍາກອນຂອງປະເທດ ແລະ ປັບປຸງຜົນໄດ້ຮັບຂອງການພັດທະນາໃນປະເທດ. ລັດຖະບານລາວໄດ້ລິເລີ່ມຂະບວນ ການແບ່ງຂັ້ນການຄຸ້ມຄອງ, ຄວາມຈິງແລ້ວ ນະໂຍບາຍນີ້ ມີຈຸດປະສົງ ເພື່ອມອບໂອນ ບົດບາດ ແລະ ຄວາມຮັບຜິດຊອບຄືນ ໃຫ້ຂັ້ນທ້ອງຖິ່ນທີ່ເໝາະສົມທີ່ສຸດ - ຂັ້ນແຂວງ, ເມືອງ ແລະ ບ້ານ. ຫວັງວ່າການມອບໂອນບົດບາດ ໃນທຸກລະດັບອຳນາດການປົກຄອງ ຈະປັບປຸງການກະຈາຍ ຂໍ້ມູນຂ່າວສານ ແລະ ການໃຫ້ບໍລິການ ແກ່ປະຊາຊົນຢູ່ທ້ອງຖິ່ນ. ເຖິງຢ່າງໃດກໍ່ຕາມ, ຄວາມສາມາດ ໃນ ຄວາມເຂົ້າໃຈ ໃນການຈັດຕຽມສິ່ງເຫລົ່ານີ້ ແມ່ນເປັນບັນຫາສະເພາະ ໃນຂະບວນການແບ່ງຂັ້ນຄຸ້ມຄອງ, ນອກຈາກນັ້ນ ຍັງມີຄວາມສັບສົນທີ່ສືບເນື່ອງ ທີ່ພົວພັນກັບຂອບເຂດບົດບາດ ໃນແຕ່ລະລະດັບ. ເຖິ່ງຢ່າງໃດກໍ່ຕາມ, ບົດບາດຂອງອົງການຈັດຕັ້ງລັດຖະບານ ທີ່ມີຄວາມໝາຍຫລາຍຂຶ້ນ ຢູ່ຂັ້ນທ້ອງຖິ່ນ ອາດຈະມີໂອກາດ ທີ່ໜ້າຕື່ນເຕັ້ນ ເພື່ອປັບປຸງຜົນໄດ້ຮັບຂອງການອະນຸລັກ ແລະ ການພັດທະນາ.

ການປະສານງານລະຫວ່າງ ອົງການຈັດຕັ້ງ ແມ່ນສິ່ງທ້າທາຍອີກອັນໜຶ່ງ ຂອງກົນໄກການປົກຄອງໃນ ສປປ ລາວ. ໃນຂະນະ ທີ່ກອບນະໂຍບາຍດ້ານສະຖາບັນການຈັດຕັ້ງ ແລະ ດ້ານກົດໝາຍ ໄດ້ມີຄວາມຄືບໜ້າ ຢ່າງໜ້າຊົມເຊີຍບາງອັນ, ຫລາຍໜ້າທີ່ ຂອງການຄຸ້ມຄອງບໍລິຫານ ຍັງມີຂອດຈຳກັດ ຍ້ອນຂັ້ນຕອນ ໃນການແລກປ່ຽນຂໍ້ມູນຂ່າວສານ, ການປຶກສາຫາລື ແລະ ການແລກປ່ຽນລະຫ່ວາງໜ່ວຍງານການຈັດຕັ້ງລັດ ຍັງບໍ່ຈະແຈ້ງ. ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບ ດ້ານສາຍຕັ້ງ ແມ່ນອົງປະກອບອັນສຳຄັນ ຕໍ່ກັບການດັດແປງລະບົບການຈັດຕັ້ງ ສາຍຂວາງ ທີ່ໄດ້ຮັບການສົ່ງເສີມ ໃນການແບ່ງຂັ້ນຄຸ້ມຄອງ. ຍ້ອນມີທ່າອ່ຽງທີ່ກຳລັງຂະຫຍາຍຕົວ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ຫັນໄປສູ່ ແນວຄວາມຄິດການຄຸ້ມຄອງ ຊັບພະຍາກອນແຫລ່ງນ້ຳແບບຄົບວົງຈອນ ແລະ ການຫລຸດຜ່ອນ ຄວາມທຸກຍາກ, ດັ່ງນັ້ນຄວາມຕ້ອງການເພື່ອການປະສານງານ ແລະ ການຮ່ວມມື ລະຫວ່າງໜ່ວຍງານ ການຈັດຕັ້ງ ຈະມີຄວາມຮຸນແຮງຂຶ້ນໃນອານາຄົດ.

**ພາກສ່ວນການຈັດຕັ້ງໃໝ່: ເປີດກ້ວາງກົນໄກການປົກຄອງ**

ກົນໄກການປົກຄອງ ແມ່ນແນວຄວາມຄິດກວ້າງຂວາງ ທີ່ບໍ່ຈຳກັດສະເພາະ ແຕ່ຂອບເຂດອຳນາດ ການຕັດສິນໃຈຂອງລັດຖະບານ (IUCN, 2002). ແນວຄວາມຄິດຂອງກົນໄກການປົກຄອງນີ້ ຍັງຂະຫຍາຍຂອບເຂດການຕັດສິນໃຈ ເພື່ອກວມເອົາພາກສ່ວນທຸລະກິດ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບ ລັດຖະບານ ແລະ ບໍ່ຫວັງຜົນກຳໄລ, ສະມາຄົມ ແລະ ສະຖາບັນວິຊາຊີບ ຂອງການຄົ້ນຄ້ວາວິໃຈ ແລະ ການສຶກສາຂັ້ນສູງ. ໃນຊຸມປີບໍ່ດົນຜ່ານມານີ້

ສປປລາວ ໄດ້ມີຫລາຍພາກສ່ວນການຈັດຕັ້ງ ປະກອບສ່ວນເຂົ້າ ໃນວຽກງານຫລຸດຜ່ອນ ຄວາມທຸກຍາກ ແລະ ການຂະຫຍາຍຕົວຂອງເສດຖະກິດ ເພີ້ມຂຶ້ນໃນສັງຄົມ.

ໜ່ວຍງານທີ່ຫ້າວຫັນທີ່ປະກົດຂຶ້ນ ແມ່ນສະມາຄົມບໍ່ຫວັງຜົນກຳໄລ ທີ່ໄດ້ລົງທະບຽນຮັບອະນຸມັດຈາກຫ້ອງການສຳນັກງານນາຍຍົກເຊັ່ນ: ສະມາຄົມພັດທະນາສະພາບແວດລ້ອມຊຸມຊົນ (Community Environmental Development Association). ນອກຈາກນີ້, ມະຫາວິທະຍາໄລແຫ່ງຊາດລາວ (NUoL) ໄດ້ເລີ່ມ ຕົ້ນກຳນົດບົດບາດທີ່ຫ້າວຫັນ ໃນການຄົ້ນຄ້ວາ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ເພື່ອປະກອບສ່ວນບົດບາດ ທາງດ້ານ ການສຶກສາໃຫ້ເພີ່ມຂຶ້ນ. ອົງການຈັດຕັ້ງມະຫາຊົນ ເຊັ່ນ ສະຫະພັນແມ່ຍິງລາວ, ສະຫາພັນວິດທະຍາສາດ ແລະ ວິສະວະກຳ ລາວ (Lao Union of Science and Engineering Associations), ແລະ ຊື່ມວນຊົນກໍ່ຍັງໄດ້ເພີ່ມທະວີການເຂົ້າ ຮ່ວມໃນຂົງເຂດກິດຈະກຳ ທີ່ພົວພັນ ກັບວຽກງານອະນຸລັກ ແລະ ການພັດທະນາ. ອົງການຈັດຕັ້ງເຫລົ່ານີ້ ກຳລັງເຮັດວຽກ ເພື່ອກຳນົດບົດບາດ ຂອງຕົນຄືນ ໃນສັງຄົມລາວ.

ຂະແໜງການເອກະຊົນ ໄດ້ຂະຫຍາຍຕົວເທື່ອລະກ້າວ ນັບແຕ່ການຈັດຕັ້ງປະຕິບັດ “ກົນໄກເສດຖະກິດໃໝ່” ໃນຊຸມປີ 1980, ທີ່ສົ່ງເສີມການປ່ຽນແປງໄປສູ່ເສດຖະກິດການຕະຫລາດ ແລະ ການສ້າງບໍລິສັດ/ໂຮງຈັກໂຮງງານເອກະຊົນ. ປັດຈຸບັນນີ້ ຂະແໜງການເອກະຊົນສ່ວນໃຫ່ຍ ໄດ້ຖືກຈັດເປັນປະເພດທຸລະກິດ ຂະໜາດກາງ ແລະ ຂະໜາດນ້ອຍ, ສ່ວນຫລວງຫລາຍ ກວມເອົາວຽກງານກະສິກຳ, ໂຮງງານຕັດຫຍິບ ແລະ ຂະແໜງການອຸດສະຫະກຳ. ຂະແໜງການອື່ນທີ່ສຳຄັນ ກຳລັງປະກົດຂຶ້ນ ໃນຊຸມປີໝໍ່ໆນີ້ ລວມມີການທ່ອງທ່ຽວ, ການສ້າງເຂື່ອນໄຟຟ້າ ແລະ ການຂຸດຄົ້ນບໍ່ແຮ່ ຍ້ອນມີການຫລັ່ງໄຫລ ຂອງການລົງທຶນໂດຍກົງ ຈາກຕ່າງປະເທດທີ່ເພີ່ມຂຶ້ນ. ດັ່ງທີ່ຂະແໜງການນີ້ສືບຕໍ່ຂະຫຍາຍໂຕ, ຄວາມກົດດັນຕໍ່ກັບ ຊັບພະຍາກອນ ທຳມະຊາດຂອງປະເທດ ກໍ່ຈະຂະຫຍາຍຕົວເຊັ່ນກັນ ແລະ ຈະກໍ່ໃຫ້ເກີດມີຄວາມຕ້ອງການເພື່ອສ້າງນະໂຍບາຍ ແລະ ກົດລະບຽບທີ່ດີເພື່ອຮັບປະກັນໃຫ້ມີ ການນຳໃຊ້ທີ່ຍືນຍົງ ແລະ ສະເໝີພາບ. ຄວາມຈິງແລ້ວ, ຫລາຍພື້ນທີ່ຂອງປະເທດກຳລັງມອງເຫັນປະກົດການ ກ່ຽວພັນກັນລະຫວ່າງ ການມີສ່ວນຮ່ວມຂອງ ຂະແໜງການ ເອກະຊົນ ແລະ ການປ່ຽນແປງຂອງພູມມີປະເທດ. ຜົນປະໂຫຍດດ້ານເສດຖະກິດ ຂອງການມີສ່ວນຮ່ວມ ຈາກຂະແໜ່ງການເອກະຊົນໃນການພັດທະນາທ້ອງຖິ່ນ ກຳລັງມີຄວາມກະຈ່າງ ແຈ້ງຂຶ້ນເຊັ່ນກັນ, ແຕ່ສ່ວນພົວພັນສຳລັບຄຸນະພາບ ຂອງສະພາບແວດລ້ອມ, ການຫລຸດຜ່ອນຄວາມທຸກຍາກ ແລະ ຄຸນນະພາບສັງຄົມ ຍັງບໍ່ໄດ້ຮັບຄວາມເຂົ້າໃຈ ຢ່າງກະຈ່າງແຈ້ງ. ເຖິງຢ່າງໃດກໍ່ຕາມ, ຂະແໜງການເອກະຊົນເອງ, ລວມທັງພາກສ່ວນຕ່າງໆ ທີ່ຕາງໜ້າພວກເຂົາເຈົ້າ, ກຳລັງປະກົດຂຶ້ນເພື່ອເປັນເພື່ອນຮ່ວມງານ ທີ່ອາດເປັນໄປໄດ້ ໃນກິດຈະກຳ ອະນຸລັກ ແລະ ການພັດທະນາຕ່າງໆ.

## 4.3 ອົງການ IUCN ລາວ ແລະ ກົນໄກການປົກຄອງ

ດັ່ງທີ່ໄດ້ຊີ້ແຈ້ງໄວ້ໃນພາກ 2.3, ແຜນງານຂອງ ອົງການ IUCN ລາວ ແມ່ນອີງໃສ່ ວິງໂຄຈອນຄວາມຮູ້, ການໃຫ້ສິດອຳນາດ ແລະ ການປົກຄອງ (KEG strategy) ແລະ ຄວາມເຊື່ອທີ່ວ່າ ເມື່ອມີ ຄວາມຮູ້, ຄົນ ແລະ ສະຖາບັນການຈັດຕັ້ງ ໄດ້ຮັບສິດອຳນາດ, ພວກເຂົາເຈົ້າຈະເຂົ້າຮ່ວມໃນການຕັດສິນໃຈ ຢ່າງມີປະສິດພິຜົນຫລາຍຂຶ້ນ. ແຜນງານອົງການ IUCN ລາວ ຍັງນຳໃຊ້ກຳລັງແຮງ ທັງສອງກ້ຳສອງຝ່າຍ ຂອງແນວຄິດທີ່ວ່າ ຖ້າທຸກພາກສ່ວນໃນສັງຄົມ ສາມາດເຕົ້າໂຮມ ເພື່ອມາຕົກລົງເຫັນດີ ກ່ຽວກັບ ເປົ້າໝາຍຮ່ວມກັນ ແລະ ຊ່ວຍກັນເຮັດໃຫ້

ເປົ້າໝາຍບັນລຸຜົນເປັນຈິງ, ຜົນໄດ້ຮັບຈະມີ ຄວາມສະເໝີພາບ ຫລາຍຂຶ້ນ ແລະ ຈະປະກອບສ່ວນເຂົ້າໃນການລຶບລ້າງຄວາມທຸກຍາກ.

ໃນລະຫວ່າງ 5 ປີຜ່ານມາ, ອົງການ IUCN ລາວ ໄດ້ຊ່ວຍເພື່ອນຮ່ວມງານລັດຖະບານ ເພື່ອດຳເນີນວຽກງານຢ່າງເປັນເຈົ້າການ ໃນຂໍ້ຕົກລົງສາກົນດ້ານສິ່ງແວດລ້ອມ. ໃນປີ 2005, ອົງການ IUCN ລາວ ສະໜັບສະໜູນຜູ້ຕາງໜ້າ ຈາກອົງການ STEA ແລະ MAF ເຂົ້າຮ່ວມ ກອງປະຊຸມພາຄີ ສົນທິສັນຍາ "Ramsar" (Ramsar Conventions of the Parties "COPs") ແລະ ຊ່ວຍໃນການກະກຽມກ່ອນ ແລະ ຫລັງກອງປະຊຸມ CoP. IUCN ລາວ ຍັງຊ່ວຍລັດຖະບານ ເພີ່ມທະວີຄວາມຮັບຮູ້ ກ່ຽວກັບພື້ນທີ່ ທຳມະຊາດທີ່ສຳຄັນ. ໃນຫມໍ່ໆນີ້, ອົງການ IUCN ລາວ ໄດ້ສະໜອງຄວາມຊ່ວຍເຫລືອ ດ້ານວິຊາການ ໃຫ້ແກ່ອຳນາດການປົກຄອງຂັ້ນສູນກາງ ແລະ ຂັ້ນແຂວງ ໃນການແຕ່ງຕັ້ງພື້ນທີ່ປ່າສະຫງວນຫີນໝາມໜໍ່ ໃຫ້ກາຍເປັນພື້ນທີ່ມໍລະດົກໂລກທາງທຳມະຊາດ ແລະ ອາດເປັນໄປໄດ້ ໃນການເປັນພື້ນທີ່ ມໍລະດົກໂລກຮ່ວມຊາຍແດນ ກັບສວນອຸທະຍານຝອງຍາ-ແກບັງ, ສສ ຫວຽດ ນາມ. ປະສົບການອັນຫາປຽບບໍ່ໄດ້ນີ້ ໄດ້ນຳໄປສູ່ ການສ້າງຄວາມເຂັ້ມແຂງທາງດ້ານນະໂຍບາຍພາຍໃນປະເທດ ແລະ ເໜັ້ນໜັກໃສ່ ຄວາມຕ້ອງການເພື່ອສືບຕໍ່ວຽກນີ້.

ໂຄງການທີ່ມີຊື່ວ່າ "ໂຄງການປະເມີນຜົນ ການຄ້າ ແລະ ສິ່ງແວດລ້ອມ ແບບຮີບດ່ວນ - Rapid Trade and Environment Assessment Project" ທີ່ໄດ້ປະຕິບັດໃນປະຈຸບັນນີ້, ໄດ້ສະແດງໃຫ້ເຫັນ ຄວາມສຳຄັນຂອງວິທີການເຂົ້າຮ່ວມ ຂອງຫລາຍການຈັດຕັ້ງ ແລະ ຫລາຍຂະແໜງການ ໃນການສ້າງຄວາມເຂັ້ມແຂງ ໃນວຽກງານກົນໄກການປົກຄອງ. ອົງການ IUCN ລາວ ໄດ້ເປັນເວທີປະຊຸມ ໃຫ້ແກ່ຄະນະຊີ້ນຳຕ່າງໆ ລວມທັງ ພາກສ່ວນລົງທຶນ ແລະ ການຄ້າ ເຊັ່ນ ຄະນະກຳມະການແຜນການ ແລະ ການລົງທຶນ (CPI), ກະຊວງອຸດສະຫະກຳ ແລະ ການຄ້າ (MoIC) ແລະ ສະພາອຸດສະຫະກຳ ແລະ ການຄ້າ ລາວ ແລະ ຕົວແທນຈາກ ອົງການຊັບພະຍາກອນທຳມະຊາດ ແລະ ສະພາບແວດລ້ອມ ເຊັ່ນ: MAF ແລະ STEA. ດ້ວຍການເຮັດວຽກຮ່ວມກັນ ກ່ຽວກັບການເຊື່ອມໂຍງ ລະຫວ່າງສະພາບແວດລ້ອມ ແລະ ການຄ້າ, ກຸ່ມດັ່ງກ່າວນີ້ ໄດ້ໃຫ້ຄຳປຶກສາທີ່ຮອບດ້ານຕໍ່ກັບການພັດທະນານະໂຍບາຍທີ່ສຳຄັນ ແລະ ການສົ່ງເສີມສາຍພົວພັນ ລະຫວ່າງ ອົງການຈັດຕັ້ງເພື່ອເພີ່ມທະວີການປະສານງານ ແລະ ການຮ່ວມມືໃນອານາຄົດ.

ໂດຍຜ່ານການຈັດຕັ້ງປະຕິບັດ ກອບຍຸດທະສາດທີ່ຜ່ານມາ, ອົງການ IUCN ລາວ ໄດ້ກຳນົດຄວາມຕ້ອງການ ທີ່ຈະສືບຕໍ່ ເພື່ອເສີມສ້າງຄວາມສາມາດ ແລະ ການເຊື່ອມໂຍງ ລະຫວ່າງສະຖາບັນ ແລະ ຄວາມສຳຄັນຂອງການເໜັ້ນໜັກໃສ່ ແຜນງານທີ່ຮູບປະທຳ ແລະ ສົມຈິງສົມຈັງ ທີ່ສະໜັບສະໜູນການຕັດສິນໃຈ ທີ່ມີການມອບໂອນຄວາມຮັບຜິດຊອບ, ສ້າງຄວາມເຂັ້ມແຂງໃຫ້ວິທີການທີ່ມີລັກສະນະຮອບດ້ານ ແລະ ສົ່ງເສີມການປົກຄອງທີ່ມີຄວາມຮັບຜິດຊອບ ແລະ ກວມເອົາທຸກພາກສ່ວນໃນສັງຄົມເຂົ້າຮ່ວມ. ໃນລະຫວ່າງປີ 2007, 2011,ອົງການ IUCN ລາວ ຈະ ຈັດຕັ້ງປະຕິບັດວຽກງານເພື່ອ:

1. **ເສີມສ້າງ ແລະ ສືບຕໍ່ການປະສານງານ ລະຫ່ວາງອົງການຈັດຕັ້ງລັດ ກ່ຽວກັບນະໂຍບາຍ ແລະ ບັນຫາການຈັດຕັ້ງປະຕິບັດອັນສຳຄັນໆ [ທີ່ພົວພັນກັບປ່າສະຫງວນແຫ່ງຊາດ (NPAs), ຊີວະນາໆພັນກະເສດສາດ ແລະ ນໍ້າ]**

- ເປັນເວທີປະຊຸມ ໃຫ້ແກ່ຫລາຍຂະແໜງການ, ກຸ່ມຈັດຕັ້ງປະຕິບັດ ແລະ ເປັນກົນໄກ ເພື່ອການຮ່ວມມື ແກ້ໄຂບັນດາບັນຫາສະເພາະ
- ສະໜັບສະໜູນຄວາມພະຍາຍາມ ເພື່ອເຮັດໃຫ້ການຕັດສິນໃຈ ທີ່ໄດ້ແບ່ງຂັ້ນຄວາມຮັບຜິດຊອບ ເປັນລະບົບໃນສະຖາບັນການຈັດຕັ້ງ

2. ໃຫ້ມີການເຂົ້າຮ່ວມຢ່າງເຕັມປ່ຽມ ຈາກອົງການຈັດຕັ້ງສັງຄົມ ແລະ ຂະແໜງການເອກະຊົນ ໃນການຕັດສິນໃຈ ວຽກງານສະພາບແວດລ້ອມ
   - ຈັດກອງປະຊຸມກັບ ຜູ້ທີ່ມີສ່ວນຮ່ວມຫລາຍພາກສ່ວນ ໃນຫລາຍລະດັບ ແລະ
   - ຫລາຍຂະໜາດທີ່ແຕກ ຕ່າງກັນສະໜັບສະໜູນຄູ່ຮ່ວມງານ ເຂົ້າຮ່ວມກິດຈະກຳຕ່າງໆ

3. ຂະບວນການນະໂຍບາຍ ທີ່ໜູນໃຊ້ແຫລ່ງຂໍ້ມູນທາງດ້ານວິທະຍາສາດທີ່ຫລາກຫລາຍ
   - ເພີ່ມທະວີຄວາມສາມາດຂອງຄູ່ຮ່ວມງານ ໃນການດຳເນີນການຄົ້ນຄ້ວາ, ວິເຄາະ ແລະ ຈັດສິ່ງຂໍ້ມູນຂ່າວສານ ໃຫ້ຜູ້ຊີ້ນຳ ໃນການຕັດສິນໃຈ ແລະ ໃຫ້ປະຊາຊົນທົ່ວໄປ

4. ການຈັດຕັ້ງປະຕິບັດທີ່ມີຄວາມໂປ່ງໃສ ແລະ ຮອບດ້ານ ໃນການຮ່ວມມື ລະດັບພາກພື້ນ ແລະ ດ້ານຂໍ້ຕົກລົງຫລາຍຝ່າຍດ້ານສິ່ງແວດລ້ອມ (MEAs) ທີ່ໄດ້ເລືອກເຟັ້ນ
   - ຊ່ວຍລັດຖະບານ ສ້າງລະບົບວຽກງານ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງ/ສົນທິສັນຍາສາກົນ (ເຊັ່ນ: CBD, CITES, RAMSAR ແລະ ວຽກງານມໍລະດົກໂລກ UNESCO), ອຳນວຍຄວາມສະດວກດ້ານການສະໜັບສະໜູນຫລາຍໆດ້ານ ແລະ ການເຂົ້າຮ່ວມ

## 4.4 ການເປັນເພື່ອນຮ່ວມງານເພື່ອເສີມສ້າງການປົກຄອງ

ຫົວຂໍ້ກົນໄກການປົກຄອງ ໄດ້ຖືກຈັດວາງ ເປັນຈຸດໃຈກາງຂອງແຜນງານຂອງອົງການ IUCN ລາວ ສຳລັບປີ 2007- 2011 ເພື່ອທີ່ຈະແກ້ໄຂ ຄວາມຕ້ອງການອັນຈຳເປັນ, ເພີ່ມທະວີການມີສ່ວນຮ່ວມ, ການຮ່ວມມື ແລະ ຄວາມເຂົ້າໃຈ ກ່ຽວກັບບັນຫາການອະນຸລັກ ແລະ ການດຳລົງຊີວິດ ໃນທົ່ວທຸກຂະແໜງການ ຂອງສັງຄົມລາວ. ມັນຍັງສະທ້ອນໃຫ້ເຫັນເຖິງ ແຜນງານທີ່ເປັນເຫດຜົນຜູກມັດຕໍ່ກັບ ການພັດທະນາການເປັນສ່ວນຮ່ວມ ໄລຍະຍາວທີ່ຊ່ວຍອົງການ IUCN ລາວ ປະສົບຜົນສຳລັດ ໃນເປົ້າໝາຍທີ່ເປັນວຽກງານຫລັກຂອງອົງການ.

ຈຸດປະສົງຂອງຫົວຂໍ້ ກກົນໄກການປົກຄອງ ແລະ ຂົງເຂດວຽກງານຫລັກຢູ່ຂ້າງເທິງນັ້ນ ຈະໄດ້ຮັບຜົນສຳເລັດຜ່ານການເຂົ້າພົວພັນກັບຜູ້ມີສ່ວນຮ່ວມທີ່ສຳຄັນ 3 ຂະແໜງຂອງສັງຄົມຄື: ລັດຖະບານ, ຊຸມຊົນ ແລະ ຂະແໜງການເອກະຊົນ ແລະ ຜ່ານຫົວຂໍ້ແຜນງານອື່ນຄື: ປ່າສະຫງວນ, ນ້ຳ ແລະ ຊີວະນາໆພັນກະສິກຳ.

ແຜນວາດຢູ່ລຸ່ມນີ້ສະແດງ ໃຫ້ເຫັນວິທີທາງໃໝ່ ຂອງ ອົງການ IUCN (IUCN's refreshed approach), ວິທີທາງທີ່ອົງການ ມີການພົວພັນກັບສັງຄົມລາວ ເພື່ອຊ່ວຍຜັກດັນໃຫ້ມີຄວາມຄືບໜ້າ ແລະ ມີຜົນສຳເລັດໃນພາລະກິດຂອງຕົນ ທີ່ເປັນສັງຄົມຍຸດຕິທຳ ທີ່ເຫັນຄຸນຄ່າ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ.




ເຖິງແມ່ນວ່າອົງການ IUCN ລາວ ໄດ້ເລີ່ມຕົ້ນຂັ້ນຕອນຂະຫຍາຍສາຍຜູ້ຮ່ວມງານອອກໄປແລ້ວກໍ່ຕາມ, ການພົວພັນກັບຜູ້ຮ່ວມງານພາກລັດທີ່ສຳຄັນຍັງນອນຢູ່ໃຈກາງຂອງກິດຈະກຳແຜນງານຂອງອົງການ. ໃນເວລາດຽວກັນນີ້, ແຜນວາດຍັງສະແດງໃຫ້ເຫັນ ວິໄສທັດໃນການເພີ່ມທະວີການພົວພັນກັບໜ່ວຍງານທີ່ບໍ່ຂຶ້ນກັບລັດຖະບານ. ຈຳນວນໜຶ່ງຂອງການພົວພັນເລົ່ານີ້ແມ່ນໄດ້ລິເລີ່ມຂຶ້ນແລ້ວ. ຍຸດທະສາດນີ້ມີຈຸດປະສົງເພື່ອເຕົ້າໂຮມໜ່ວຍງານຕ່າງໆຈາກສາມຂະແໜງການເລົ່ານີ້ໂດຍຜ່ານກິດຈະກຳທີ່ມີການຮ່ວມມືກັນໃຫ້ມີລະດັບເພີ່ມທະວີຂຶ້ນ.

## 4.4.1 ກັບລັດຖະບານ

ອົງການ IUCN ລາວ ຈະສືບຕໍ່ສ້າງສາຍພົວພັນໃຫ້ເຂັ້ມແຂງ ແລະ ເສີມສ້າງການຮ່ວມມືກັບໜ່ວຍງານຂອງກະຊວງຢູ່ວຽງຈັນ. ກະຊວງກະສິກຳ ແລະ ປ່າໄມ້ (MAF) ແລະ ອົງການ ອ.ວ.ຕ.ສ (STEA) ໄດ້ເປັນຜູ້ຮ່ວມງານຫລັກແລ່ງຝ່າຍລັດຖະບານກັບອົງການ IUCN. ການພົວພັນຂອງອົງ ການ IUCN ລາວ ກັບອົງການຈັດຕັ້ງເຫລົ່ານີ້ແມ່ນອີງໃສ່ແບບແຜນການຮ່ວມມືທີ່ໜັກແໜ້ນ ແລະ ຈະນຳໃຊ້ໂອກາດຢ່າງເຕັມທີ່ເພື່ອພົນງານຮ່ວມ ກັນຂອງບຸລິມມະສິດຂອງອົງການ IUCN ລາວ ແລະ ລັດຖະບານ ລາວ.

ໃນໄລຍະຕໍ່ໄປຂອງກິດຈະກຳ, ອົງການ IUCN ລາວ ວາງແຜນສືບຕໍ່ຄວາມພະຍາຍາມຂອງຕົນເພື່ອເສີມສ້າງສາຍພົວພັນກັບອົງການຈັດຕັ້ງທີ່ສຳຄັນອື່ນເພື່ອທີ່ຈະ:

- ສືບຕໍ່ສົ່ງເສີມການເຊື່ອມໂຍງລະຫວ່າງບັນຫາດ້ານສະພາບແວດລ້ອມ ແລະ ບຸລິມະສິດຂອງລັດຖະບານໃນການວາງແຜນ ແລະ ການຈັດຕັ້ງປະຕິບັດ;
- ສ້າງຂີດຄວາມສາມາດເພື່ອຈັດຕັ້ງປະຕິບັດວຽກງານ MEAs; ແລະ

- ສ້າງຄວາມເຂັ້ມແຂງໃນການຕິດຕາມ-ກວດກາ ແລະ ນປະເມີນຜົນກະທົບດ້ານສະພາບແວດລ້ອມ.

ຄະນະກຳມະການສະພາບແວດລ້ອມແຫ່ງຊາດ (NEC), ກອງທຶນປ້ອງກັນສະພາບແວດ ລ້ອມ (Environment Protection Fund "EPF") ແລະ ອົງການທ່ອງທ່ຽວແຫ່ງຊາດ (National Tourism Administration "NTA") ມີທ່າທີ່ວ່າຈະປະກົດຂຶ້ນເປັນຜູ້ຮ່ວມງານສາຍລັດທີ່ສຳຄັນ.

ຍິ່ງໄປກ່ວານີ້, ໃນການສະໜັບສະໜູນຄວາມພະຍາຍາມແບ່ງຂັ້ນຄຸ້ມຄອງຂອງລັດຖະບານ, ການຮ່ວມມືຈາກອົງການ IUCN ລາວ ຈະກວມລວມເອົາ ຫລາຍລະດັບແຕກຕ່າງກັນ ຂອງການບໍລິຫານຄຸ້ມຄອງພາຍໃນ ອົງການຈັດຕັ້ງຂອງຜູ້ມີສ່ວນຮ່ວມຕາມທີ່ເໝາະສົມ. ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງຈະໄດ້ເຂົ້າ ກ່ຽວຂ້ອງໃນວຽກງານ ທີ່ໄດ້ຮັບການຄັດເລືອກ ໂດຍມີຈຸດປະສົງ ເພື່ອສ້າງຂີດຄວາມສາມາດໃຫ້ເຂັ້ມແຂງ ແລະ ເສີມສ້າງການໄຫລວຽນຂອງຂໍ້ມູນຂ່າວສສານ.

## 4.4.2 ກັບສະຖາບັນການສຶກສາທີ່ສູງຂຶ້ນ

ມະຫາວິທະຍາໄລແຫ່ງຊາດລາວແມ່ນສະຖາບັນຫລັກຂອງການສຶກສາຂັ້ນສູງຂຶ້ນໄປ.ການສະໜັບສະໜູນມະຫາວິທະຍາໄລແຫ່ງຊາດຈະເໜັ້ນໜັກໃສ່ການສ້າງຂີດຄວາມສາມາດ, ລວມທັງ: ການພັດທະນາຄູສອນ ແລະ ອາຈານສອນມະຫາວິທະຍາໄລ, ການປະກອບບົດບາດ ເຂົ້າໃນການພັດທະນາຫລັກສູດ, ສະໜັບສະໜູນກິດຈະກຳຄົ້ນຄ້ວ ແລະ ສ້າງບົດບາດຂອງສະຖາບັນເຫລົ່ານີ້ ໃຫ້ເຂັ້ມແຂງເປັນຜູ້ຜະລິດຂໍ້ມູນຂ່າວສານ ແລະ ການວິເຄາະທີ່ມີຄຸນນະພາບ. ຜູ້ຮ່ວມງານຫລັກລວມມີຄະນະປ່າໄມ້ (FoF), ສູນການສຶກສາສິ່ງແວດລ້ອມ ແລະ ການພັດທະນາ Centre for Environment and Development Studies (CEDS) ແລະ ຄະນະ ວິທະຍາສາດ (FoS). ນີ້ສະແດງໃຫ້ ເຫັນເຖິງວິໃສທັດ ຂອງມະຫາວິທະຍາໄລແຫ່ງຊາດ ໃນການເພີ່ມທະວີ ຄວາມສາມາດຂອງຕົນເພື່ອເຂົ້າຮ່ວມ ໃນຂົງເຂດການຕັດສິນໃຈທີ່ສຳຄັນເປັນດັ່ງສູນໃຫ້ຄວາມຮູ້ ແລະ ຂໍ້ມູນຂ່າວສານ. ອົງ ການ IUCN ລາວ ໄດ້ລົງນາມ ບົດບັນທຶກຄວາມຊົງຈຳກັບ FoF ແລະ CEDS, ເຊິ່ງຈະຮັບໃຊ້ເປັນກອບການຮ່ວມມືກັບສະຖາບັນການຈັດຕັ້ງ. ອົງການ IUCN ລາວ ກໍ່ຍັງຈະເຮັດວຽກ ຢ່າງໄກ້ສິດກັບອົງການຈັດຕັ້ງສາກົນຕ່າງໆເຊັ່ນ German Technical Agency (GTZ), Netherlands Development Organisation (SNV) ແລະ Wildlife Conservation Society (WCS) ຜູ້ທີ່ມີສ່ວນພົວພັນກັບມະຫາວິທະຍາໄລຢ່າງຕັ້ງໜ້າ.

## 4.4.3 ກັບຂະແໜງການເອກະຊົນ

ໃນ 5 ປີ ຕໍ່ໜ້ານີ້, ຜ່ານໜ່ວຍທຸລະກິດ ທີ່ກຳລັງເກີດຂຶ້ນ ແລະ ແຜນງານຊິວ ນາໆ ພັນ, ອົງການ IUCN ລາວ ກໍ່ຍັງຈະຊອກຫາກາລະໂອກາດເພື່ອຮ່ວມງານກັບສະມາຄົມ ແລະ ຫົວໜ່ວຍທຸລະກິດທີ່ສຳຄັນ ເພື່ອອຳນວຍຄວາມສະດວກ ການເຂົ້າຮ່ວມຂອງພວກເຂົາເຈົ້າ ໃນການປຶກສາຫາລື ກ່ຽວກັບບັນຫາ ການອະນຸລັກ ແລະ ການພັດທະນາ. ຕົວຢ່າງໜຶ່ງທີ່ສະແດງໃຫ້ເຫັນ ການເຂົ້າກ່ຽວຂ້ອງ ຂອງຂະແໜງການເອກະຊົນ ທີ່ເປັນໄປໄດ້ສຳລັບອົງການ IUCN ລາວ ແມ່ນແຜນການ ເພື່ອຈັດປະຊຸມກຸ່ມເຮັດວຽກຕົ້ນຢາງ (Rubber Working Group) ເຊິ່ງເຕົ້າໂຮມເອົາລັດຖະບານ, ວິສະຫະກິດ ແລະ ພາກສ່ວນຂະແໜງການເອກະຊົນ ອື່ນທີ່ກ່ຽວຂ້ອງເພື່ອແລກປ່ຽນແນວຄິດ-ບົດຮຽນ ແລະ ຂໍ້ມູນຂ່າວສານກ່ຽວກັບອານາຄົດຂອງຕົ້ນຢາງພາລາ ໃນ ສປປ

ລາວ. ນອກຈາກນີ້, ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ ແລະ ສະມາຄົມ ແລະ ກຸ່ມອຸດສະຫະກຳ 17 ແຫ່ງ ກໍ່ຍັງເປັນຕົວແທນ ຂອງຂະແໜງການເອກະຊົນ ທີ່ກຳລັງຂະຫຍາຍຕົວໃນ ສປປ ລາວ. ອົງການ IUCN ລາວ ໄດ້ເລີ່ມຕົ້ນຕິດຕໍ່ພົວພັນກັບ ໜ່ວຍງານນີ້ຜ່ານໂຄງການປະເມີນຜົນດ້ານການຄ້າ ແລະ ສິ່ງແວດລ້ອມ ແບບວ່ອງໄວ (Rapid Trade and Environment Assessment) ແລະ ຫວັງຈະ ເສີມສ້າງສາຍພົວພັນນີ້ໃນອານາຄົດ. ຜູ້ມີສ່ວນຮ່ວມຫລັກອັນອື່ນອີກ ສຳລັບການເຂົ້າພົວພັນກັບ ພາກເອກະຊົນ ສຳລັບອົງການ IUCN ລວມມີ ອົງການລັດຖະບານທີ່ໄດ້ຮັບ ການມອບໝາຍເຮັດວຽກ ກັບຂະແໜງການເອກະຊົນ ເຊັ່ນ ຄະນະກຳມະການແຜນການ ແລະ ການລົງທຶນ ແລະ ກະຊວງການຄ້າ ແລະ ອຸດສະຫະກຳ.

### 4.4.4 ກັບຜູ້ໃຫ້ທຶນສອງຝ່າຍ, ອົງການຈັດຕັ້ງສາກົນ/ບໍ່ຂຶ້ນກັບລັດຖະບານ ແລະ ອົງການພັດທະນາ

ອົງການ IUCN Lao ຈະສືບຕໍ່ພັດທະນາ ແລະ ປັບປຸງການຮ່ວມງານ ດ້ານຍຸດທະສາດຂອງຕົນກັບໜ່ວຍ ງານທີ່ສຳຄັນ ໃນອົງການຈັດຕັ້ງສາກົນ, ເພື່ອທີ່ຈະປະສານງານ ການສະໜັບສະໜູນ ໃຫ້ມີປະສິດຕິຜົນ ຫລາຍຂຶ້ນໃຫ້ແກ່ຜູ້ຮ່ວມງານຝ່າຍລາວ ເພື່ອປັບປຸງການສິ່ງຂໍ້ສະເໜີແນະ ດ້ານນະໂຍບາຍ. ຜູ້ຮ່ວມງານຫັລກ ລວມມີອົງການ Sida ແລະ ສະມາຊິກອົງການ IUCN ສາກົນ, ກອງທຶນສັດປ່າໂລກເພືອທຳມະຊາດ (World Wildlife Fund for Nature “WWF”) ແລະ ອົງການອະນຸລັກສັດປ່າ (Wildlife Conservation Society).

### 4.4.5 ກັບສະມາຄົມບໍ່ຫັວງຜົນກຳໄລ

ສະພາບຂອງປ່າສະຫງວນແຫ່ງຊາດ (NPAs) ຍັງຢູ່ໃນການກຳນົດ ແລະ ອົງ ການ IUCN Lao ວາງແຜນເພື່ອສະໜັບສະໜູນ NPAs ເພື່ອມີສ່ວນຮ່ວມໃນການປຶກສາຫາລືກ່ຽວກັບບັນ ຫາການອະນຸລັກ ແລະ ການພັດທະນາທີ່ໄດ້ຮັບການຄັດເລືອກ. ອົງການ IUCN ລາວ ມີການພົວພັນທີ່ຫາກໍ່ເກີດຂຶ້ນກັບ ສາມາຄົມພັດທະນາສິ່ງແວດລ້ອມ ເພື່ອຊຸມຊົນ Community Environment Development Association ແລະ ສາມະຄົມທະນາຍຄວາມລາວLao Bar Association.

### 4.4.6 ກັບເຄືອຄ່າຍຂອງອົງການ IUCN ຢູ່ລະດັບພາກພື້ນ ແລະ ໂລກ

ອົງການ IUCN ລາວ ນຳໃຊ້ຊັບພະຍາກອນ ດ້ານສະຖາບັນການຈັດຕັ້ງ ແລະ ດ້ານວິຊາການ ຈາກເຄືອຄ່າຍສາກົນ. ເຄືອຄ່າຍນີ້ລວມມີ ແຜນງານທີວາງໄວ້ເປັນທີວ ຂໍ້ເຊື່ອມໂຍງຫລາຍພາກສ່ວນເອີ້ນ ວ່າ: Ecosystem and Livelihood Groups and specialist IUCN commissions ໃນລະດັບໂລກ (ຈົ່ງເບິ່ງ ເອກະສານຊ້ອນ ທ້າຍ 1). ອົງການ IUCN Lao ຈະສືບຕໍ່ນຳໃຊ້ ເຄືອຄ່າຍອັນກ້ວາງຂວາງນີ້ ເພື່ອຊ່ວຍປະຕິບັດ ແຜນງານປີ 2007-11 ຂອງຕົນ.

# 5. ປ່າສະຫງວນ

ລະບົບຂອງປ່າສະຫງວນອັນຄົບຊຸດມີຢູ່ແລ້ວ ແຕ່ວ່າບັນດາປ່າສະຫງວນເຫລົ່ານີ້ຍັງຂາດການຈັດການທີ່ດີ ຫລື ຂາດປະສິດທິຜົນພຽງພໍ ແລະ ກໍ່ໃຫ້ເກີດມີຄວາມກົດດັນຕ່າງໆແກ່ຊັບພະຍາກອນທຳມະຊາດທີ່ຢູ່ໃນປ່າສະຫງວນ, ທັງສືບຕໍ່ເປັນໄພຂົ່ມຂູ່ແກ່ຄວາມສົມບູນຂອງລະບົບນິເວດ ແລະ ຄວາມໝັ້ນຄົງຂອງການດຳ ລົງຊີວິດ

## 5.1 ເປັນຫຍັງຈິ່ງເລືອກຫົວຂໍ້ປ່າສະຫງວນ?: ການສ້າງຄວາມເຂັ້ມແຂງພື້ນຖານ

ໃນຫົວຂໍ້ແຜນງານປ່າສະຫງວນຂອງອົງການ IUCN ໄດ້ກວມລວມເອົາແຜນງານທັງໝົດຊຶ່ງເປັນແຜນວຽກງານປະຕິບັດຢູ່ໃນ ຫລື ອ້ອມຂ້າງປ່າສະຫງວນຂອງ ສປປ ລາວໂດຍມີເປົ້າໝາຍຫລັກເລັ່ງໃສ່ປະຊາຊົນທີ່ເພິ່ງພາອາໃສຊັບພະຍາກອນ ທຳມະຊາດໃນເຂດປ່າສະຫງວນ. ຫົວຂໍ່ແຜນງານປ່າສະຫງວນ ຍັງປະກອບມີການຮ່ວມມືຂ້າມຊາຍແດນເພື່ອປັບປຸງການຄຸ້ມຄອງປ່າສະຫງວນລະດັບທ້ອງຖິ່ນ ແລະ ເພື່ອປັບປຸງກິດຈະກຳເຂດກັນຊົນເພື່ອປ້ອງກັນເຂດປ່າສະຫງວນແຫ່ງຊາດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

ການສ້າງຕັ້ງ ແລະ ການຮັກສາເຂດປ່າສະຫງວນຂອງຊາດໃຫ້ຄົງຕົວແມ່ນມີຄວາມສຳຄັນທີ່ສຸດເພື່ອຮັບປະກັນການອະນຸລັກຊັບພະຍາກອນ ທຳມະຊາດຂອງປະເທດ ທີ່ມີຄວາມຈຳເປັນໃຫ້ແກ່ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ແລະ ເສດຖະກິດຂອງທ້ອງຖິ່ນ ແລະ ຂອງຊາດ. ເຂດປ່າສະຫງວນ ແລະ ບໍລິເວນທີ່ຢູ່ໃກ້ຄຽງ ຍັງເປັນກົນໄກທີ່ສຳຄັນໃນ ການຄຸ້ມຄອງການນຳໃຊ້ ທີ່ດິນໃນລະດັບລະບົບນິເວດເພາະຊັບພະຍາກອນຕ່າງໆຂອງລະບົບນິເວດປ່າສະຫງວນມັກຈະກວບ/ຮ່ວມກັນກັບຊາຍແດນເມືອງ, ແຂວງ ແລະ ແມ້ແຕ່ຊາຍແດນສະຫວ່າງປະເທດ

## 5.2 ປ່າສະຫງວນຂອງ ສປປ ລາວ: ການຈັດປະເພດຄືນເພື່ອຫລາຍວັດຖຸປະສົງ

ສປປ ລາວ ມີລະບົບປ່າສະຫງວນແຫ່ງຊາດທີ່ຍັງມີອາຍຸນ້ອຍທີ່ສຸດ ແຕ່ເປັນປະເພດຄົບຊຸດທີ່ສຸດຢູ່ໃນໂລກ. ປະກອບມີປ່າສະຫງວນທັງໝົດ 20 ແຫ່ງ ຊຶ່ງໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການໃນປີ 1993 ກວມເອົາເກືອບ 14 % ຂອງເນື້ອທີ່ທົ່ວປະເທດ. ຕົວເລກດັ່ງກ່າວນີ້ໄດ້ສູງກ່ວາເປົ້າໝາຍຂອງອົງການ IUCN ສາກົນ 10 % ໃນການປົກປັກຮັກສາພື້ນທີ່ດິນໃນແຕ່ລະປະເທດ.  ທົ່ວ ສປປ ລາວໄດ້ມີຫລາຍກ່ວາ 1,100 ໝູ່ບ້ານທີ່ຕັ້ງຢູ່ໃນເຂດປ່າສະຫງວນ ແລະ ພາຍໃນບໍລິເວນໃກ້ຄຽງປ່າສະຫງວນ 5 ກິໂລແມັດ, ປະຊາຊົນຜູ້ຢູ່ອາໃສສ່ວນໃຫຍ່ແມ່ນປະເຊີນກັບບັນຫາຄວາມທຸກຍາກທີ່ສຸດ ແລະ ຕ້ອງໄດ້ຕໍ່ສູ້ກັບບັນຫາກ່ຽວກັບທີ່ດິນ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ.

ປ່າສະຫງວນແຫ່ງຊາດໄດ້ຕອບສະໜອງ ສະບຽງອາຫານ ແລະ ໂອກາດສຳລັບ ການພັດທະນາ ເສດຖະກິດໃນລະດັບຈຸລະພາກໃຫ້ແກ່ປະຊາຊົນທີ່ຢູ່ອາໃສ ໃນເຂດປ່າສະຫງວນ ແລະ ບໍລິເວນທີ່ໃກ້ຄຽງ. ບັນດາປ່າສະຫງວນໄດ້ມີບົດບາດອັນສຳຄັນ ໃນການຄ້ຳປະກັນສະບຽງອາຫານ ສຳລັບຄອບຄົວທີ່ທຸກຍາກທີ່ສຸດໂດຍສ່ວນໃຫຍ່ຕອບສະໜອງທາດອາຫານທີ່ບໍ່ແມ່ນເຂົ້າຊຶ່ງລວມມີປາ, ໜໍ່ໄມ້, ຜັກສົດ, ມັນປ່າ ແລະ ຈຳພວກສັດທີ່ບໍ່ມີກະດູກສັນຫລັງ ເຊັ່ນ ຫອຍ, ດ້ວງ ແລະ ແມງໄມ້ຊະນິດຕ່າງໆເປັນຕົ້ນ. ນອກຈາກນີ້ ບັນດາເຄື່ອງປ່າຂອງດົງປະ

ເພດຕ່າງໆເຊັ່ນ : ໜໍ່ໄມ້ ແລະ ຫວາຍ ຍັງສະໜອງໃນປະລິມານໜ້ອຍແຕ່ກໍ່ເປັນລາຍໄດ້ທີ່ສຳຄັນໃນທ້ອງຖິ່ນ. ການໃຫ້ການບໍລິການດ້ານລະບົບນິເວດເຊັ່ນ: ການປົກປັກຮັກສາແຫລ່ງນ້ຳກໍ່ເປັນປະໂຫຍດຢ່າງຫລວງຫລາຍ ໃນການປ້ອງກັນ ແລະ ຄວບຄຸມໄພນ້ຳຖ້ວມ, ການສະໜອງນ້ຳໃນລະດັບບ້ານ, ຊົນລະປະທານ, ການຄວບຄຸມການຕົກຕະກອນດິນຊຶ່ງຊ່ວຍປະກອບໃຫ້ແກ່ການການດຳເນີນງານ ຂອງເຂື່ອນໄຟຟ້ານ້ຳຕົກ.

ຫລາຍຂະແໜງການທີ່ເກີດຂຶ້ນໃໝ່ ເຊິ່ງອາໃສຊັບພະຍາກອນຂອງປ່າສະຫງວນເຊັ່ນ ການທ່ອງທ່ຽວທຳມະຊາດ, ການເກັບກູ້ເຄື່ອງປ່າຂອງດົງແບບຍືນຍົງ ແລະ ຊີວະນາໆພັນຊຶ່ງເປັນຂອດສຳຄັນໃຫ້ແກ່ການພັດທະນາປະເທດຊາດ. ຕົວຢ່າງ: ການທ່ອງທ່ຽວທຳມະຊາດຢູ່ ສປປ ລາວໄດ້ມີບາດກ້າວຂະຫຍາຍຕົວໃນການສ້າງພາບພົດຂອງປະເທດທີ່ເປັນເຂດອັນຍະມະນີສີຂຽວຂອງແມ່ນ້ຳຂອງ ແລະ ຈາກການບໍລິການ ແລະ ຂະຫຍາຍ ຕົວຈາກຜະລິດຕະພັນທີ່ອອກສູ່ຕະຫລາດໄດ້ ແລະ ການບໍລິການຕ່າງໆທີ່ໄດ້ມາຈາກຊັບພະຍາກອນທີ່ຢູ່ໃນ ເຂດ ແລະ ເຂດອ້ອມແອ້ມປ່າສະຫງວນ. ການຄົ້ນຄວ້າຂອງລັດຖະບານໄດ້ສະແດງໃຫ້ເຫັນວ່າຫລາຍກ່ວາເຄິ່ງໜຶ່ງຂອງຜູ້ທີ່ເຂົ້າມາ ສປປ ລາວໄດ້ມີຄວາມສົນໃຈກັບສະພາບແວດລ້ອມທຳມະຊາດ. ຖ້າຫາກເປັນໄປຕາມເປົ້າໝາຍທີ່ຄາດກະໄວ້ວຽກງານການທ່ອງທ່ຽວສາມາດນຳລາຍໄດ້ສະເລ່ຍຕໍ່ປີປະມານ 500 ລ້ານໂດລາສະຫະລັດຮອດປີ 2010, ແລະ ຮັບປະກັນວ່າການທ່ອງທ່ຽວຈະສືບຕໍ່ເປັນໜຶ່ງຂອງຂະແໜງການທີ່ມີຄວາມສຳຄັນທີ່ສຸດສຳລັບເສດຖະກິດຂອງ ສປປ ລາວ.

ຍຸດທະສາດຂອງຊາດທີ່ສຳຄັນຫລາຍສະບັບ ໄດ້ຍອມຮັບວ່າ ປ່າສະຫງວນແຫ່ງຊາດ ໄດ້ປະກອບສ່ວນອັນໃຫຍ່ຫລວງໃຫ້ແກ່ ສປປ ລາວ. ຍຸດທະສາດເລົ່ານີ້ລວມມີຍຸດທະສາດການລຶບລ້າງຄວາມທຸກຍາກເພື່ອການຈະເລີນເຕີບໂຕແຫ່ງຊາດ, ຍຸດທະສາດປ່າໄມ້ເຖິງປີ 2020, ແລະ ຍຸດທະສາດການທ່ອງທ່ຽວທຳມະຊາດແຫ່ງຊາດ ແລະ ແຜນປະຕິບັດງານ (2005-2010). ບັນດານະໂຍບາຍເຫລົ່ານີ້ໄດ້ເປັນໂອກາດໃຫ້ແກ່ອົງການ IUCN ລາວ ເພື່ອສ້າງຄວາມເປັນໜຶ່ງ ແລະ ປະກອບສ່ວນຢ່າງຈິງຈັງໃຫ້ແກ່ການປະຕິບັດວຽກງານປ່າສະຫງວນໃນ ສປປ ລາວ ຢ່າງມີປະສິດຖິຜົນ. ການເພີ່ມຂຶ້ນຂອງໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງຂອງປ່າສະຫງວນແຫ່ງຊາດ ຊຶ່ງລວມມີ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ, ການບຸກລຸກເນື້ອທີ່ເພື່ອກະສິກຳ, ການຂຸດຄົ້ນເຄື່ອງປ່າຂອງດົງເກີນຂອບເຂດ ແລະ ບໍ່ມີຄວາມຍືນຍົງ, ການລ່າສັດຜິດກົດໝາຍເຮັດໃຫ້ ການຈັດຕັ້ງປະຕິບັດບັນດາຍຸດທະສາດເຫລົ່ານີ້ຍິ່ງມີຄວາມສຳຄັນ.

ຍິ່ງໄປກ່ວານີ້, ໃນຂະນະທີ່ການສ້າງລະບົບປ່າສະຫງວນໄດ້ມີຜົນສຳເລັດຢ່າງຫລວງຫລາຍ, ປະຈຸບັນເກີດມີບັນຫາຫລາຍອັນດ້ານການຄຸ້ມຄອງທີ່ເກີດຈາກຄວາມຕ້ອງໃນການຄຸ້ມຄອງປ່າສະຫງວນໃຫ້ໄດ້ຜົນສູງ ແລະ ເກີດຈາກຊັບພະຍາກອນທີ່ຍັງມີໜ້ອຍ ແລະ ຂາດປະສິດຖິຜົນ.   ໃນປີ 2003 ທີ່ຜ່ານມານີ້ ການທົບທວນຄືນກ່ຽວກັບການພັດທະນາປ່າສະຫງວນ ເຊິ່ງໄດ້ສະແດງໃຫ້ເຫັນຢ່າງຊັດເຈນວ່າເກືອບທຸກປ່າສະຫງວນໃນ ສປປ ລາວ ສາມາດຈັດເປັນປະເພດດຽວສ້າງຂຶ້ນເພື່ອການນຳໃຊ້ລະບົບນິເວດທຳມະຊາດແບບຍືນຍົງ, ບັນດາຜູ້ຮັບຜິດຊອບປ່າສະຫງວນແຫ່ງຊາດໄດ້ປະເຊີນກັບບັນຫາຍຸດທະສາດ ແລະ ການຄຸ້ມຄອງ ໃນແຕ່ລະມື້ເພາະພະຍາຍາມຄຸ້ມຄອງເນື້ອທີ່ທີ່ກວ້າງໃຫຍ່ໄພສານໂດຍນຳໃຊ້ຈຸດປະສົງການຄຸ້ມຄອງທີ່ມີຄວາມໝາຍບໍ່ຊັດເຈນ ແລະ ບໍ່ມີການປ່ຽນແປງ ແລະ ປະຊົນຢູ່ທ້ອງຖິ່ນຍັງບໍ່ທັນເຂົ້າໃຈແຈ້ງກ່ຽວກັບວິທີການການນຳໃຊ້ຊັບພະຍາກອນແບບຍືນຍົງ. ບັນຫາຂອງຂະບວນການນີ້ສາມາດປັບປຸງໃຫ້ດີຂຶ້ນໄດ້ໂດຍການສ້າງຍຸດທະສາດການຄຸ້ມຄອງລະບົບປ່າສະຫງວນແຫ່ງຊາດທີ່ມີຢູ່ມີຄວາມຊັດເຈນ ແລະ ເປັນຫລາຍຮູບຫລາຍແບບ.

**ການຄຸ້ມຄອງປ່າສະຫງວນຂອງອົງການ IUCN ມີ 6 ປະເພດຄື:**

ນິຍາມປ່າສະຫງວນ: ແມ່ນເນື້ອທີ່ດິນ ແລະ/ຫລື ທະເລຕອນນຶ່ງທີ່ໄດ້ຖືກໝາຍໄວ້ເປັນບ່ອນສະເພາະເພື່ອການປົກປັກຮັກສາ ແລະ ຮັກສາຊີວະນາໆພັນ ແລະ ທຳມະຊາດ ແລະ ຊັບພະຍາກອນທາງວັດທະທີ່ກ່ຽວຂ້ອງໃຫ້ຄົງຢູ່ ແລະ ເນື້ອທີ່ດັ່ງກ່າວໄດ້ຖືກຄຸ້ມຄອງໂດຍກົດໝາຍ ແລະ ວິທີການທີ່ມີປະສິດຖິຜົນອື່ນໆ.

**ປະເພດ 1a –** ເຂດສະຫງວນທຳມະຊາດທີ່ເຂັ່ງຄັດ: ການຄຸ້ມຄອງປ່າສະຫງວນມີຈຸດປະສົງຫລັກສຳລັບການຄົ້ນຄ້ວາທາງວິທະຍາສາດ

**ປະເພດ 1b –** ເຂດພູມສັນຖານທີ່ກວ້າງໃຫຍ່ໄພສານ: ການຄຸ້ມຄອງປ່າສະຫງວນທີ່ມີຈຸດປະສົງຫລັກເພື່ອການເພື່ອການປົກປັກຮັກສາເນື້ອທີ່ດັ່ງກ່າວ

**ປະເພດ 2 –** ອຸທະຍານແຫ່ງຊາດ: ການຄຸ້ມຄອງປ່າສະຫງວນທີ່ມີຈຸດປະສົງຫລັກສຳລັບການປ້ອງກັນລະບົບນິເວດ ແລະ ສະຖານທີ່ພັກຜ່ອນ

**ປະເພດ 3 –** ສະຖານທຳມະຊາດທີ່ມີຄວາມສຳຄັນທາງປະຫວັດສາດ: ການຄຸ້ມຄອງປ່າສະຫງວນ ທີ່ມີວັດຖຸປະສົງຫລັກ ສຳລັບການອະນຸລັກທຳມະຊາດ ໂດຍສະເພາະ

**ປະເພດ 4 –** ເຂດຄຸ້ມຄອງຊະນິດພັນ ແລະ ຖິ່ນທີ່ຢູ່ອາໄສ: ການຄຸ້ຄອງປ່າສະຫງວນທີ່ມີຈຸດປະສົງຫລັກສຳລັບການອະນຸລັກໂດຍການແນະນຳວິທີການການຄຸ້ມຄອງ

**ປະເພດ 5 –** ເຂດອະນຸລັກພູມສັນຖານໜ້າດິນ/ພູມສັນຖານທະເລ: ການຄຸ້ມຄອງປ່າສະຫງວນທີ່ມີຈຸດປະສົງຫລັກສຳລັບການອະນຸລັກພູມສັນຖານໜ້າດິນ/ທາງທະເລ ແລະ ສະຖານທີ່ພັກຜ່ອນ

**ປະເພດ 6 –** ເຂດປ່າສະຫງວນອະນຸລັກຊັບພະຍາກອນ: ການຄຸ້ມຄອງປ່າສະຫງວນທີ່ມີຈຸດປະສົງຫລັກສຳລັບການນຳໃຊ້ລະບົບນິເວດທາງທຳມະຊາດແບບຍືນຍົງ.

ແຫລ່ງຂໍ້ມູນ: ຄະນະກຳມະການອົງການ IUCN ສາກົນ ດ້ານປ່າສະຫງວນປີ 2006.

## 5.3 ອົງການ IUCN ລາວ ແລະ ແຜນງານປ່າສະຫງວນ

ອົງການ IUCN ລາວໄດ້ເຂົ້າຮ່ວມໃນວຽກງານປ່າສະຫງວນຕັ້ງແຕ່ໄລຍະລິເລີ່ມໂດຍກ່ອນອື່ນໝົດປະກອບເປັນທີ່ປຶກສາທາງດ້ານວິຊາການ ແລະ ສະໜັບສະໜູນໃນການອອກແບບ ແລະ ສ້າງຕັ້ງລະບົບປ່າສະຫງວນ ແຫ່ງຊາດໃນຊຸມປີ 1980. ໃນໄລຍະ 5 ປີ ຜ່ານມາ, ກໍ່ໄດ້ມີຄວາມກະຈ່າງແຈ້ງຂຶ້ນວ່າວິທີທາງໃນປັດຈຸບັນ ທີ່ໃຊ້ເຂົ້າໃນການສະໜັບສະໜູນປ່າສະຫງວນແຫ່ງຊາດບໍ່ທັນກັບຄວາມກົດດັນທີ່ເພີ່ມທະວີຂຶ້ນ. ດັ່ງນັ້ນ, ແຜນງານປັດຈຸບັນແມ່ນຄວາມພະຍາຍາມເພື່ອຊອກຫາວິທີທາງໃນການປັບປຸງວຽກງານປ່າສະຫງວນໃນ ສປປ ລາວ ໃຫ້ເຂັ້ມແຂງດ້ວຍນຳໃຊ້ວິທີທາງແບບ Refreshed ແລະ ສາມາດເຮັດໄດ້.

ໃນໄລຍະຜ່ານມາຫລາຍກ່ວາ 5 ປີ ອົງການ IUCN ລາວ ໄດ້ມີປະສົບປະການຕົວຈິງຢ່າງຫລວງຫລາຍ ໃນການປັບປຸງກົນໄກ ການຄຸ້ມຄອງບໍລິຫານປ່າສະຫງວນໂດຍການພັດທະນາ ແລະ ທົດສອບຮູບແບບຂອງການ ອະນຸລັກ ແລະ ການພັດທະນາແບບປະສົມປະສານ, ໃຫ້ການຊ່ວຍເຫລືອເພື່ອເສີມສ້າງຄວາມເຂັ້ມແຂງຂອງ ສະຖາບັນການຈັດຕັ້ງ ແລະ ຄວາມສາມາດຂອງບຸກຄະລາກອນໃນການຄຸ້ມຄອງປ່າສະຫງວນ ແລະ ຍັງໄດ້ສະ ໜອງທີ່ປຶກສາດ້ານວິຊາການກ່ຽວກັບກົດໝາຍ ແລະ ການສ້າງກອບນະໂຍບາຍສຳລັບການຄຸ້ມຄອງປ່າສະ ຫງວນ. ໃນໄລຍະມໍ່ໆນີ້, ອົງການ IUCN ໄດ້ເປັນຄູ່ຮ່ວມງານກັບຜູ້ມີສ່ວນຮ່ວມໃນລະດັບສູນກາງ, ແຂວງ, ເມືອງ ແລະ

ທ້ອງຖິ່ນໃນການຈັດກອງປະຊຸມຫລາຍລະດັບເພື່ອປຶກສາຫາລືກ່ຽວກັບບັນຫາທີ່ພົວພັນກັບວຽກ ງານປ່າສະຫງວນໃນ ສປປ ລາວ. ໄດມີຄວາມເຫັນເປັນເອກະພາບກັນວ່າບັນຫາສິ່ງທ້າທາຍໃນການຄຸ້ມຄອງ ທີ່ໄດ້ກ່າວມາຂ້າງເທິງນັ້ນຈຳເປັນຕ້ອງມີການຮ່ວມມືກັນ ເພື່ອທົບທວນຄືນລະບົບປ່າສະຫງວນແຫ່ງຊາດ ໃນຮູບການທີ່ຄົບຊຸດ ແລະ ຊອກຫາວິທີທາງທີ່ທັນສະໄໝ ແລະ ປະດິດສ້າງເພື່ອຊຸກຍູ້ໃຫ້ວຽກງານດັ່ງກ່າວກ້າວໜ້າຕໍ່ ໄປ.

ອົງການ IUCN ລາວຈະເລີ່ມຕົ້ນການໃຫ້ຄວາມກະຈ່າງແຈ້ງກ່ຽວກັບລະບົບປ່າສະຫງວນແຫ່ງຊາດຂອງ ສປປ ລາວໂດຍອີງໃສ່ມາດຕະຖານການຈັດປະເພດປ່າສະຫງວນໂດຍອົງການ IUCN. ອົງການ IUCN ລາວ ຈະພະຍາຍາມເພີ່ມທະວີປະສິດຕິຜົນການຄຸ້ມຄອງ, ສິ່ງເສີມວຽກງານການອະນຸລັກໃຫ້ຢູ່ໃນລະດັບທີ່ເຮັດໄດ້ ແລະ ທັງ ປະກອບສ່ວນເຂົ້າໃນການລົບລ້າງຄວາມທຸກຍາກ ໃນລະດັບທ້ອງຖິ່ນດ້ວຍວິທີການທີ່ເໝາະສົມກັບຄວາມອາດ ສາມາດຂອງລັດຖະບານທີ່ມີຢູ່.

## 5.4 ທິດທາງຍຸດທະສາດ ແລະ ຈຸດປະສົງຂອງວຽກງານປ່າສະຫງວນ

ອົງການ IUCN ລາວໄດ້ປັບປຸງເປົ້າໝາຍຂອງຕົນກ່ຽວກັບການຄຸ້ມຄອງປ່າສະຫງວນທີ່ມີຫລາຍກວ່າສອງທົດສະຫວັດພາຍຫລັງທີ່ໄດ້ມີບົດບາດຫລັກໃນການລິເລີ້ມໃນການສ້າງຕັ້ງປ່າສະຫງວນ. ຈຸດປະສົງຫລັກລວມມີ:

1. ລະບົບການ ປ່າສະຫງວນແຫ່ງຊາດທີ່ມີປະສິດຖິຜົນ ໂດຍເໜັ້ນໃສ່ຄວາມຕ້ອງຂອງ ການອະນຸລັກອັນສະ ເພາະຂອງແຕ່ລະປ່າສະຫງວນ ແລະ ສະໜັບສະໜູນການເຂົ້າຮ່ວມຢ່າງເຕັມທີ່ຂອງຊຸມຊົນໃນທ້ອງຖິ່ນ.
    - ນຳໃຊ້ຮູບແບບປະເພດປ່າສະຫງວນແຫ່ງຊາດຂອງອົງການ IUCN, ລວມທັງທົບທວນປະສົບປະການ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສ້າງຄວາມຊັດເຈນໃນຈຸດປະສົງສຳລັບປ່າສະຫງວນແຕ່ລະ ແຫ່ງຂອງສປປ ລາວ ແລະ ສະໜັບສະໜູນການສ້າງຄວາມສາມາດໃນການຄຸ້ມຄອງ.
    - ທົດສອບ, ສ້າງເປັນເອກະສານ ແລະ ເຜີຍແຜ່ຕົວຢ່າງບົດຮຽນໃນການຄຸ້ມຄອງຮ່ວມທີ່ມີປະສິດທິຜົນ.
    - ຄົ້ນຄິດ ແລະ ທົດລອງວິທີການ ແລະ ການຮ່ວມງານທີ່ໄດ້ປັບປຸງໃໝ່ (ເຊັ່ນຕົວຢ່າງ: ຂະແໜງການເອ ກະຊົນ) ຢູ່ທີ່ລະດັບແຂວງ ແລະ ເມືອງທີ່ແນໃສ່ເພື່ອປະເຊີນກັບສິ່ງທ້າທາຍດ້ານຊັບພະຍາກອນມະນຸດ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ.

2. ສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມເຊື່ອມໂຍງກັນລະຫວ່າງການລົບລ້າງຄວາມທຸກຍາກ ແລະ ການ ອະນຸລັກເພື່ອນຳເຂົ້າສູ່ການຕັດສິນໃຈ.
    - ສະແດງໃຫ້ເຫັນຄວາມເຊື່ອມໂຍງດັ່ງກ່າວໂດຍການປະຕິບັດກິດຈະກຳພາກສະໜາມ, ເຜີຍແຜ່ຂໍ້ມູນ ໃຫ້ແກ່ຜູ້ມີອຳນາດໃນການຕັດສິນໃຈ ແລະ ປະຊາຊົນທົ່ວໄປ, ຜັນຂະຫຍາຍຄວາມເຂົ້າໃຈ ແລະ ບົດ ຮຽນທີ່ ຖອດຖອນໄດ້.

3. ມີຄວາມໝັ້ນຄົງທາງດ້ານງົບປະມານການເງິນ ແລະ ລະບົບປ່າສະຫງວນທີ່ຍືນຍົງ

- ຟື້ນຟູພັນທະຂອງບັນດາຜູ້ໃຫ້ທຶນ ຕໍ່ກັບວຽກງານປ່າສະຫງວນຄືນມາ.
- ສ້າງກົນໄກຂຶ້ນໃໝ່ເພື່ອໃຫ້ທຶນປ່າສະຫງວນແຫ່ງຊາດ(ເຊື່ອມໂຍງກັບກົນໄກການໃຫ້ທຶນແຫລ່ງນໍ້າພາຍໃຕ້ແຜນງານ "ນໍ້າ")

## 5.5 ບັນດາຄູ່ຮ່ວມງານຫລັກ: ວຽກງານປ່າສະຫງວນ

ບັນດາຄູ່ຮ່ວມງານຫລັກຂອງ ອົງການ IUCN ໃນຂົງເຂດວຽກງານດັ່ງກ່າວໄດ້ກໍານົດເອົາກອງອະນຸລັກຊັບພະຍາກອນທໍາມະຊາດທີ່ສັງກັດຢູ່ກົມປ່າໄມ້ກະຊວງກະສິກໍາ ແລະ ປ່າໄມ້; ຄະນະກໍາມະການຊີ້ນໍາການຈັດຕັ້ງປະຕິບັດຍຸດທະສາດປ່າໄມ້ປີ 2020; ຄະນະປ່າໄມ້ຂອງມະຫາວິທະຍາໄລແຫ່ງຊາດ; ພະແນກກະສິກໍາ ແລະ ປ່າໄມ້ແຂວງ/ຫ້ອງການສິ່ງເສີມກະສິກໍາ ແລະ ປ່າໄມ້ເມືອງທີ່ກ່ຽວຂ້ອງລວມທັງຊຸມຊົນທີ່ຢູ່ອາໃສໃນບໍລິເວນໃກ້ຄຽງປ່າສະຫງວນແຫ່ງຊາດ 20 ແຫ່ງອີກດ້ວຍ. ອົງການ IUCN ຈະໄດ້ໝູນໃຊ້ຊັບພະຍາກອນຂອງຕົນເພື່ອ ປະສານສົມທົບກັບອົງການຈັດຕັ້ງອື່ນໆທີ່ເກີດຂຶ້ນໃໝ່ເຊັ່ນອົງການທ່ອງທ່ຽວແຫ່ງຊາດ, ອົງການຈັດສັນທີ່ດິນເປັນຕົ້ນ.

ໃນຂົງເຂດພາກພື້ນ, ແຜນງານປ່າສະຫງວນຂອງອົງການ IUCN ລາວຈະສືບຕໍ່ໝູນໃຊ້ການສະໜັບສະໜູນຈາກໜ່ວຍງານລະບົບນິເວດ ແລະ ການດໍາລົງຊີວິດຕັ້ງຢູ່ສໍານັກງານອົງການ IUCN ປະຈໍາພາກພື້ນອາຊີຊຶ່ງໃຫ້ການຊ່ວຍເຫລືອດ້ານວິຊາການ ແລະ ຈະນໍາໃຊ້ຄວາມຊ່ວຍເຫລືອດ້ານວິຊາການຈາກຊ່ຽວຊານປ່າໄມ້, ປ່າສະຫງວນ, ຊີວະນາໆພັນ, ເສດຖະກິດ ແລະ ກົດໝາຍສິ່ງແວດ. ຍັງຈະໄດ້ຂໍການສະໜັບສະໜູນຈາກແຜນງານປ່າສະຫງວນໃນລະດັບໂລກຂອງອົງການ IUCN ແລະ ຄະນະກໍາມາທິການໂລກດ້ານປ່າສະຫງວນເພື່ອຊ່ວຍວຽກງານີ້ເມື່ອມີຄວາມຈໍາເປັນ.

# 6. ຊີວະນາໆພັນກະສິກຳ

ຊີວະນາໆພັນກະສິກຳໃນສະພາບພື້ນທີ່ຂອງ ສປປ ລາວຈະສືບຕໍ່ເປັນກຸນແຈສຳຄັນສຳລັບການດຳລົງຊີວິດຂອງຊຸມຊົນທ້ອງຖິ່ນແຕ່ຄວາມຕ້ອງການຂອງຕະຫລາດທີ່ເພີ່ມຂື້ນ ແລະ ຄວາມຮູ້ ແລະ ການວາງ ແຜນຍັງບໍ່ທັນພຽງພໍແມ່ນ ສິ່ງພັກເດັນການຂຸດຄົ້ນ ທີ່ບໍ່ມີຄວາມຍືນຍົງເຊິ່ງເປັນໄພຂົ່ມຂູ່ຕໍ່ການບໍລິການ ແລະ ຜົນຜະລິດຂອງລະບົບນິເວດ ແລະ ຕໍ່ການນຳໃຊ້ການບໍລິການ ແລະ ຜົນຜະລິດຂອງລະບົບນິເວດທີ່ ເທົ່າທຽມ.

## 6.1 ເປັນຫຍັງຈຶ່ງເລືອກຫົວຂໍ້ ຊີວະນາໆພັນກະສິກຳ? ຄວາມຫລາກຫລາຍດ້ານພືດພັນ ແລະ ລັກສະນະ ພູມສັນຖານສຳລັບດຳເນີນງານ

ຊີວະນາໆພັນກະສິກຳແມ່ນສິ່ງທີ່ມີຊີວິດຕ່າງໆຊຶ່ງປະກອບສ່ວນເຂົ້າໃນຄວາມຍືນຍົງຂອງຊັບພະຍາກອນທາງດ້ານສະບຽງອາຫານແລະ ການກະສິກຳ. ມັນກວມລວມເອົາທຸກທຸກໆທີ່ປະກອບສ່ວນໃນອາຫານໂພສະນາການ, ການດຳລົງຊີວິດແລະ ການຮັກສາທີ່ຢູ່ອາໃສໃຫ້ຄືງເດີມ. ບາງນິຍາມຂອງຊີວະນາໆພັນ ກະສິກຳຍັງກວມເອົາຊະນິດພັນສັດເຊັ່ນ: ສັດຈຳພວກກະຈາຍພັນພືດທີ່ປະສົມດ້ວຍລະອອງ, ສັດລ້ຽງຢູ່ຟາມ. ແຕ່ຄວາມໝາຍຂອງຊີວະນາໆພັນກະສິກຳຂອງອົງການ IUCNລາວແລ້ວແມ່ນໃສ່ພຽງແຕ່ຊະນິດພັນພືດເທົ່ານັ້ນ (FAO 1998) ຊຶ່ງລວມມີ:

- ພືດປູກ
- ພັນພືດປ່າ
- ຊະນິດພັນທີ່ຍັງບໍ່ມີການຂຸດຄົ້ນ ທີ່ນອນຢູ່ໃນລະບົບນິເວດການກະສິກຳ /Nonharvested species within ecosystems
- ຊະນິດພັນທີ່ຍັງບໍ່ມີການຂຸດຄົ້ນທີ່ຢູ່ໃນສິ່ງແວດລ້ອມອັນກ້ວາງຂວາງອື່ນ/Nonharvested species in the wider environment.

ຊີວະນາໆກະສິກຳສະໜອງອາຫານທີ່ມີໂພສະນາການໃຫ້ແກ່ມວນມະນຸດ ແລະ ຜະລິດຕະພັນອື່ນໆທີ່ພົວພັນກັບຊັບພະຍາກອນທຳມະຊາດເຊິ່ງການດຳລົງຊີວິດເພິ່ງພາອາໄສ. ການຄຸ້ມຄອງຊີວະນາໆພັນກະສິກຳແບບຍືນຍົງຈະຊ່ວຍຮັກສາເນື້ອທີ່ດິນ ແລະ ນ້ຳທີ່ຄ້ຳຊູນຜົນຜະລິດ ແລະ ຮັບປະກັນການໃຫ້ການບໍລິການຂອງລະບົບນິເວດທາງຊີວະວິທະຍາເຊັ່ນການກັ່ນຕອງທາດກາກບອນ ແລະ ເຮັດໃຫ້ແຫລ່ງນ້ຳສະອາດ.

## 6.2 ຊີວະນາໆພັນການກະສິກຳຂອງ ສປປ ລາວ: ຮາກຖານໃຫ້ແກ່ການດຳລົງຊີວິດ ແລະ ລະບົບນິເວດ

ຊີວະນາໆພັນທີ່ອຸດົມຮັ່ງມີຂອງສປປ ລາວໄດ້ມີບົດບາດສຳຄັນທັງເປັນທົວທັດທຳມະຊາດທີ່ສວຍງາມຊຶ່ງຫາທີ່ປຽບບໍ່ໄດ້ຂອງປະເທດ ແລະ ໃນການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າປະມານ 6 ລ້ານຄົນ. ໃນລະດັບຊາດໂດຍການປະເມີນຄຸນຄ່າທາງກົງຢ່າງດຽວຊີວະນາໆພັນມີມູນຄ່າປະມານ 650 ລ້ານໂດລາສະຫະລັດຕໍ່ປີ. ຊະນິດພັນເຄື່ອງປ່າຂອງດົງ (ຕົວຢ່າງ: ໜໍ່ໄມ້, ຫວາຍ, ແລະ ນ້ຳມັນຍາງ) ກໍ່ໄດ້ມີບົດບາດອັນສຳຄັນດ້ານສະບຽງອາຫານສຳລັບຄອບຄົວທີ່ທຸກຍາກທີ່ສຸດໃນ ສປປ ລາວ ແລະ ເຂົາເຈົ້າໄດ້ນຳໃຊ້ເພື່ອເປັນຢາ

ປົວພະຍາດ, ໃນພິທີກຳຕາມຮີດຄອງປະເພນີ, ແລະ ຄ້າຂາຍ.  ໃນລະດັບຊາດ, ເຄື່ອງປ່າຂອງດົງ ສາມາດຄິດໄລ່ເປັນມູນຄ່າປະມານ 320 ໂດລາສະຫະລັດຕໍ່ປີ ສຳລັບຄົວເຮືອນໜຶ່ງໃນຊົນນະບົດ,ໃນນັ້ນ 44 % ເພື່ອການຊົມໃຊ້, 55 % ເປັນລາຍຮັບ ແລະ ປະກອບເປັນ 46 % ຂອງທັງໝົດເສດຖະກິດໃນຄອບຄົວ (Emerton 2005).

ຊີວະນາໆພັນແມ່ນຍັງມີຄວາມສຳຄັນທີ່ສຸດ ຕໍ່ກັບວຽກງານການກະສິກຳຊຶ່ງເປັນຂະແໜງການທີ່ໃຫຍ່ທີ່ສຸດດ້ານເສດຖະກິດຂອງ ສປປ ລາວ  ແລະ ມີຜົນກະທົບຢ່າງກວ້າງຂວາງຕໍ່ການນຳໃຊ້ທີ່ດິນ, ເນື້ອທີ່ປ່າໄມ້ປົກຫຸ້ມ, ການສ້າງລາຍຮັບ, ການນຳໃຊ້ນ້ຳ ແລະ ການໝູນວຽນຂອງສິ່ງແວດລ້ອມ. ໃນ 5 ປີທີ່ຜ່ານມາການລິເລີ່ມຂອງທັງ ລັດຖະບານ ແລະ ຂະແໜງການທຸລະກິດໄດ້ມອງເຫັນຄວາມສຳຄັນຂອງການກະສິກຳໃນການການສ້າງລາຍ ຮັບ ແລະ ຜົນປະໂຫຍດຕ່າງໆໂດຍການສົ່ງເສີມການສົ່ງອອກກາເຟ ແລະ ຊາ, ການປູກຢາງພາລາ, ປູກໄມ້ ໃຫ້ໝາກ ແລະ ຜະຫລິດພືດຜັກອື່ນໆ.

ຜົນຂອງການສຶກສາຫວ່າງບໍ່ດົນມານີ້ໄດ້ສະເໜີແນະວ່າ ຊີວະນາໆພັນຍັງໄດ້ຖືກ ປະເມີນຄຸນຄ່າຕ່ຳໃນສະຖິຕິເສດຖະກິດລະດັບຊາດ, ໃນການຕັດສິນໃຈການພັດທະນາ. ສະພາບການດັ່ງກ່າວກຳລັງມີການປ່ຽນແປງ ແລະຊັບພະຍາກອນໄດ້ຖືກຮັບຮູ້ຢ່າງຫລວງຫລາຍໂດຍລັດຖະບານຂອງ ສປປ ລາວວ່າເປັນຊັບພະຍາກອນຫລັກສຳລັບການຮັກສາຄວາມອຸດົມສົມບູນດ້ານສະພາບແວດລ້ອມຂອງຊາດ ແລະ ການລົບລ້າງຄວາມທຸກຍາກ. ໃນຍຸດທະສາດແຫ່ງຊາດກ່ຽວກັບຊີວະນາໆພັນຮອດປີ 2020 ແລະ ແຜນປະຕິບັດເຖິງປີ 2010 ໄດ້ເໜັ້ນໃສ່ການອະນຸລັກ ແລະ ຄຸ້ມຄອງຊີວະນາໆພັນອັນດັ່ງເດີມໃຫ້ຍືນຍົງ ເພື່ອປົກປັກຮັກສາຊີວະນາໆພັນຂອງລາວພາຍໃນກອບຂອງການພັດທະນາທີ່ຍືນຍົງ ແລະ ການລົບລ້າງຄວາມທຸກຍາກ. ຍຸດທະສາດພັດທະນາປ່າໄມ້ຮອດປີ 2020 (FS 2020) ໄດ້ອອກໃນເດືອນກໍລະກົດປີ 2005 ແລະ ໄດ້ສະເໜີເພື່ອແກ້ໄຂລະບົບການກະສິກຳແບບຍືນຍົງ ແລະ ການອະນຸລັກປ່າໄມ້ເພື່ອປົກປັກຮັກສາປ່າໄມ້ ແລະ ລົບລ້າງຄວາມທຸກຍາກ. ເພື່ອຍົກສູງພັນທະໃນການອະນຸລັກຊີວະນາໆພັນຂອງປະເທດ, ສປປ ລາວຈຶ່ງໄດ້ຮວ່ມເປັນພາຄີຕໍ່ສົນທິສັນຍາຄວາມຫຼາກຫລາຍດ້ານຊີວະນາໆພັນ (Convention on Biological Diversity “CBD”) ໃນປີ 1996 ແລະ ສົນທິສັນຍາສາກົນດ້ານການຄ້າຊະນິດພັນທີ່ໃກ້ຈະສູນພັນ (Convention on International Trade of Endangered Species “CITES”) ໃນປີ 2004.

ໃນຂະນະທີ່ຄຸນຄ່າຂອງຊີວະນາໆພັນໄດ້ຖືກຮັບຫລາຍຂຶ້ນ, ຄວາມຮູ້ທີ່ບໍ່ທັນມີພຽງພໍກ່ຽວກັບສະຖານະພາບຂອງຊັບພະຍາກອນອັນນີ້ບວກໃສ່ຄວາມຕ້ອງການຂອງຕະຫລາດທີ່ມີເພີ່ມຂຶ້ນ ແລະ ການຂຸດຄົ້ນທີ່ບໍ່ຍືນຍົງໃນບາງເຂດແມ່ນສິ່ງທ້າທາຍອັນໃຫ່ຍແກ່ ສປປ ລາວ ໃນປະຈຸບັນ ແລະ ອານາຄົດ.

## 6.3 ອົງການ IUCN ລາວ ແລະ ຊີວະນາໆພັນກະສິກຳ

ອົງການ IUCN ລາວ ໄດ້ກຳນົດຈຸດທະນັດ (Niche) ຂອງຕົນເອງໃນວຽກງານຊີວະນາໆພັນກະສິກຳ ຫລື ພືດພັນຕ່າງໆອີງຕາມຄວາມຈຳເປັນ ແລະ ຊ່ອງຫວ່າງໃນປັດຈຸບັນທີ່ມີຢູ່ພາຍໃນ ສປປ ລາວ ເອງ ແລະ ພາຍໃນອົງການຈັດຕັ້ງວຽກງານອະນຸລັກອື່ນໆ ຢູ່ໃນ ສປປ ລາວ.

ອົງການ IUCN ລາວ ໄດ້ເຂົ້າກ່ຽວຂ້ອງໃນການຈັດການປຶກສາຫາລືຮ່ວມ ກັບກຸ່ມຜູ້ມີສ່ວນຮ່ວມອື່ນໆທີ່ດຳເນີນການຄົ້ນຄ້ວາ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບຊີວະນາໆພັນ ເພາະແມ່ນຜະລິດຕະພັນເຄື່ອງປ່າຂອງດົງ, ການຄ້າຂາຍ ພາຍໃຕ້ ຂໍ້ຕົກລົງຮ່ວມມືຫລາຍຝ່າຍດ້ານສິ່ງແວດລ້ອມ ເຊັ່ນວ່າ CITES ແລະ ການຄຸ້ມຄອງປ່າໄມ້. ກິດຈະກຳຊີວະນາໆພັນກະສິກຳ ໃນປັດຈຸບັນຈະມີຂອບເຂດເລີ່ມຈາກການຮ່ວມມືກັບສະຖາບັນຄົ້ນຄ້ວາສາກົນຈົນເຖິງການສະໜັບສະໜູນການຈັດຕັ້ງປະຕິບັດຂໍ້ຕົກລົງ, ການດຳເນີນງານ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບພືດພັນ ແລະ ຄຸນຄ່າແທ້ຈິງຂອງພື້ດພັນ.

ໃນປີ 2005 ອົງການ IUCN ລາວໄດ້ສະໜັບສະໜູນອົງການພຶກສາດເອດິນເບີກ (Royal Botanical Gardens Edinburgh) ແລະ ໄດ້ເຮັດວຽກຮ່ວມກັບດາວິນ (Darwin initiatives) ໃນກິດຈະກຳລິເລີ້ມ ເພື່ອຂະຫຍາຍພື້ນຖານຄວາມຮູ້ກ່ຽວກັບພືດພັນໃນ ສປປ ລາວ. ໃນປີ 2006 ອົງການ IUCN ລາວ ຍັງໄດ້ຊ່ວຍໂຄງການປ່າໄມ້ (Program on Forests (PROFOR)) ຮ່ວມກັບຄູ່ຮ່ວມງານ (NAFRI) ດຳເນີນການສຶກສາຜົນກະທົບໄລຍະຍາວຂອງໂຄງການເຄື່ອງປ່າຂອງດົງ (ໂຄງການ 5 ປີ) ທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ທີ່ບ້ານນ້ຳແພງ. ການສຶກສາໄດ້ສະແດງໃຫ້ເຫັນວ່າການດຳເນີນງານທີ່ຜ່ານມາໄດ້ມີໝາກຜົນດີໄລຍະຍາວ. ຜົນການສຶກສາຫລາຍໆ ອັນຍັງໄດ້ສະແດງໃຫ້ເຫັນ ຄວາມສຳຄັນຂອງການເຂົ້າແຊກແຊງຊ່ວຍເຫລືອແບບຄົບຊຸດເພື່ອແກ້ໄຂບັນຫາທີ່ພົວພັນກັນເຊັ່ນການຮັບປະກັນສະບຽງອາຫານ, ສິດທິການເຂົ້າເຖິງ ແລະ ການຊົມໃຊ້ປ່າໄມ້ ແລະ, ການຄ້າເຄື່ອງປ່າຂອງດົງ ແລະ ສ້າງກອງທຶນພັດທະນາໃນລະດັບທ້ອງຖິ່ນ.

ພາຍໃຕ້ແນວທາງຂອງກອບຍຸດທະສາດ, ອົງການ IUCN ລາວ ຈະເພີ້ມທະວີການປະສານງານກັບຂະແໜງການເອກະຊົນໃນເວລາທີ່ສືບຕໍ່ເປັນຄູ່ຮ່ວມງານຫລັກກັບລັດຖະບານກ່ຽວກັບບັນຫາການພັດທະນາແບບຍືນຍົງ ແລະ ຈະສະໜັບສະໜູນການມີສ່ວນຮ່ວມໃນການສ້າງນະໂຍບາຍແຫ່ງຊາດໃຫ້ມີປະສິດທິຜົນ. ປັດຈຸບັນອົງການ IUCN ລາວກຳລັງເຮັດວຽກກັບລັດຖະບານລາວເພື່ອຈັດຕັ້ງປະຕິບັດຍຸດທະສາດປ່າໄມ້ຮອດປີ 2020 ໃຫ້ມີປະສິດທິຜົນ ແລະ ມີຄວາມຍືນຍົງໂດຍການນຳໃຊ້ຄວາມເຂັ້ມແຂງໃນດ້ານຄວາມຮູ້ວິຊາການ, ການຝຶກອົບຮົມ, ການສ້າງຄວາມອາດສາມາດ ແລະ ການຈັດປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຫລາຍຝ່າຍ. ຂົງເຂດວຽກງານຫລັກຈະລວມມີຜະລິດຕະພັນເຄື່ອງປ່າຂອງດົງ, ການປູກໄມ້ ແລະ ກິດຈະກຳຕ່າງໆທີ່ພົວພັນກັບລະບົບການປູກຝັງລ້ຽງສັດ.

## 6.4 ແນວທາງຍຸດທະສາດ ແລະ ຈຸດປະສົງຂອງຊີວະນາໆພັນກະສິກຳ

ອົງການ IUCN ລາວມີພັນທະໃນການເຮັດວຽກຮ່ວມກັບບັນດາຄູ່ຮ່ວມງານຂອງຕົນເພື່ອສົ່ງເສີມວຽກງານອະນຸລັກ ແລະ ການນຳໃຊ້ຊີວະນາໆພັນກະສິກຳຂອງ ສປປ ລາວ ແບບຍືນຍົງໂດຍໄດ້ກຳນົດທິດທາງ, ແນວທາງຍຸດທະສາດ ແລະ ຈຸດປະສົງທີ່ໄດ້ກຳນົດໄວ້ສຳລັບ ປີ 2007 ມີດັ່ງຕໍ່ໄປນີ້:

1. **ເພີ່ມຄວາມຮູ້ພື້ນຖານເພື່ອຄວາມເຂົ້າໃຈກ່ຽວກັບຊີວະນາໆພັນກະສິກຳໃຫ້ດີຂຶ້ນ.**
    - ດຳເນີນການຄົ້ນຄ້ວາບັນຫາຫລັກ ດ້ານຊີວະນາໆພັນກະສິກຳ
    - ສ້າງຄວາມສາມາດດ້ານສະຖາບັນການຈັດຕັ້ງສຳລັບການຄົ້ນຄ້ວາ(ຕົວຢ່າງອົງກອນວິທະສາດຄຸ້ມຄອງ CITES)

- ແປ ແລະ ເຜີຍແຜ່ບັນດາເອກະສານກ່ຽວກັບຊີວະນາໆພັນການກະເສດ
- ລວມລວມ ແລະ ສັງລວມບັນດາ ຂໍ້ມູນຂ່າວສານຊີວະນາໆພັນກະສິກຳທີ່ມີໃນປະຈຸບັນ
- ສ້າງສູນລວມຂໍ້ມູນຂ່າວສານທີ່ພົວພັນກັບຊີວະນາໆພັນກະສິກຳທີ່ທັນກັບສະພາບ.

2. ສະແດງການນຳໃຊ້ຊີວະນາໆພັນກະສິກຳຂອງ ສປປ ລາວ ຢ່າງສະຫລຽວສະຫລາດເພື່ອປັບປຸງການດຳລົງຊີວິດ.
    - ດຳເນີນການທົດລອງກິດຈະກຳພາກສະໜາມ (ການຄົ້ນຄ້ວາ, ການທົດລອງ) ໃນບາງພື້ນທີ່ຖືກຄັດ ເລືອກ
    - ສົ່ງເສີມວຽກງານຊີວະນາໆພັນກະສິກຳພາຍໃນແຜນງານຊີວະນາໆພັນ ແລະ ທຸລະກິດທີ່ແນໃສ່ການ ເຂົ້າເຖິງຕະຫລາດ ແລະ ສາຍໃຍ/ສາຍພົວພັນຂອງລາຄາທີ່ເປັນທຳ (Fair value chains).

3. ສ້າງຂະບວນການວາງແຜນຂອງສະຖາບັນໃນລະດັບເພື່ອການນຳໃຊ້ຊີວະນາໆພັນກະສິກຳຂອງ ສປປ ລາວ ຢ່າງມີຄວາມ ສະເໝີພາບ ແລະ ເປັນທຳ.
    - ສ້າງເຄືອຂ່າຍຂອງສູນຂໍ້ມູນຂ່າວສານ (ຕົວຢ່າງການເຊື່ອມໂຍງກັບ NAFRI)
    - ຜັກດັນບາງນະໂຍບາຍທີ່ສຳຄັນ (ຕົວຢ່າງ ຍຸດທະສາດປ່າໄມ້ເຖິງປີ 2020) ດ້ວຍປັດໃຈນຳເຂົ້າທີ່ເປັນ ຮູບມະທຳກ່ຽວກັບທາງເລືອກຕ່າງໆດ້ານສະຖາບັນ
    - ດຳເນີນການເຜີຍແຜ່ຂໍ້ມູນພົວພັນກັບຊີວະນາໆພັນກະສິກຳ
    - ສ້າງຄວາມສາມາດຂອງສະຖາບັນໃຫ້ເຂັ້ມແຂງເພື່ອຕິດຕາມ ແລະ ກວດກາຂະບວນການ ການວາງແຜນ (ເຊັ່ນ ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະບໍລິຫານ ແລະ ວິທະຍາສາດຄຸ້ມຄອງ CITES).

## 6.5 ຄູ່ຮ່ວມງານຫລັກ: ຊີວະນາໆພັນກະສິກຳ

ເພື່ອໃຫ້ບັນລຸຈຸດປະສົງຂອງຊີວະນາໆພັນກະສິກຳ, ຕ້ອງໄດ້ການດຳເນີນງານທີ່ພົວພັນຫລາຍດ້ານ ແລະ ຕ້ອງປະສານງານກັບຄູ່ຮວມງານຈາກຫລາຍພາກສ່ວນຊຶ່ງປະກອບດ້ວຍ ຂັ້ນສູນກາງ, ແຂວງ, ອຳນາດການປົກຄອງທ້ອງຖິ່ນ, ຂະແໜງການອື່ນໆທີ່ກ່ຽວຂ້ອງ, ສະຖາບັນຄົ້ນຄ້ວາພາຍໃນ ແລະ ຕ່າງປະເທດ ແລະ ສະມາຄົມທຸລະກິດ. ຜູ້ຮ່ວມງານຫລັກຂອງແຜນງານລວມມີກົມປ່າໄມ້, ສູນຄົ້ນຄວ້າກະສິກຳ ແລະ ປ່າໄມ້, ສູນສົ່ງເສີມ ກະສິກຳ ແລະ ປ່າໄມ້ ແລະ ມະຫາວິທະຍາໄລແຫ່ງຊາດໂດຍສະເພາະຄະນະປ່າໄມ້ ແລະ ຄະນະວິທະຍາ ສາດ.

ຈະໄດ້ສ້າງການພົວພັນຕ່າງໆກັບອົງການຈັດຕັ້ງສາກົນ ແລະ ໃນພາກພື້ນເຊັ່ນວ່າສວນພືດພັນເອດິນເບີກ (The Royal Botanical Gardens Edinburgh) ແລະ ສູນຝຶກອົບຮົມປ່າໄມ້ຊຸມຊົນປະຈຳພາກພື້ນ (the Regional Community Forestry Training Centre) ຢູ່ບາວກອກ, ສູນຕິດຕາມຄວາມປ່ຽນແປງດ້ານປ່າໄມ້ (Forest Trends) ແລະ ສູນກາງຄົ້ນຄ້ວາປ່າໄມ້ສາກົນ (Centre of International Forestry Research) ຢູ່ບາງກອກ.

ອົງການ IUCN ລາວຈະສືບຕໍ່ດຶງດູດເອົາການສະໜັບສະໜູນຈາກບັນດາກຸ່ມພັດທະນາດ້ານລະບົບນິເວດ ແລະ ຊີວິດການເປັນຢູ່ຂອງອົງການ IUCN ສາກົນປະຈຳພາກພື້ນ (Regional Ecosystems and Livelihoods Groups) ຊຶ່ງເປັນຜູ້ຕອບສະໜອງການຊ່ວຍເຫລືອດ້ານວິຊາການໃຫ້ແກ່ວຽກງານດ້ານຊີວະນາໆພັນ, ເສດຖະກິດ, ກົດໝາຍສິ່ງແວດລ້ອມ ແລະ ປ່າໄມ້. ແຜນງານຂອງອົງການ IUCN ລາວ ຍັງຈະນຳໃຊ້ຄວາມຮູ້ວິຊາການຂອງກອງເລຂາສົນທິສັນຍາສາກົນວ່າດ້ວຍການຄ້າຊະນິດພັນທີ່ສູນພັນ (CITES) ແລະ ຄວາມຮູ້ວິຊາການຂອງບັນຊີແດງຂອງຊະນິດພັນໄກ້ຈະສູນພັນ (IUCN Red List of Threatened Species). ການເຂົ້າເຖິງເຄືອຂ່າຍຊ່ຽວຊານ 6 ຄະນະຍັງເປັນຈຸດເຂັ້ມແຂງຂອງອົງການ IUCN ລາວ

# 7. ນ້ຳ, ດິນບໍລິເວນນ້ຳ ແລະ ແຫລ່ງນ້ຳ

ສປປ ລາວ ເປັນປະເທດທີ່ອຸດົມຮັກມີໄປດ້ວຍຊັບພະຍາກອນແຫລ່ງນ້ຳ ແລະ ເພິ່ງພາອາໄສຊັບພະຍາກອນເຫລົ່ານີ້ເພື່ອການພັດທະນາ, ໃນປະຈຸບັນຄວາມຕ້ອງການນ້ຳ ແລະ ແຫລ່ງນ້ຳທີ່ມີການແຂ່ງຂັນໄດ້ສືບຕໍ່ມີຄວາມ ຮຸນແຮງ ແລະ ການຕຽມການທາງດ້ານສະຖາບັນ ແລະ ກົນໄກຕ່າງໆໃນການຄຸ້ມຄອງບໍລິຫານບັນດາແຫລ່ງນ້ຳ ດັ່ງເຫລົ່ານີ້ໃຫ້ມີຄວາມຍືນຍົງສະເໝີພາບຍັງບໍ່ທັນພຽງພໍ.

## 7.1 ເປັນຫຍັງຈຶ່ງເລືອກຫົວຂໍ້ນ້ຳ? ພື້ນຖານຂອງຈະເລີນຮຸ່ງເຮືອງ, ສຸກຂະພາບ ແລະ ຄວາມປອດໄພ

ໃນພາສາລາວຄຳວ່າ “ນ້ຳ” ເປັນຄຳສັບກ່ຽວກັບນ້ຳ, ແຕ່ວ່າໃນກອບຂອງ IUCN ແລ້ວ “ນ້ຳ“ ໄດ້ໝາຍເຖິງນ້ຳທຸກປະເພດ, ດິນບໍລິເວນນ້ຳ, ແລະ ແຫລ່ງນ້ຳໃນ ສປປ ລາວ. ຍ້ອນມີຄວາມໝາຍຄືແນວນີ້, ກິດຈະກຳຕ່າງໆກ່ຽວກັບນ້ຳແມ່ນມີກອບກວມລວມແນໃສ່ແຫລ່ງນ້ຳ ແລະ ພື້ນທີ່ດິນຊຸ່ມ ແລະ ຊັບພະຍາກອນທຳມະຊາດຊຶ່ງໄດ້ປະກອບສ່ວນແກ່ການຄຸ້ມຄອງທີ່ມີປະສິດຕິຜົນນອກຈາກຄຸນລັກສະນະຂອງນ້ຳ ແລະ ການໃຊ້ທີ່ຫລາກຫລາຍແລ້ວ.

ນ້ຳເປັນແຫລງຊັບພະຍາກອນ ທີ່ມະນຸດສະແຫວງຫາມາແຕ່ດຶກດຳບັນ ຍ້ອນວ່າມັນມີຄວາມຈຳເປັນແກ່ຊີວິດ ແລະ ຜົນປະໂຫຍດຕາມມາທີ່ນ້ຳສະໜອງໃຫ້ແກ່ຜູ້ທີ່ຄຸ້ມຄອງການນຳໃຊ້ມັນ. ປະຊາຊົນໃນທ້ອງຖິ່ນນຳໃຊນ້ຳເພື່ອບໍລິໂພກ, ເຮັດຊົນລະປະທານຂະໜາດນ້ອຍ, ຂະໜາດກາງ, ການປະມົງ ແລະ ການສຸກຂະອະນາໄມ ແລະ ອື່ນໆອີກ. ໃນລະດັບກ້ວາງອອກໄປ, ອຸດສະຫະກຳຕ່າງໆເຊັ່ນການສ້າງພະລັງງານໄຟຟ້າ ແລະ ບໍ່ແຮ່ ແລະ ເກືອບວ່າທັງໝົດໜ່ວຍງານທີ່ປະກອບສ່ວນໃຫ້ແກ່ການພັດທະນາປະເທດຊາດ ແລະ ສ້າງລາຍຮັບແກ່ປະເທດຊາດລ້ວນແລ້ວແຕ່ເພິ່ງພາອາໄສນ້ຳເພື່ອດຳເນີນງານ.

## 7.2 ນ້ຳໃນ ສປປ ລາວ: ຮັບຮູ້ຄຸ່ນຄ່າຂອງຄວາມອຸດົມສົມບູນ, ຄວາມອຸດົມສົມບູນເຕັມໄປດ້ວຍຄຸ່ນຄ່າ.

ໃນ ສປປ ລາວ ນ້ຳຖືວ່າເປັນຈຸດໃຈກາງຂອງຊີວິດ. ປະເທດລາວໄດ້ມີອັດຕາການຊົມໃຊ້ນ້ຳຕໍ່ຫົວຄົນສູງທີ່ສຸດໃນທະວີບອາຊີທັງນີ້ກໍ່ເນື່ອງມາຈາກຕັ້ງຢູ່ຈຸດໃຈກາງຂອງແມ່ນ້ຳຂອງ ແລະ ມີສາຂາຂອງມັນ ແລະ ແມ່ນ້ຳຈືດອື່ນໆອີກຢ່າງຫຼວງຫຼາຍທີ່ໄຫຼ່ຜ່ານທົ່ວພື້ນແຜ່ນດິນຂອງປະເທດ. ແຫຼ່ງນ້ຳໄດ້ມີຜົນປະໂຫຍດໂດຍກົງແກ່ຄົວເຮືອນ ແລະ ອຸດສະຫະກຳໃນ ສ ປປ ລາວ ຜ່ານການນຳໃຊ້ເປັນພະລັງງານ, ເສັ້ນທາງການຄົມມະນາຄົມ, ການນ້ຳໃຊ້ຊັບພະຍາກອນໃນນ້ຳທີ່ສາມາດບໍລິໂພກໄດ້ ແລະ ຊົນລະປະທານເພື່ອການກະສິກຳຕ່າງໆ. ນ້ຳຍັງໄດ້ໃຫ້ຜົນປະໂຫຍດທາງອ້ອມອັນມະຫາສານເຊັ່ນ: ການປ້ອງກັນລະບົບນິເວດ, ການຮັກສາໂພສະນາການ ອາຫານ, ການຮັກສາຄວາມສົມດູນຂອງສະພາບອາກາດສະເພາະພື້ນທີ່ສະເພາະລະໜາດນ້ອຍ, ການບຳບັດ ນ້ຳເສຍ ແລະ ການຮັກສາຄວາມເປີ້ເປື້ອນຂອງນ້ຳ.




(ຂໍ້ມູນມາຈາກ: Emeton L. (ed) 2005)

ໂດຍຜ່ານຍຸດທະສາດລຶບລ້າງຄວາມທຸກຍາກເພື່ອການຂະຫຍາຍໂຕຂອງຊາດ (NGPES), ລັດຖະບານສປປ ລາວກຳນົດເອົາ ນ້ຳທີ່ທີຢ່າງອຸດົມສົມບູນ ໃນປະເທດເປັນຊັບພະຍາກອນພື້ນຖານສຳຄັນອັນໜຶ່ງເພື່ອຕອບສະໜອງເປົ້າໝາຍການລຶບລ້າງຄວາມທຸກຍາກ ແລະ ການພັດທະນາປະເທດຊາດ. ເພື່ອຮັບປະກັນການນຳໃຊ້ ແລະ ການຄຸ້ມຄອງຊັບພະຍາກອນເຫຼົ່ານີ້ໃຫ້ມີຄວາມຍືນຍົງ, ໄດ້ປະຕິບັດຫລາຍບາດກ້າວເຊິ່ງລວ່ມມີການເຊັນຂໍ້ຕົກລົງຮ່ວມມືການພັດທະນາອ່າງໂຕ່ງແມ່ນ້ຳຂອງແບບຍືນຍົງໃນປີ (1995), ການຮັບຮອງເອົາກົດໝາຍນ້ຳ ແລະ ແຫຼ່ງນ້ຳ (1996), ການກະກຽມນະໂຍບາຍກ່ຽວກັບນ້ຳ ແລະ ແຫຼ່ງຊັ້ນພະຍາກອນນ້ຳ (2000), ແລະ ການສ້າງຕັ້ງຄະນະກຳມະການປະສານງານຊັບພະຍາກອນນ້ຳ (WRCC). ເຖິງແມ່ນວ່າມີຄວາມຄືບໜ້າເຫຼົ່ານີ້ແລ້ວກໍ່ຕາມ, ກອບແຜນງານໃນປັດຈຸບັນຂອງສະຖາບັນ ແລະ ໜ່ວຍງານການຈັດຕັ້ງເພື່ອການຄຸ້ມຄອງບໍລິຫານນ້ຳຍັງບໍ່ທັນມີຄວາມຊັດເຈນ ແລະ ຍັງບໍ່ສອດຄອງກັບນະໂຍບາຍ ແລະ ລະບຽບກົດໝາຍປັດຈຸບັນ. ການຂາດຄວາມຊັດເຈນແມ່ນເຮັດໃຫ້ເກີດຄວາມສັບສົນທຸຍ້ງຍາກຂຶ້ນຍ້ອນຄວາມຕ້ອງການນ້ຳຢູ່ທ້ອງຖິ່ນ ແລະ ພາກພື້ນມີການຂະຫຍາຍຕົວລວມທັງຄວາມສົນໃຈນ້ຳຂອງຜູ້ທີ່ມີສ່ວນຮ່ວມທີ່ມີຄວາມສະລັບສັບຊ້ອນເພີ່ມຂຶ້ນ.

ການເພີ້ມຂຶ້ນໃນດ້ານປະລິມານ ແລະ ຄວາມສັບສົນໄດ້ເກີດຂຶ້ນເຫັນໄດ້ຢ່າງຊັດເຈນເລີ້ມແຕ່ປີ 2001 ເຊິ່ງເປັນຊ່ວງເວລາທີ່ອົງການ IUCN ໄດ້ນຳສະເໜີທິດທາງຍຸດທະສາດສຳລັບແຜນງານກ່ຽວກັບນ້ຳຂອງຕົນ. ໃນຂະນະທີ່ການສະໜອງນ້ຳຍັງມີຢ່າງອຸດົມສົມບູນ ແລະ ຄຸນນະພາບກໍ່ຍັງດີຢູ່, ຄວາມຕ້ອງການນ້ຳຈືດທີ່ມີຕໍ່ເນື່ອງກຳລັງມີຄວາມຮຸນແຮງຂຶ້ນ ແລະ ມີການແຂ່ງຂັ້ນເພີ່ມທະວີຂຶ້ນໃນບັນດາໜ່ວຍງານທີ່ເພິ່ງພາອາໃສນ້ຳ. ຂະແໜງການພະລັງງານໄຟຟ້າໃນ ສ ປປ ລາວໄດ້ເພີ້ມການສ້າງເຄື່ອນໃໝ່ຫຼາຍກ່ວາ 30 ແຫ່ງຊື່ງຢູ່ໃນຂັ້ນຕອນການສຶກສາ ຫຼື ກຳລັງມີການກໍ່ສ້າງຢູ່ (Osborne 2006). ການຜະລິດກະສິກຳດ້ວຍລະບົບຊົນລະປະທານຂະໜາດໃຫ່ຍກໍ່ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ (ຕົວຢ່າງ ເຂົ້າ), ແລະ ຂະແໜງການທ່ອງທ່ຽວທີ່ນຳໃຊ້ຊັບພະຍາກອນນ້ຳເຊັ່ນ: ແມ່ນ້ຳ ແລະ ດິນບໍລິເວນນ້ຳ, ກໍ່ໄດ້ເພີ້ມຂຶ້ນຢ່າງຫຼວງຫຼາຍເຖິງ 1,09 ລ້ານຄົນໃນປີ 2005, ຊື່ງຫຼາຍກ່ວາ 60 % ໃນປີ 2001 (LNTA 2005). ໃນຂະນະທີ່ຂະແໜງການເຫຼົ່ານີ້ເປັນພື້ນຖານແກ່ການພັດທະນາປະເທດ, ມັນມີຄວາມສຳຄັນເພື່ອຮັບປະກັນວ່າການຕັດສິນໃຈໃນການພັດທະນາການນຳໃຊ້ຊັບພະຍາກອນຕ່າງໆໄດ້ຖືກສ້າງຂຶ້ນພາຍໃຕ້ສະພາບການດ້ານສິ່ງແວດລ້ອມ ແລະ ເສດຖະກິດ-ສັງຄົມໃນມຸມມອງທີ່ໃຫ່ຍຂຶ້ນ. ການພັດທະນາຄ້າຍຄືກັນຊື່ງນຳຜົນປະໂຫຍດຢ່າງຫຼວງຫຼາຍມາໃຫ້ປະເທດນັ້ນກໍ່ໄດ້ເພີ້ມຄວາມກົດດັນຕໍ່ຊັບພະຍາ

ກອນນ້ຳ, ເປັນອຸປະສັກໃຫ້ແກ່ທາງເລືອກການພັດທະນາປະເພດອື່ນ, ເປັນຜົນກະທົບຕໍ່ຄວາມ ສາມາດຂອງຊັບພະຍາກອນນ້ຳໃນການໃຫ້ຜົນປະໂຫຍດດ້ານທຳມະຊາດຕົວຢ່າງ: ດິນບໍລິເວນນ້ຳ ໄດ້ປະເຊີນກັບໄພຂົ່ມຂູ່ເຊິ່ງເກີດຂຶ້ນຢ່າງໄວວາລວມທັງການຜັນປ່ຽນດິນບໍລິເວນນ້ຳເປັນການນຳໃຊ້ເພື່ອປະໂຫຍດອື່ນ, ຄວາມເປິະເປື້ອນຈາກ ການນຳໃຊ້ສານເຄມີເພື່ອການປູກຝັງ, ການນຳໃຊ້ຜະລິດຕະພັນຈາກດິນບໍລິເວນນ້ຳ ຫລາຍເກີນໄປ ແລະ ຜົນກະທົບຈາກໂຄງການກໍ່ສ້າງຂະໜາດໃຫ່ຍຍັງເປັນຜົນສະທ້ອນຕໍ່ຄວາມສາມາດໃນ ການສະໜອງນ້ຳສະອາດ ແລະ ຄ້ຳຊູບັນດາຊີວະນານາພັນທີ່ສຳຄັນອື່ນໆ.

## 7.3 ອົງການ IUCN ລາວ ແລະ ນ້ຳ

ຫຼາຍກ່າວ 5 ປີທີ່ຜ່ານມາ, ອົງການ IUCN ລາວໄດ້ເຮັດວຽກຮ່ວມກັບແຜນງານຊັບພະຍາກອນນ້ຳພາກພື້ນຂອງອົງການ IUCN ສາກົນ, ແຜນງານການອະນຸລັກ ແລະ ນຳໃຊ້ດິນບໍລິເວນນ້ຳໃນອ່າງນ້ຳຂອງແບບຍືນຍົງ ແລະ ຮ່ວມກັບຜູ້ຮ່ວມງານລັດຖະບານເຊັ່ນ: ຄະນະກຳມະການປະສານງານຊັບພະຍາກອນນ້ຳ ແລະ ຄະນະກຳມະທິການແມ່ນ້ຳຂອງແຫ່ງຊາດລາວໃນການສົ່ງເສີມການນຳໃຊ້ນ້ຳ ແລະ ຊັບພະຍາກອນດິນບໍລິເວນນ້ຳໃນ ສ ປປ ລາວ ຢ່າງສະຫລຽວສະຫລາດ.

ການອຳນວຍຄວາມສະດວກໃນການປຶກສາຫາລືລະດັບຊາດ ແລະ ພາກພື້ນກ່ຽວກັບບັນຫາສະເພາະກ່ຽວກັບນ້ຳແມ່ນເປັນອົງປະກອບຂອງວຽກງານອົງການ IUCN ທີ່ໄດ້ຮັບໝາກຜົນ. ໃນປີ 2006 ອົງການ IUCN ລາວໄດ້ຊ່ວຍແຜນງານນ້ຳ ແລະ ດິນບໍລິເວນນ້ຳປະຈຳພາກພື້ນຂອງອົງການ IUCN ສາກົນໃນການສ້າງ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບວິທີການການຄຸ້ມຄອງແຫຼ່ງຊັບພະຍາກອນນ້ຳແບບຄົບຊຸດ ແລະ ຍັງໄດ້ສະໜັບສະໜູນລັດຖະບານ ສປປ ລາວໃນການເປັນເຈົ້າພາບຈັດກອງປະຊຸມກ່ຽວກັບນ້ຳໃນພາກພື້ນທີ່ນະຄອນຫຼວງວຽງຈັນ. ກອງປະຊຸມປຶກສາຫາລືດັ່ງກ່າວໄດ້ມີຕົວແທນເຂົ້າຮ່ວມຈາກລັດຖະບານ, ອົງການຈັດຕັ້ງສາກົນ ແລະ ຂະແໜງການເອກກະຊົນໃນພາກພື້ນອາຊີ. ກອງປະຊຸມປຶກສາຫາຫລືຄັ້ງນີ້ໄດ້ເປີດໂອກາດໃຫ້ແກ່ພາກສ່ວນຕ່າງໆ ທີ່ມີສ່ວນຮ່ວມໄດ້ແລກປ່ຽນທັດສະນະ ແລະ ແນວຄວາມຄິດຂອງຕົນເອງໃນການສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງນ້ຳໃນພາກພື້ນອາຊີນີ້. ອົງການ IUCN ລາວ, ໄດ້ປະສານສົມທົບເອົາກອງປະຊຸມກອງປະຊຸມລະດັບຊາດກ່ຽວກັບນ້ຳ (Productive National Water Dialogue) ເຂົ້າໃນກອງປະຊຸມປຶກສາຫາລືໃນລະດັບພາກ ພື້ນນຳອີກ. ອົງການ IUCN ລາວຈະສືບຕໍ່ອຳນວຍຄວາມສະດວກກອງປະຊຸມປຶກສາຫາລືລະດັບຊາດລະຫ່ວາງ 2007 -11 ໂດຍຕອບສະໜອງພື້ນຖານອັນສຳຄັນໃຫ້ແກ່ພາກສ່ວນທີ່ມີສ່ວນຮ່ວມໃນ ສ ປປ ລາວເພື່ອເຊື່ອມໂຍງ/ຕິດຕໍ່ພົວພັນກັບການປຶກສາຫາລືກັບພາກພື້ນ ແລະ ສາກົນ. ສິ່ງນີ້ຍັງຈະເປັນໂອກາດເພື່ອແລກປ່ຽນຂໍ້ມູນ-ຂ່າວສານຕ່າງໆເກີດຈາກປະສົບການໃນຂັ້ນທົດລອງທີ່ອົງການ IUCN ລາວ ແລະ ອົງການຈັດຕັ້ງໃນວຽກງານອະນຸລັກອື່ນໆ ໄດ້ສ້າງຂຶ້ນ.

ໂຄງການແມ່ນ້ຳຂອງຕອນເໜືອຊຶ່ງໄດ້ລວບລວມເອົາວິຊາການລັດຖະບານຈາກຂັ້ນຕ່າງໆເພື່ອດຳເນີນການສຳຫຼວດຫຼາຍໆຄັ້ງ ລະຫ່ວາງປີ 2003 - 2006. ມັນເປັນໂຄງການລິເລີ່ມອັນສຳຄັນອັນໜຶ່ງທີ່ເກີດຂຶ້ນ 2-3 ປີຜ່ານມາ. ໂຄງການດັ່ງກ່າວນີ້ໄດ້ຍົກໃຫ້ເຫັນບາງຢ່າງກ່ຽວກັບການພັດທະນາຂອງບັນດາເນີນຊາຍທີ່ເກີດຂຶ້ນໃນລຳແມ່ນ້ຳຂອງຕອນເໜືອຂອງ ສ ປປ ລາວ. ຫວ່າງບໍ່ດົນມານີ້ທີມງານຮ່ວມລະຫ່ວາງລັດຖະບານ ແລະ ອົງການ IUCN ໄດ້ສະເໜີແນະວ່າຕ້ອງໄດ້ປະຕິບັດວຽກງານທີ່ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງບໍລິຫານເພື່ອຕອບ

ສະໜອງໃຫ້ແກ່ການລິເລີ້ມ, ການພັດທະນາໃນຂົງເຂດແມ່ນ້ຳຂອງຕອນເໜືອໃນຕໍ່ໜ້າ ຊຶ່ງລວມທັງການປະສານງານ ແລະ ການຮ່ວມມືກັນລະຫ່ວາງຊຸມຊົນທີ່ອາໄສແມ່ນ້ຳຂອງເພື່ອການດຳລົງຊີວິດ; ເພີ້ມພາລະບົດບາດຂອງອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນໃນການວາງແຜນການ, ການຈັດຕັ້ງປະ ຕິບັດ ແລະ ດຳເນີນການລິເລີ້ມການພັດທະນາ ແລະ ປັບປຸງການເຂົ້າເຖິງແຫລ່ງຂໍ້ມູນ-ຂ່າວສານກ່ຽວກັບການລິເລີ້ມພັດທະນາເຫຼົ່ານີ້ໃນແຕ່ລະຂັ້ນ.

ອົງການ IUCN ລາວຈະສືບຕໍ່ເຮັດວຽກໃນຂອບເຂດເພື່ອປັບປຸງກົນໄກຄຸ້ມຄອງບໍລິຫານນ້ຳໃນພາກພື້ນແມ່ນ້ຳຂອງເພາະເຫັນວ່າມີຄວາມຈຳເປັນຖ້າຢາກຄຸ້ມຄອງນ້ຳໃຫ້ມີຄວາມສະເໝີພາບ ແລະ ມີຄວາມຍືນຍົງ. ບາດກ້າວຕ່າງໆໃນການປັບປຸງການຄຸ້ມຄອງບໍລິຫານນ້ຳ ລວມມີ ການສ້າງຄວາມຊັດເຈນ ແລະ ປັບປຸງຂອດສາຍການຈັດຕັ້ງຂອງອົງການ ແລະ ການປະສານງານລະຫ່ວາງພາກສ່ວນຂອງລັດໃນຂັ້ນຕ່າງໆ, ປຸກລະດົມໃຫ້ຊຸມຊົນເຂົ້າຮ່ວມໃນການນຳໃຊ້ ແລະ ຄຸ້ມຄອງໃນຕົວຈິງ ແລະ ສືບຕໍ່ໃຫ້ການສົ່ງເສີມສິດທິໃນຊັບພະຍາກອນທ້ອງຖິ່ນ, ສ້າງຄວາມສາມາດຂອງສະຖາບັນ ແລະ ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນນະໂຍບາຍດ້ານແຫລ່ງນ້ຳໃນພາກພື້ນ ແລະ ລະດັບຊາດ.

## 7.4 ຈຸດປະສົງຂອງຫົວຂໍ້ນ້ຳ ແລະ ແນວທາງດ້ານຍຸດທະສາດ

ຈຸດປະສົງຕົ້ນຕໍ ແລະ ແນວທາງຍຸດທະສາດສຳລັບແຜນງານນ້ຳຂອງອົງການ IUCN ລາວ ລະຫ່ວາງ ປີ 2007-2011 ລວມມີ:

**1. ປັບປຸງຄວາມເຂົ້າໃຈລະບົບນິເວດ ແລະ ຂະບວນການດຳລົງຊີວິດ, ການຄຸ້ມຄອງຊັບພະຍາກອນນ້ຳ. ສົ່ງເສີມ ແລະ ທົດລອງຂະບວນການການໝູນວຽນຂອງສິ່ງແວດລ້ອມ.**

- ສົ່ງເສີມ ແລະ ທົດລອງແຜນການລິເລີ່ມດ້ານສິ່ງແວດລ້ອມ ແລະ ສຸຂະພາບ (ການອະນຸລັກດິນບໍລິເວນນ້ຳເພື່ອອາຫານໂພສະນາການ)
- ຈັດປະຊຸມຮ່ວມໃຫ້ທາງຂັ້ນເທິງ ແລະ ພາກສ່ວນທີ່ມີສ່ວນຮ່ວມ (ໜ່ວຍງານນ້ຳແຫ່ງຊາດ)
- ຊອກຫາໂອກາດໃນການຈ່າຍຄ່າທຳນຽມສຳລັບການໃຫ້ບໍລິການສິ່ງແວດລ້ອມ.
- ນຳໃຊ້ຜົນຂອງກິດຈະກຳການຕິດຕາມ ແລະ ສຶກສາປະເມີນຜົນເຂົ້າໃນກິດຈະກຳການວາງແຜນຊັບພະຍາກອນຊຸມຊົນ ແລະ ການເຜີຍແຜ່ໝາກຜົນຕ່າງໆ.

**2. ຍົກສູງຂະບວນການຄຸ້ມຄອງບໍລິຫານ ແລະ ປັບປຸງສະຖາບັນຕ່າງໆພົວພັນກັບນ້ຳເພື່ອສ້າງນະໂຍບາຍ ແລະ ຂໍ້ຕົກລົງທີ່ມີປະສິດຖິພາບ ແລະ ມີການສະສານງານກັນ.**

- ຈັດກອງປະຊຸມປຶກສາຫາລືລະດັບຊາດ ແລະ ພາກພື້ນ
- ສ້າງຄວາມອາດສາມາດຂອງສະຖາບັນຫຼັກເຊັ່ນ: ຄະນະກຳມະການປະສານງານຊັບພະຍາກອນນ້ຳ (WRCC)
- ໃຫ້ຄວາມສຳຄັນບຸລິມະສິດຍຸດທະສາດ ຂອງຄະນະກຳມາທິການເຂື່ອນໂລກ WCD ໃນການຕັດສິນໃຈ
- ສະໜັບສະໜູນການກະກຽມສັດທະຍະບັນ ແລະ ຈັດຕັ້ງປະຕິບັດສົນທິສັນຍາ RAMSAR

- ດຳເນີນການທົບທວນຄືນ ບັນດານະໂຍບາຍຕ່າງໆ ແລະ ຜົນກະທົບຂອງມັນ (ຕົວຢ່າງ: ການສຶກສາ ຜົນກະທົບດ້ານສິ່ງແວດລ້ອມ "EIA" ແລະ ນະໂຍບາຍພົວພັນກັບນ້ຳ ແລະ ດິນບໍລິເວນນ້ຳ)
- ເສີມຂະຫຍາຍກໍລະນີສຶກສາ ກ່ຽວກັບການຄຸ້ມຄອງແຫຼ່ງຊັບພະຍາກອນນ້ຳແບບປະສົມປະສານ

**3. ຍົກໃຫ້ເຫັນບັນດາຄວາມກົດດັນ ທີ່ມີເພີ່ມທະວີຂຶ້ນ ຕໍ່ກັບຊັບພະຍາກອນທີ່ພົວພັນກັບແຫລ່ງນ້ຳ**

- ດຳເນີນການໂຄສະນາເຜີຍແຜ່ ເພື່ອຍົກໃຫ້ເຫັນຮູບແບບ ຂອງຄວາມກົດດັນຕໍ່ຊັບພະຍາກອນທີ່ພົວພັນ ກັບນ້ຳ
- ສົ່ງເສີມ ແລະ ສະໜັບສະໜູນການສຶກສາທີ່ກ່ຽວພັນກັບນ້ຳ
- ສະໜັບສະໜູນ ການສ້າງເຄືອຄ່າຍ ຂໍ້ມູນຜູ້ບໍລິຫານດິນບໍລິເວນນ້ຳ
- ສ້າງສູນກາງຂໍ້ມູນ-ຂ່າວສານຊັບພະຍາກອນນ້ຳ ປະຈຳຢູ່ອົງການ IUCN
- ຈັດການທັດສະນະສຶກສາ ທາງດ້ານຊັບພະຍາກອນແຫລ່ງນ້ຳ

## 7.5. ຜູ້ຮ່ວມງານຫຼັກໃນວຽກງານນ້ຳ

ຜູ້ຮ່ວມງານຫຼັກຂອງອົງການ IUCN ລາວກ່ຽວກັບວຽກງານນ້ຳ ໄດ້ກຳນົດເອົາ ຄະນະກຳມະການປະສານງານ ຊັບພະຍາກອນນ້ຳ (WRCC), ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ (LNMC) ແລະ ສູນຄົ້ນຄ້ວາການ ປະມົງ (LARReC).

ກິດຈະກຳຂອງຫົວຂໍ້ນີ້ຈະແມ່ນການໃຊ້ເວລາ ແລະ ແຫຼ່ງຊັບພະຍາກອນຈຳນວນຫຼວງຫຼາຍເຂົ້າໃນການປະສານ ພົວພັນກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເພື່ອພັດທະນາແບບແຜນ ແລະ ຂັ້ນຕອນການເຮັດວຽກຂອງສະຖາບັນ ໃຫ້ມີຄວາມສອດຄ່ອງກັນ ເພື່ອການຄຸ້ມຄອງຊັບພະຍາກອນນ້ຳ ແບບປະສົມປະສານ. ຜູ້ຮ່ວມງານອື່ນໆ ທີ່ສຳ ຄັນ ລວມມີ: ກົມລ້ຽງສັດ ແລະ ການປະມົງ, ກົມປ່າໄມ້, ກົມຊົນລະປະທານ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ, ແລະ ອຳນາດການປົກຄອງແຂວງ, ເມືອງ ຕະຫຼອດຮອດ ກຸ່ມນຳໃຊ້ນ້ຳ. ສາຍພົວພັນລະຫວ່າງແຫຼ່ງຊັບພະຍາກອນນ້ຳ ແລະ ສຸຂະພາບ ໄດ້ມີການຍອມຮັບ ຫຼາຍຂຶ້ນ ແລະ ອົງການ IUCN ຈະຊອກຫາການຮ່ວມງານໃໝ່ ກັບກະຊວງສາທາລະນະສຸກ ແລະ ພະແນກສາທາລະນະສຸກ ແຂວງ. ຫວັງວ່າກິດຈະກຳເຫຼົ່ານີ້ຈະກະຕຸກຊຸກຍູ້ ແລະ ຊ່ວຍເຫລືອຂອດ ການປະສານ ງານລະຫວ່າງສະຖາບັນ ຕ່າງໆ ແລະ ອາດມີຄວາມເປັນໄປໄດ້ວ່າ ຂອບເຂດການຮ່ວມງານ ຈະຂະຫຍາຍອອກ ຢ່າງກ້ວາງຂວາງພາຍ ໃນແຜນງານລະດັບຊາດ ແລະ ພາກພື້ນ.

ໃນການດຳເນີນກິດຈະກຳເຫຼົ່ານີ້, ຫ້ອງການອົງການປະຈຳ ສປປ ລາວ ຈະສືບຕໍ່ໝູນໃຊ້ປະສົບການອັນ ກ້ວາງຂວາງ ຂອງອົງການ IUCN ທັງໃນລະດັບພາກພື້ນ ແລະ ໃນລະດັບໂລກໂດຍຜ່ານແຜນງານນ້ຳ ແລະ ດິນບໍລິເວນນ້ຳປະຈຳພາກພື້ນ (Regional Water and Wetlands Program) ແລະ ແຜນການລິເລີ່ມທຳ ມະຊາດ ແລະ ນ້ຳຂອງໂລກ (Global Water and Nature Initiative "WANI"). ການເຊື່ອມໂຍງກັບລະ ດັບພາກພື້ນ ຈະໄດ້ຮັບການສ້າງຂຶ້ນຮ່ວມກັບ ຄະນະກຳມະທິການແມ່ນ້ຳຂອງ, ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ຊຶ່ງທັງໝົດເປັນຜູ້ທີ່ຕິດພັນແໜ້ນແຟ້ນ ໃນວິທີທາງການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນນ້ຳໃນ ຂົງເຂດອະນຸພາກພື້ນແມ່ນ້ຳຂອງ.

# 8. ບັນຫາອື່ນໆທີ່ກຳລັງປະກົດຂຶ້ນມາ

ດ້ວຍມີຄວາມຕັ້ງໃຈທີ່ເປັນອົງການທີ່ຕອບຮັບ, ແຜນຍຸດທະສາດ 2007 - 2011 ຮັບຮູ້ວ່າອາດມມີຄວາມເປັນໄປໄດ້ສູງທີ່ຈະມີບັນຫາ ແລະ ກາລະໂອກາດອື່ນໆປະກົດຂຶ້ນເປັນບູລິມະສິດໃນການດຳເນີນງານໃນຕໍ່ໜ້າ, ດ້ວຍຄວາມສຳນຶກນີ້ທາງອົງການ IUCN ລາວກຳລັງເກັບລວບລວມຂໍ້ມູນ-ຂ່າວສານ ແລະ ແນວຄວາມຄິດຕ່າງໆເພື່ອປະຕິບັດວຽກງານທີ່ອາດເປັນໄປໄດ້ກ່ຽວກັບ:

## 8.1 ການປ່ຽນແປງຂອງສະພາບດິນຟ້າອາກາດ

ການປ່ຽນແປງຂອງສະພາບອາກາດ ຂອງໂລກຊຶ່ງແມ່ນ ໜຶ່ງໃນບັນຫາຄວາມກັງວົນທີ່ສຸດ ໃນສັດຕະວັດທີ 21. ອຸນະພູມ ຮ້ອນຂຶ້ນ, ການປ່ຽນແປງປະລິມານນ້ຳຝົນ-ລັກສະນະຝົນຕົກ, ແລະ ສະພາບເຫດການດິນຟ້າອາກາດເກີດຂຶ້ນ ຢ່າງຮ້າຍແຮງ ຈະມີສ່ວນພົວພັນ ທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ.

ສິ່ງທ້າທາຍ 2 ປະການໃນໂລກແມ່ນ (1) ການຫຼຸດຜ່ອນການແຜ່ກະຈາຍ ທາດອາຍພິດເຮືອນແກ້ວ ເພື່ອຈຳກັດການປ່ຽນແປງດິນຟ້າອາກາດ ໃນອະນາຄົດ ແລະ (2) ການປັບປຸງຄວາມອາດສາມາດ ຂອງຊີວະນາໆພັນ ແລະ ຊຸມຊົນທີ່ທຸກຍາກທີ່ສຸດໃນໂລກ ເພື່ອໃຫ້ປັບຕົວເຂົ້າກັບຜົນກະທົບຕ່າງໆ ເຊິ່ງບໍ່ອາດສາມາດຫຼີກລ່ຽງໄດ້. ຢູ່ ສປປ ລາວ ສິ່ງທ້າທາຍໂຕທີ່ສອງ ຈະເປັນຄວາມກັງວົນຕົ້ນຕໍ ແມ່ນຊັບພະຍາກອນທຳມະຊາດ ເພາະວ່າປະຊາຊົນສ່ວນໃຫຍ່ ແມ່ນເພິ່ງພາອາໃສໂດຍກົງ, ພວກເຂົາດຳລົງຊີວິດໃນພື້ນທີ່ໆ ມີຜົນກະທົບງ່າຍ ແລະ ບໍ່ມີທາງເລືອກອື່ນ ທີ່ຈະເອື້ອອຳນວຍຄວາມສະດວກ ຫຼື ໃຫ້ການບໍລິການ ທີ່ຈະຊ່ວຍການດຳລົງຊີວິດຂອງເຂົາເຈົ້າທີ່ກຳລັງປະເຊີນກັບໄພຂົ່ມຂູ່ທີ່ເພີ່ມຂຶ້ນ .

ອົງການ IUCN ລາວ ໄດ້ຊ່ວຍລັດຖະບານ ສປປ ລາວໃນການປະຕິບັດພັນທະ ຕໍ່ກັບສາກົນ ພາຍໃຕ້ ສົນທິສັນຍາອົງການສະຫະປະຊາຊາດ ກ່ຽວກັບການປ່ຽນແປງຂອງອາກາດ (UNFCCC) ແລະ ສົນທິສັນຍາ ກຽວໂຕ (Kyoto protocol). ຫວ່າງບໍ່ດົນມານີ້ ໂດຍຜ່ານການຈັດຕັ້ງປະຕິບັດ ໂຄງການທີ່ໄດ້ຮັບ ການສະໜັບສະໜູນຈາກອົງການ CIDA 2004, ໄດ້ມີໂຄງການສະໜັບສະໜູນ ການຈັດຕັ້ງປະຕິບັດ UNFCCC ໃນ ສປປ ລາວ. ໂຄງການດັ່ງກ່າວນີ້ ໄດ້ຊ່ວຍຍົກລະດັບ ຄວາມຕື່ນຕົວຂອງອຳນາດການປົກຄອງ ແລະ ຊຸມຊົນລາວ, ກ່ຽວກັບບັນຫາການປ່ຽນແປງ ຂອງສະພາບອາກາດ. ໂຄງການນີ້ຍັງ ເພີ່ມທະວີຈຳນວນຂໍ້ມູນ ຂ່າວສານ ແລະ ຊ່ວຍຍົກສູງ ຄວາມອາດສາມາດ ຂອງອຳນາດການປົກຄອງ ທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດ ສົນທິສັນຍາ ດ້ານການປ່ຽນແປງຂອງດິນຟ້າອາກາດ.

ໃນລະຫວ່າງ 2007- 2011 ອົງການ IUCN ລາວຈະໄດ້ອຸທິດຕົນ ເພື່ອສຶກສາບົດບາດທີ່ເປັນໄປໄດ້ ຂອງຕົນເພື່ອຊ່ວຍເຫຼືອລັດຖະບານ ສປປ ລາວ ໃນການປະເຊີນກັບບັນຫາ ທີ່ສະລັບຊັບຊ້ອນທີ່ມີເພີ່ມຂຶ້ນ. ຈະເໜັ້ນໜັກໃສ່ການປັບຕົວກັບການປ່ຽນແປງ ສະພາບອາກາດ ແລະ ທາງເລືອກຕ່າງໆ ເພື່ອໃຫ້ການສະໜັບສະໜູນຈະໄດ້ກຳນົດຜ່ານ 4 ຫົວຂໍ້ຫລັກຂອງແຜນງານຄື: ກົນໄກການປົກຄອງບໍລິຫານ, ປ່າສະຫງວນ, ຊີວະນາໆພັນກະສິກຳ ແລະ ນ້ຳ.

## 8.2 ບັນຫາສິ່ງແວດລ້ອມໃນຕົວເມືອງ

ບົດລາຍງານສະຖານະພາບດ້ານສິ່ງແວດລ້ອມຂອງ ສປປລາວ ປີ 2001 ໄດ້ຍົກໃຫ້ເຫັນອັດຕາການຈະເລີນເຕີບໂຕທີ່ຄົງທີ່ (5%) ຂອງຂົງເຂດຕົວເມືອງໃນ ສປປລາວ ເຊັ່ນ: ນະຄອນຫຼວງ ແລະ ສະຫວັນນະເຂດ. ໃນບົດລາຍງານຍັງໄດ້ສະຫຼຸບ ໃຫ້ເຫັນເຖິງຄວາມກົດດັນທີ່ເກີດ ຈາກການຂະຫຍາຍໂຕຂອງຕົວເມືອງຕໍ່ສິ່ງແວດລ້ອມທຳມະຊາດລວມ ມີຄວາມຕ້ອງການການບໍລິການຕ່າງໆເຊັ່ນ: ນ້ຳປະປາ, ສຸຂະອະນາໄມ, ຮ່ອງລະບາຍນ້ຳ, ການບຳບັດສິ່ງເສດເຫຼືອ, ມົນລະພິດຈາກອຸດສາຫະກຳ, ການຂົນສົ່ງ ແລະ ການຊົມໃຊ້ພະລັງງານ ແລະ ບົດລາຍງານຍັງໄດ້ສະຫລຸບ ໃຫ້ເຫັນເຖິງຄວາມສາມາດ ຂອງສິ່ງແວດລ້ອມທຳມະຊາດ ໄດ້ຫລຸດໜ້ອຍລົງ ໃນການສະໜອງການບໍລິການ ດ້ານລະບົບນິເວດທີ່ສຳຄັນ ເຊັ່ນ: ການບຳບັດນ້ຳເສຍຕາມທຳມະຊາດ ແລະ ອາກາດທີ່ສະອາດ.

ປະສົບການທີ່ຜ່ານມາຂອງອົງການ IUCN ກໍ່ໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍຫຼັກ ຂອງສິ່ງແວດລ້ອມໃນຕົວເມືອງ.ໃນປີ 2005 ອົງການ IUCN ລາວໄດ້ສະໜັບສະໜູນ ຄະນະກຳມະການສິ່ງແວດລ້ອມແຫ່ງຊາດ ແລະ ອົງການວິທະຍາສາດ, ເຕັກໂນໂລຍີ ແລະ ສິ່ງແວດລ້ອມ ເພື່ອປະຕິບັດວຽກງານ ກ່ຽວກັບດິນບໍລິເວນນ້ຳໃນຕົວເມືອງ ແລະ ໃນປີຜ່ານມາ ໂດຍການມີສ່ວນຮ່ວມນຳທີມງານສະເພາະກິດ ຂອງອົງການທ່ອງທ່ຽວແຫ່ງຊາດລາວ ອົງການ IUCN ລາວ ໄດ້ສັງເກດເຫັນຜົນກະທົບ ໃນຕົວເມືອງຂອງການທ່ອງທ່ຽວ. ປະສົບການເຫຼົ່ານີ້ ໄດ້ສະແດງໃຫ້ເຫັນວ່າ ການຄຸ້ມຄອງສິ່ງແວດລ້ອມໃນຕົວເມືອງກໍ່ໄດ້ນັບມື້ນັບມີຄວາມສຳຄັນໃນຂອບເຂດການອະນຸລັກຊັບພະຍາກອນທຳມະຊາດ ຂອງປະເທດເພື່ອການນຳໃຊ້ ແລະ ການພັດທະນາທີ່ຍືນຍົງ ແລະ ຍ້ອນແນວນີ້ມັນຈຶ່ງເປັນວຽກງານໜຶ່ງ ຢູ່ໃນວຽກງານຂອງຜູ້ມີອຳນາດໃນການຕັດສິນໃຈ.

ໃນລະຫວ່າງ 2007 - 2011 ອົງການ IUCN ລາວ ຈະສືບຕໍ່ສະໜັບສະໜູນ ການດຳເນີນງານໃນຂົງເຂດວຽກງານດັ່ງກ່າວນີ້. ອົງການ IUCN ລາວ ມອງເຫັນກາລະໂອກາດເພື່ອຂະຫຍາຍວຽກງານຂອງຕົນທີ່ມີຢູ່ແລ້ວພາຍໃຕ້ແຜນງານນ້ຳ ແລະ ກົນໄກການປົກຄອງ ແລະ ຈະສະໜັບສະໜູນໜ່ວຍງານ ຂອງລັດຖະບານເຊັ່ນ: ອົງການນ້ຳໃນຕົວເມືອງ ແລະ ອົງການຈັດສັນທີ່ດິນແຫ່ງຊາດທີ່ຫາກໍ່ສ້າງຕັ້ງຂຶ້ນ. ຍັງມີຄວາມສົນໃຈທີ່ຈະສ້າງການເຊື່ອມໂຍງ ກັບອົງການຈັດຕັ້ງອື່ນໆເຊັ່ນ: ສະມາຄົມພັດທະນາຊຸມຊົນ ແລະ ສິ່ງແວດລ້ອມທີ່ກຳລັງດຳເນີນກິດຈະກຳໃນຂົງເຂດວຽກງານດັ່ງກ່າວນີ້ຢູ່.

## 8.3 ບັນຫາອື່ນໆ

ກາລະໂອກາດອື່ນໆ ທີ່ອາດຈະປາກົດຂຶ້ນ ຈະໄດ້ຖືກພິຈາລະນາເຂົ້າໃນ ຈຸດປະສົງລວມຂອງແຜນງານຍຸດທະສາດ 5 ປີ ຂອງອົງການ IUCN ລາວ ລວມທັງຄວາມເປັນໄດ້ ເພື່ອສ້າງຜົນໄດ້ຮັບຮ່ວມກັນໃນ 4ຫົວຂໍ້ໃຫຍ່ທີ່ໄດ້ນຳສະ ເໜີມາ ຂ້າງເທິງນັ້ນ.

# ເອກະສານສະໜັບສະໜູນ

## ເອກະສານຂ້ອນທ້າຍ 1: ປະຫວັດຄວາມເປັນມາ ແລະ ແຜນງານຍຸດທະສາດ ຂອງອົງການ IUCN ລາວ

ໃນປີ 1969. ກະຊວງການຕ່າງປະເທດ ສປປ ລາວ ໄດ ເປັນສະມາຊິກຂອງອົງການອະນຸລັກຊັບພະຍາກອນທຳມະຊາດ (IUCN) ແລະ 1992 ຫ້ອງການຂອງອົງການ IUCN ລາວ ໄດ້ສ້າງຕັ້ງຂື້ນ. ນັບແຕ່ນັ້ນມາ ອົງການໄດ້ໃຫ້ການສະໜັບສະໜູນດ້ານວິຊາການ ແລະ ພື້ນຖານຄວາມຮູ້ ແກ່ລັດຖະບານ ສປປ ລາວ, ໃນບັນຫາການອະນຸລັກ ແລະ ດຳລົງຊີວິດ. ໃນໄລຍະເລີ້ມຕົ້ນ ກິດຈະກຳຂອງອົງການ ແມ່ນແນ່ໃສ່ການສ້າງລະບົບປ່າສະຫງວນແຫ່ງຊາດໃນ ສ ປປ ລາວ, ໜຶ່ງໃນລະບົບປ່າສະຫງວນທີ່ໃຫ່ຍທີ່ສຸດໃນອາຊີຊຶ່ງກວມເອົາຫຼາຍກ່ວາ 21 % ຂອງເນື້ອທີ່ດິນທົ່ວປະເທດ.

ປັດຈຸບັນນີ້ ແຜນງານໄດ້ຮັບການສະໜັບສະໜູນ ໂດຍຜ່ານ ຂໍ້ຕົກລົງຮ່ວມມືໂຄງການກັບອົງການ SIDA ແລະໄດ້ແນໃສ່ກວມເອົາວຽກງານກົນໄກການປົກຄອງ, ປ່າສະຫງວນ, ຊີວະນາໆພັນກະສິກຳ ແລະ ນ້ຳ, ດິນບໍລິເວນນ້ຳ ແລະ ແລ່ງນ້ຳ.

ອົງການ IUCN ລາວ ໄດ້ຮັບການສະໜັບສະໜູນ ຢ່າງກ້ວາງຂວາງ ຈາກເຄືອຄ່າຍ IUCN ສາກົນ. ຫ້ອງການອົງການ IUCN ປະຈຳພາກພື້ນອາຊີແມ່ນໜຶ່ງໃນ 10 ຫ້ອງການປະຈຳພາກພື້ນໃນທົ່ວໂລກນ ທີ່ໃຫ້ການສະໜັບສະໜູນສະມາສິກໃນ 19 ປະເທດຢູ່ພາກພື້ນ ແລະ ປະຕິແຜນງານຢູ່ 10 ປະເທດລວມມີ: ສ ປປ ລາວ, ກຳປູເຈ້ຍ, ຫວຽດນາມ, ໄທ, ປາກິດສະຖານ, ເນປານ, ອິນເດຍ, ສີລັງກາ, ບັງກລາເດດ, ແລະ ຈີນ.
ຫ້ອງການຂອງອົງການ IUCN ປະຈຳພາກພື້ນອາຊີ ມີອຳນວຍການເປັນຫົວໜ້າ ແລະ ພາຍໃຕ້ການຊີ້ນຳໂດຍຄະນະກຳມະການບໍລິຫານ ພາກພື້ນອາຊີ ປະກອບມີຕົວແທນຈາກປະເທດຕ່າງໆໃນ. ໃນປີ 2006 ມີໜ່ວຍງານຄຸ້ມຄອງໃໝ່ເກີດຂື້ນມີຊື່ວ່າ ກຸ່ມປະເທດ (CG) ເພື່ອສະໜັບສະໜູນແຜນງານປະຈຳປະເທດ. ໜ່ວຍງານເຫລົ່ານີ້ ໂດຍການນຳພາຈາກຫົວໜ້າກຸ່ມປະເທດ ໄດ້ຊ່ວຍອຳນວຍຄວາມສະດວກ ດ້ານຜົນໄດ້ຮັບ ຂອງແຜນງານປະຈຳປະເທດ, ຊ່ວຍພັດທະນາແຜນງານ, ສາຍພົວພັນກັບພາຍໃນ ແລະ ກັບຜູ້ໃຫ້ທຶນ, ໃຫ້ການດັດປັບໃຫ້ເຫດເໝາະ ໃນການນຳໃຊ້ຊັບພະຍາກອນມະນຸດ ແລະ ການເງິນ ແລະ ເປັນຜູ້ຕາງ ໜ້າທາງດ້ານກົດໝາຍຂອງອົງການ IUCN ພາຍໃນປະເທດ. ກຸມການດຳລົງຊີວິດ ແລະ ລະບົບນະເວດປະຈຳອາຊີ (Ecosystems and Livelihoods Groups “ELG”) ໄດ້ສ້າງຂື້ນປີ 2003 ທີຫ້ອນໂຮມເອົາຄວາມສຳນານໃນບັນຫາລະບົບນິເວດ ແລະ ການດຳລົງຊີວິດ. ບັນເລົ່ານີ້ໄດ້ຮັບການແກ້ໄຂໃນຮູບແບບທີ່ທົ່ວເຖິງ ແລະ ຮອບດ້ານໂດຍແຜນງານຂອງປະເທດ. ໃນ 2 ໜ່ວຍງານນີ້ ມີຫ້ອງການປະຈຳຢູ່ ບາງກອກ ແລະ ໂຄໂລມໂບ ແລະ ປະກອບດ້ວຍ 8 ແຜນງານ ທີ່ແບ່ງເປັນຫົວຂໍ້ປະຈຳພາກພື້ນ ຊຶ່ງປະກອບປະກອບມີ: ແຜນງານອະນຸລັກຊີວະນາໆພັນ ແລະ ຊະນິດພັນ, ເສດຖະກິດສິ່ງແວດລ້ອມ, ກົດໝາຍສິ່ງແວດລ້ອມ, ປ່າໄມ້, ຊັບພະຍາກອນທະເລ ແລະ ຊາຍຝັ່ງ, ພູ, ປ່າສະຫງວນ ແລະ ນ້ຳ ແລະ ດິນບໍລິເວນນ້ຳ.

ການສະໜັບໜູນ ແລະ ຄວາມຮູ້ວິຊາການສະເພາະ ຍັງໄດ້ຮັບເພີ່ມເຕີມຈາກສຳນັກງານໃຫ່ຍອົງການ IUCN ປະຈຳ Gland , ປະເທດ Switzerland, ແລະ ຈາກເຄືອຄ່າຍ ກຳມະທິການຊ່ຽວຊານ ຂອງອົງການ IUCN 6 ກຸ່ມ ໃນທົ່ວໂລກລວມມີ: ຄະນະກຳມະການເພື່ອການຢູ່ລອດຂອງຊະນິດພັນ Species Survival Commissions "SSC"), ຄະນະກຳມະທິການປ່າສະຫງວນໂລກ (World Commissions on Protected Areas "WCPA"), ຄະນະກຳມະທິການກົດໝາຍສິ່ງແວດລ້ອມ (Commission on Environmental Law "CEL"), ຄະນະກຳມະທິການການສຶກສາ ແລະ ສື່ສານ (Commission on Education and Communication "CEC"), ຄະນະກຳມະທິການ ນະໂຍບາຍເສດຖະກິດສິ່ງແວດລ້ອມ ແລະ ສັງຄົມ (Commission on Environmental, Economic and Social Policy "CEESP") ແລະ ຄະນະກຳມະທິການຄຸ້ມຄອງລະບົບນິເວດ (commission on Ecosystem Management "CEM").

ອົງການ IUCN ໄດ້ນຳໃຊ້ແຫຼ່ງຊັບພະຍາກອນດ້ານວິຊາການ ແລະ ດ້ານສະຖາບັນຈາກເຄືອຄ່າຍທົ່ວໂລກຂອງຕົນເພື່ອສະໜອງການບໍລິການທີ່ສົມບູນ ແລະ ຄົບຊຸດທີ່ສຸດໃຫ້ແກ່ຜູ້ຮ່ວມງານ ແລະ ບັນດສະມາຊິກ. ບົດບາດດ້ານຍຸດທະສາດຫລັກ 3 ອັນທີ່ເປັນການສະໜັບ, ເປັນຈຸດເຂັ້ມແຂງຂອງອົງການ IUCN ມີຄື:

**ອົງການ IUCN ລາວເປັນຜູ້ຈັດການປະຊຸມ**

ໂດຍມີບົດບາດ ໃນການຈັດປະຊຸມປຶກສາຫາລື ກັບຫລາຍລະດັບ-ຫຼາຍພາກສ່ວນ, ກັບກຸ່ມປະຕິບັດວຽກງານ ແລະ ຮ່ວມງານກັນ, ອົງການ IUCN ລາວ ພະຍາຍາມປັບປຸງຄວາມຮ່ວມມື ແລະ ຄວາມເຂົ້າໃຈລະບົບພາຍໃນສະຖາບັນສະຖາບັນ ກັບຜູ້ທີ່ມີສ່ວນຮ່ວມທີ່ກ່ຽວຂ້ອງທັງໝົດ. ອົງການ IUCN ລາວ ນຳໃຊ້ສາຍພົວພັນກັບເຄື່ອຄ່າຍນັກວິທະຍາສາດ ເພື່ອໃຫ້ຕົນມີສ່ວນຮ່ວມໃນການສ້າງ ແລະ ຕິດຕາມກວດການະໂຍບາຍສາກົນ, ຂໍ້ຕົກລົງຫຼາຍຝ່າຍດ້ານສິ່ງແວດລ້ອມ, ແລະ ການສ້າງກົດໝາຍທ້ອງຖິ່ນໃນທົ່ວໂລກ ແລະ ອົງການ IUCN ລາວ ຍັງຈັດກອງປະຊຸມກັບຜູ້ທີ່ມີສ່ວນຮ່ວມທີ່ສຳຄັນຕ່າງໆ ເພື່ອສ້າງຂີດຄວາມສາມາດດ້ານສະຖາບັນ ແລະ ເພື່ອປັບປຸງການຄົ້ນຄ້ວາວິໃຈ, ການຕີລາຄາທາງດ້ານສິ່ງແວດລ້ອມ ແລະ ການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ.

**ອົງການ IUCN ລາວສະຖານທີ່ມີຊ່ຽວຊານທາງວິທະຍາສາດ ແລະ ວິຊາການ.**

ອົງການ IUCN ລາວ ໄດ້ໜູນໃຊ້ເຄືອຂ່າຍ ທີ່ກວ້າງຂວາງຂອງອົງການ IUCN ສາກົນ ຊຶ່ງມີສະມາຊິກຫຼາຍກວ່າ 1000; ມີຊ່ຽວຊານຫຼາຍກວ່າ 10,000 ຄົນ ໃນ 6 ຄະນະກຳມະທິການ ແລະ ຄະນະກອງເລຂາສາກົນໜຶ່ງຄະນະ ເພື່ອຕອບຮັບຢ່າງວ່ອງໄວຕໍ່ບັນຫາຕ່າງໆທີ່ປະກົດຂຶ້ນ ແລະ ໃຫ້ຄຳປຶກສາດ້ານວິຊາການ ແລະ ວິທະຍາສາດເມື່ອເວລາໄດ້ຮັບການຂໍຮ້ອງ.

**ອົງການ IUCN ລາວ ເປັນສູນກາງຂໍ້ມູນ-ຂ່າວສານ**

ອົງການ IUCN ໄດ້ຕັ້ງຫໍສະມຸດສາກົນ ຊຶ່ງປະກອບມີ ເອກະສານຕ່າງໆພິມອອກເປັນປຶ້ມ ແລະ ໃນລະບົບ Digital , ມີຄວາມສະດວກໃນການເຂົ້າເຖິງເພື່ອທີ່ຈະ:

ເກັບຮັກສາ ແລະ ເຜີຍແຜ່ຜົນການສຶກສາຄົ້ນຄວ້າອັນໃໝ່ໆ ຈົນເຖິງປະຈຸບັນຂອງບັນຫາຕ່າງໆທີ່ກ່ຽວ ຂ້ອງ.

ທົດລອງວິທີການຕ່າງໆທີ່ໄດ້ຄົ້ນຄິດຂຶ້ນ ແລະ ປະຕິບັດຕົວຈິງໃນທົ່ວໂລກ ແລະ ສະແດງໃຫ້ເຫັນຂອດພົວພັນລະຫວ່າງການອານຸລັກ ແລະ ການດຳລົງຊີວິດ ແລະ ສົ່ງເສີມການຮຽນຮູ້ຕົວຈິງໃນພາກສະ ໜາມ ແລະ ເຜີຍແຜ່ຄວາມຮູ້ ທີ່ໄດ້ເກັບກຳມາຈາກປະສົບປະການ ເພື່ອສົ່ງເສີມການປ່ຽນແປງນະໂຍບາຍ

## ເອກະສານຊ້ອນທ້າຍ 2: ອົງການ IUCN ປະຈຳພາກພື້ນອາຊີ

**ວິໄສທັດຂອງອົງການ**

ໂລກທີ່ເຫັນຄຸນຄ່າ ແລະ ອະນຸລັກທຳມະຊາດ

**ພາລະກິດ/ພາລະບົດບາດ**

ເພື່ອສະທ້ອນຊຸກຍູ້ ແລະ ຊ່ວຍເຫຼືອປະຊາຄົມໃນທົ່ວໂລກ ໃນການອະນຸລັກຄວາມສົມບູນອັນຄົບຖ້ວນ ແລະ ຄວາມຫຼາກຫຼາຍຂອງທຳມະຊາດ ໃຫ້ມີຄວາມສະເໝີພາບ ແລະ ຄວາມຍືນຍົງ. ອົງການ IUCN ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1948 ຢູ່ Fontainebleau (France), ເປັນອົງການທີ່ນຳໜ້າຂອງໂລກ ໃນດ້ານສະພາບແວດລ້ອມ. ບົດບາດຂອງອົງການ ແມ່ນເພື່ອເປັນເວທີປະຊຸມປຸກລະດົມ ແລະ ໃຫ້ສິດອຳນາດແກ່ອົງການຈັດຕັ້ງ ແລະ ປະຊາຊົນ ເພື່ອປະສົມປະສານ ການອະນຸລັກເຂົ້າໃນການພັດທະນາເສດຖະກິດສັງຄົມໃຫ້ດີຂື້ນ. ອົງການ IUCN ຍັງ ເປັນຜູ້ສັງເກດການຢູ່ປະຈຳພາກທົ່ວໄປຂອງ UN ໂດຍມີສຳນັກງານໃຫ່ຍຢູ່ Gland, ປະເທດ ສະວິດ ເຊີແລນ. ສະມາຊິກຂອງອົງການ IUCN ມີທັງໝົດ 1.043 ສະມາຊິກຈາກ1,043 ສະມາຊິກຈາກ 147 ປະເທດກະຈາຍ ໄປທົ່ວ 8 ພາກພື້ນໂດຍມີ 83 ລັດ, 110 ອົງການຈັດຕັ້ງລັດ, 136 ອົງການຈັດຕັ້ງບໍ່ຂຶ້ນກັບລັດຖະບານປະຈຳ ປະເທດຕ່າງໆ, 82 ອົງການຈັດຕັ້ງສາກົນ ແລະ 32 ສະຖາບັນທີ່ເປັນສາຂາ.

ດັ່ງທີ່ເປັນອົງການດ້ານສິ່ງແວດລ້ອມ ອີ່ງໃສ່ວິທະຍາສາດ, ອົງການ IUCN ໄດ້ສ້າງຄວາມຮູ້ ແລະ ຜົນງານທີ່ເປັນຈຸດເດັ່ນເຊັ່ນ: ບັນຊີແດງຂອງຊະນິດພັນທີ່ໃກ້ສູນພັນ ແລະ ລະບົບການຈັດປະເພດປ່າສະຫງວນ.

ເລີ້ມຈາກເຂດ Himalayas ຮອດທະເລປາຊິຟິກ, ທະວີບອາຊີ ໄດ້ມີແຜນງານປະຈຳພາກພື້ນທີ່ໃຫ່ຍທີ່ສຸດຂອງອົງການ IUCN ແລະ ກວມເອົາການເປັນສະມາຊິກ ຂອງອົງການປະມານ 12%. ກອງເລຂາປະຈຳ ຢູ່ 9 ປະເທດ ແລະ ມີຫ້ອງການປະຈຳພາກພື້ນຢູ່ ບາງກອກ ປະເທດໄທ, ໄດ້ຈັດຕັ້ງປະຕິບັດໂຄງການຕ່າງໆ ຫຼາຍກ່ວາ 100 ໂຄງການໂດຍມີພະນັກງານປະມານ 500 ຄົນ. ອົງການມີອົງການຈັດຕັ້ງສະມາຊິກ 129 ແຫ່ງ (ຝ່າຍລັດ ແລະ ບໍ່ຂຶ້ນກັບລັດ) ຢູ່ 19 ປະເທດໃນທັງໝົດ 23 ປະເທດໃນອາຊີຕາເວັນອອກສຽງໃຕ້ ແລະ ມີຄະນະກຳມະການແຫ່ງຊາດຢູ່ປະເທດປະກິດສະຖານ, ອິນເດຍ, ເນປານ, ສີລັງກາ, ບາງກະລາເດັດ, ຍີປຸ່ນ ແລະ ເກົາຫຼີໃຕ້ ມີປະມານ 1,700  ຊ່ຽວຊານຢູ່ອາຊີ ທີ່ອາສາສະມັກເປັນສະມາຊິກ ຂອງຄະນະກຳມາທິການ 6 ຄະນະຂອງອົງການ IUCN.

ລະບົບນິເວດອາຊີ ໃຫ້ການສະໜັບສະໜູນ ພົນລະເມືອງ ແລະ ຊີວະນາໆພັນຫຼາຍກ່ວາເຄິ່ງໜຶ່ງຂອງໂລກ.

ສະພາບການຂອງມະນຸດ ຢູ່ໃນອາຊີໃນ ດ້ານເງື່ອນໄຂດ້ານເສດຖະກິດ ແລະ ສັງຄົມ ແມ່ນມີຄວາມແຕກຕ່າງກັນຫຼາຍ. ທະວີບອາຊີໄດ້ປະເຊີນກັບອັດຕາການຂະຫຍາຍຕົວ ຂອງເສດຖະກິດ ທີ່ບໍ່ເຄີຍປະກົດຂຶ້ນມາກ່ອນ ໃນຊຸມປີນີ້, ເຮັດໃຫ້ອາຊີເປັນພື້ນທີ່ທີ່ຂະຫຍາຍຕົວໄວທີ່ສຸດໃນໂລກ. ເຖິງຢ່າງໃດກໍ່ຕາມ ສະພາບຄວາມທຸກຍາກ ຍັງມີສູງຢູ່ຫຼາຍປະເທດ, ສະເພາະແມ່ນປະເທດເນປານ, ກຳປູເຈຍ, ບັງກະລາເດັດ, ປາກິດສະ ຖານ, ສປປ ລາວ, ອິນເດຍ, ພະມ້າ, ຫງວດນາມ ແລະ ອິນໂດເນເຊຍ. ເປົ້າໝາຍສະຫັດສັດຕະວັດ ເພື່ອການພັດທະນາ ແລະ ຜົນໄດ້ຮັບທີ່ເກີດຈາກກອງປະຊຸມສຸດຍອດລະດັບໂລກ ກ່ຽວກັບການພັດທະນາແບບຍືນຍົງ (World Summit on Sustainable Development “WSSD”) ຢູ່ Johonnesburg ແລະ ກອງປະຊຸມການອະນຸລັກໂລກ ຊຸດທີ່ 3 ຂອງອົງການ IUCN (3rd IUCN World Conservation Congress) ປີ 2004 ຈັດຢູ່ບາງກອກ ໄດ້ສ້າງພື້ນຖານໃຫ້ແກ່ບູລິມະສິດ ການອະນຸລັກ ແລະ ການພັດທະນາເສດຖະກິດສັງຄົມ ຂອງ ອົງ ການ IUCN.

ໃນຄະນະທີ່ເປີດປະຊຸມເຜີຍແຜ່ ປ່າຊາຍເລຍ (Mangroves) ເພື່ອອະນາຄົດ, ແຜນລິເລີ່ມອະນຸລັກ ຊາຍຝັ່ງ ປະຈຳ 5 ປີ ຢູ່ 10 ປະເທດທີ່ໄດ້ຮັບຜົນກະທົບ ຈາກຄື້ນຊູນາມິຢູ່ອາຊີ ແລະ ອາບຟິກາຕາເວັນອອກ, ອົງການ IUCN ມີຄວາມພາກພູມໃຈ ທີ່ໄດ້ປະຕິບັດພາລະບົດບາດ ໃນການໃຫ້ຄວາມຮູ້ ເພື່ອໃຫ້ສິດອຳນາດ ອົງການຈັດຕັ້ງຕ່າງໆ ແລະ ປະຊາຊົນ ເພື່ອມີການຕັດສິນໃຈທີ່ດີ ເພື່ອການປັບປຸງເງື່ອນໄຂລະບົບນິເວດ ແລະ ການເປັນຢູ່ ຂອງປະຊາຊົນ.

## ເອກະສານຊ້ອນທ້າຍ 3: ຂະບວນການວາງແຜນຍຸດທະສາດ 2007-2011

ໃນການວາງແຜນຍຸດທະສາດ, ອົງການ IUCN ລາວ ໄດ້ເໜັ້ນໜັກໃສ່ ການວິເຄາະຜູ້ທີ່ມີສວນຮ່ວມ ແລະ ການເຂົ້າຮ່ວມຂອງເຂົາເຈົ້າ. ໜຶ່ງໃນຜົນໄດ້ຮັບທີ່ໜ້າສົນໃຈ ກວ່າໝູ່ໝົດ ໃນຂະບວນການນີ້ ແມ່ນການກຳນົດຄູ່ຮ່ວມງານອື່ນທີ່ອາດມີຂຶ້ນ, ແລະ ຄູ່ຮ່ວມງານທີ່ກຳລັງປະກົດຕົວຂຶ້ນ ແລະ ການສັງລວມຄວາມເຂົ້າໃຈກັບຄູ່ຮ່ວມງານທີ່ມີຢູ່ໃນປະຈຸບັນ. ການວິເຄາະຜູ້ມີສ່ວນຮ່ວມໄດ້ດຳເນີນໄປຢູ່ພາຍໃນອົງການ ແລະ ຫຼັງຈາກນັ້ນກໍ່ໄດ້ມີການແລກປ່ຽນ ບົດຮຽນນຳ ຄູ່ຮ່ວມງານຫຼັກຂອງອົງການ IUCN ລາວ. ໄດ້ມີຄວາມຊັດເຈນຫລາຍຂຶ້ນຕື່ມກ່ຽວກັບຂົງເຂດບຸລິມະສິດ ໃນການຮ່ວມມື ແລະ ທິດທາງ ທີ່ຈະນຳພາແຜນງານຂອງອົງການໃນ 5 ປີຕໍ່ໜ້າ.

| | |
|---|---|
| **ກໍານົດເວລາ:** | |
| **ພະຈິກ 2005:** | ຮ່າງບັນດາຂໍ້ໄດ້ປຽບ ແລະ ສະພາບຈຸດຢືນໃນ ສປປ ລາວ. |
| ທັນວາ 2005: | ກໍານົດຫົວຂໍ້ແຜນງານ ທີ່ເປັນບຸລິມະສິດ. |
| ມັງກອນ-ມີນາ 2006: | ວິເຄາະແຜນງານ ເພື່ອສ້າງຫົວຂໍ້ທີ່ສົນໃຈ. |
| ມີນາ-ກໍລະກົດ 2006: | ລິເລີ່ມການປຶກສາຫາລື ກັບ ພາກສ່ວນທີ່ມີສ່ວນຮ່ວມ |
| ພະຈິກ 2006: | IUCNLao strategic planning Retreat |
| ທັນວາ 2006: | ແຜນຍຸດທະສາດໃໝ່ (ຮ່າງ ສໍາລັບ 5 ປີ) ໄດ້ສ້າງຂຶ້ນ. |
| ທັນວາ 2006: | ຕິດຕາມການປຶກສາຫາລື ກັບພາກສ່ວນທີ່ມີສ່ວນຮ່ວມ |
| ມັງກອນ 2007: | ແຜນຍຸດທະສາດຂອງອົງການ IUCN ລາວ ເລີ່ມຕົ້ນຈັດຕັ້ງປະຕິບັດ |

ການທົບທວນຄືນກອບແຜນຍຸດທະສາດທີ່ຜ່ານມາ (ປີ 2001):

ໃນປີ 2001 ອົງການ IUCN ລາວ ໄດ້ຈັດຊຸດກອງປະຊຸມ ການສ້າງແຜນງານຮ່ວມ ກັບຜູ້ຕ່າງໜ້າຈາກຝ່າຍລັດຖະບານຫລາຍກ່ວາ 120 ທ່ານ ຈາກຂັ້ນແຂວງ ແລະ ສູນກາງ. ໃນກອງປະຊຸມ ໄດ້ສະແດງໃຫ້ເຫັນຄວາມເຫັນດີເປັນເອກະພາບນໍາກັນ ກ່ຽວກັບຄວາມສໍາຄັນ ໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ເພື່ອເຮັດໃຫ້ການດໍາລົງຊີວິດຢູ່ຊົນນະບົດມີຄວາມຍືນຍົງ ແລະ ສະໜັບສະໜູນຄວາມພະຍາຍາມ ການພັດທະນາປະເທດຊາດ. ທີມງານແຜນງານຂອງອົງການ IUCN ລາວ ໄດ້ທົບທວນຄືນຜົນໄດ້ຮັບຂອງຂະບວນການນີ້ ເຂົ້າໃນຊ່ວງການວາງແຜນຂັ້ນເລີ່ມຕົ້ນເພື່ອສ້າງກອບຍຸດທະສາດ.

**ການວາງແຜນພາຍໃນອົງການ:**
ເພື່ອທີ່ຈະກໍານົດຜູ້ມີສວນຮ່ວມຫຼັກແຕ່ລະຂົງເຂດແຜນງານ, ພະນັກງານວິຊາການຂອງອົງການ IUCN ລາວ ໄດ້ນໍາໃຊ້ບົດຝຶກສ້າງແຜນທີ່ບັນຫາຕ່າງໆຂຶ້ນ, ອີງຕາມວິທີການການວິເຄາະ ຜູ້ມີສ່ວນຮ່ວມພາຍໃຕ້ການຊີ້ນໍາຈາກ IUCN Asia Regional Communications (Hill & Knowton, 2004). ແຕ່ລະຈຸດປະສົງຂອງ 4 ແຜນງານຫລັກ, ທາງທີມງານ ໄດ້ກໍານົດຜູ້ມີສ່ວນຮ່ວມທີ່ຖືວ່າ ມີຄວາມກ່ຽວຂ້ອງກັບແຜນງານນັ້ນໆ ແລະ ຫຼັງຈາກນັ້ນກໍ່ໄດ້ມີການຈັດລຽງ ໂດຍອີງຕາມຄວາມສໍາຄັນ ຂອງຂົງເຂດການຮ່ວມມື ແລະ ປະສານງານເພື່ອເຮັດໃຫ້ເປົ້າໝາຍ ຂອງແຜນງານຂອງອົງການ IUCN ປະສົບຜົນສໍາເລັດ.

**ການປຶກສາຫາລືກັບພາກສ່ວນທີ່ມີສ່ວນຮ່ວມ (ຮອບທໍາອິດ):**
ໄດ້ມີການປຶກສາຫາລື ເປັນລາຍບຸກຄົນກັບຜູ້ມີສວນຮ່ວມທີ່ຄໍາຄັນ. ໄດ້ສອບຖາມຕົວແທນຈາກ ແຕ່ລະ ສະຖາບັນ ເພື່ອກໍານົດວ່າແມ່ນແຜນງານ ຫຼື ຂົງເຂດວຽກງານ/ຈຸດປະສົງອັນໃດທີ່ຜູ້ມີສ່ວນຮວ່ມເຂົ້າໃຈວ່າ ມີຄວາມສໍາຄັນ ຕ້ອງໄດ້ມີການຮ່ວມມືກັບອົງການ IUCN ລາວ. ຜູ້ມີສ່ວນຮ່ວມແຕ່ລະຄົນຍັງໄດ້ເຫັນການຈັດລຽງຂົງເຂດທີ່ສໍາຄັນ ຂອງການຮ່ວມມືທີ່ອົງການ IUCN ຈັດລຽງຂຶ້ນເອງແລະໄດ້ຂໍຮ້ອງໃຫ້ ປະກອບຄໍາຄິດເຫັນຕໍ່ ຄວາມສໍາຄັນ ຂອງຂົງເຂດແຕ່ລະວຽກງານ.

**ການວິເຄາະ ແລະ ການໃຈແຍກຂໍ້ມູນ**

ຫຼັງຈາກການປຶກສາຫາລື ກັບພາກສ່ວນທີ່ມີສ່ວນຮ່ວມຮອບທີ່ນຶ່ງແລ້ວ, ອົງການ IUCN ລາວໄດ້ວິເຄາະສົມທຽມ ລະອຽດກ່ຽວກັບ ບົດບາດຂອງຜູ້ທີ່ມີສ່ວນຮ່ວມຕາມຄວາມເຂົ້າໃຈ. ຜົນຂອງການວິເຄາະໄດ້ສະແດງໃຫ້ເຫັນວ່າ ຜູ້ທີ່ມີສ່ວນຮ່ວມສ່ວນຫລາຍນັ້ນ ໄດ້ເຂົ້າໃຈຂົງເຂດຫຼັກກອງການຮ່ວມ ໃນທາງທີ່ຄ້າຍຄືກັນກັບອົງການ IUCN ໄດ້ຮັບຮູ້ ແລະ ເຂົ້າໃຈ. ແຕ່ເຖິງຢ່າງໃດກໍ່ຕາມ, ການວິເຄາະ ຍັງໄດ້ສະແດງໃຫ້ເຫັນອີກວ່າ ມີບາງຂົງເຂດໃໝ່ ໃນການຮ່ວມມືກັບຜູ້ຮ່ວມງານທີ່ມີແລ້ວ, ມີການປ່ຽນແປງໃນບາງຂອດການຮ່ວມມື ໃນວຽກງານໃຫ່ຍບາງອັນ ກັບຄູ່ຮ່ວມງານ ແລະ ມີຄວາມກະຈ່າງແຈ້ງເພີ່ມຂື້ນ ກ່ຽວກັບຂົງເຂດການຮ່ວມມື ທີ່ຕ້ອງການກັບຜູ້ມີ ສ່ວນຮ່ວມ ທີ່ ກຳລັງປະກົດຕົວຂຶ້ນ.

**ການປຶກສາຫາລືກັບພາກສ່ວນທີ່ມີສ່ວນຮ່ວມ (ຮອບສອງ)**

ການວິເຄາະຜູ້ມີສ່ວນຮ່ວມ ໄດ້ຖືກສັງລວມເຂົ້າກັນ ເພື່ອສ້າງກອບຍຸດທະສາດຂອງອົງການ IUCN 2007-2011 ສະບັບຮ່າງ ແລະ ໄດ້ສົ່ງໃຫ້ພາກສວ່ນຕ່າງໆທັງໃນປະເທດລາວ ແລະ ພາກພື້ນທົບທວນ ແລະ ປະກອບຄຳຄິດເຫັນ. ການປະກອບຄຳຄິດເຫັນໄດ້ຖືກດຳເນີນໄປເປັນເວລາ 2 ອາທິດຜ່ານໂດຍການຕິດຕໍ່ທາງໂທລະສັບ, Email ແລະ ການແລກປ່ຽນຕົວຕໍ່ຕົວ.

**ການກະກຽມຮ່າງສຸດທ້າຍ ແລະ ການເລີ່ມຕົ້ນຜ່ານເອກະສານ**

ໃນເດືອນມັງກອນປີ 2007 ແຜນຍຸດທະສາດໄດ້ສຳເລັດສົມບູນ ແລະ ເລີ່ມຕົ້ນປະຕິບັດໄດ້.

**ການນຳໃຊ້ຕົວຈິງສຳລັບແຜນຍຸດທະສາດ 2007 -2011**

**ເຂົ້າໃຈໝາກຜົນໃນການປະສານງານ ແລະ ການເຊື່ອມໂຍງກັນ:** ໂດຍມີການຈັດຫົວຂໍ້ແຜນງານ ທີ່ມີຄວາມກະຈ່າງແຈ້ງຂື້ນ, ກອບແຜນງານຍຸດທະສາດຂອງອົງການ IUCN ລາວ ສະທ້ອນໃຫ້ເຫັນ ເຖິງໝາກຜົນໃນການປະສານງານ ແລະ ການເຊື່ອມໂຍງກັນ ພາຍໃນວຽກງານດີຂື້ນກວ່າເກົ່າ. ຮູບສະແດງຂອງແຜນງານສາມາດນຳໃຊ້ເພື່ອກຳນົດຄວາມເຊື່ອມໂຍງເຫຼົ່ານີ້ ແລະ ເຮັດແນວນັ້ນ, ເພື່ອເສີມສ້າງຄວາມເຂັ້ມແຂງໃນການປະຕິບັດແຜນງານຂອງອົງການ IUCN ລາວ ຄົບຊຸດ.

**ເຄື່ອງມືການສື່ສານ:** ໂດຍມີແຜນງານທັງໝົດ 4 ຫົວຂໍ້ໄດ້ນອນຢູ່ໃນ ຄວາມຄິດເພື່ອປັບປຸງການດຳລົງຊີວິດ. ອົງ ການ IUCN ລາວ ເຊື່ອໝັ້ນວ່າການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບຈຸດປະສົງຂອງແຜນງານ ຈະໃຫ້ການຊື່ສານ ທີ່ດີຂຶ້ນໂດຍເອົາຄົນເປັນຈຸດສຸມເພື່ອການອະນຸລັກ.

**ເຄື່ອງມືການລົງທືນ:** ຍຸດທະສາດນີ້ຊ່ວຍອົງການ IUCN ລາວ ໃນການຕັດສິນໃຈເຮັດວຽກ ແລະ ຈັດແບ່ງຊັບພະຍາກອນມະນຸດ ແລະ ການເງິນໃນຮູບແບບທີ່ມີປະສິດຕິຜົນສູງສຸດ.

# ເອກະສານອ້າງອີງ

CMWG, TILCEPA (2004). Governance of Natural Resources – the Key to a Just World that Values and Conserves Nature? Briefing Note 7, CENESTA: November 2004.

Emerton L. (2005). Making the Economic Links between Biodiversity and Poverty Reduction: The Case of Lao PDR. The World Conservation Union (IUCN), Ecosystems and Livelihoods Group Asia, Colombo

Emerton L. (ed) (2005). Values and Rewards: Counting and Capturing Ecosystem Water Services for Sustainable Development. IUCN Water, Nature and Economics Technical Paper No. 1, IUCN – The World Conservation Union, Ecosystems and Livelihoods Group Asia.

FAO (1998). Sustaining agricultural biodiversity and agro-ecosystem functions: Opportunities, incentives and approaches for the conservation and sustainable use of agricultural biodiversity in agro-ecosystems and production systems. Presented at the International Technical Workshop organized jointly by the Food and Agriculture Organization of the United Nations and the Secretariat of the Convention on Biological Diversity, 2 - 4 December 1998, FAO Headquarters, Rome, Italy.

Hill & Knowlton (2004). Relationships, Reputation, Results. External Affairs as a Strategic Business Tool. Training prepared for Shell International Ltd. and shared with IUCN Asia Regional Office in a skills transfer programme with the private sector, Bangkok, Thailand: November 2005

ICEM (2003). Lao PDR National Report on Protected Areas and Development: Review of Protected Areas and Development in the Lower Mekong River Region. Indooroopilly: Queensland, Australia.

IUCN (2002). IUCN and Governance for Sustainable Development. IUCN: 16 May, 2002.

IUCN (2004). The IUCN Programme 2005-2008: Many Voices, One Earth. As adopted at the World Conservation Congress, 17-25 November, 2004, Bangkok, Thailand.

IUCN Business and Biodiversity Programme, available at www.iucn.org/themes/business/

IUCN Asia (2003). IUCN in Asia: Growing Together – Ecosystems and Livelihoods, IUCN: Thailand and Switzerland.

IUCN Asia (2005). A Strategy for Enhancing IUCN in Asia's Interaction with the Private Sector, IUCN Asia Regional Office: Thailand.

IUCN Lao PDR (2002). Conservation for Sustainable Livelihoods: A five-year strategic framework for IUCN's programme in Lao PDR, 2001-2006. Education Printing Enterprises: Vientiane, Lao PDR.

IUCN Lao PDR (2001). Conservation and Development Priorities. Results of a series of programming workshops held by IUCN Lao PDR. IUCN: June 2001, Vientiane, Lao PDR.

IUCN World Commission on Protected Areas (2006). Protected Area Categories. IUCN WCPA. Viewed November 2006. Available online: http://www.iucn.org/themes/wcpa/theme/categories/what.html

Lao National Tourism Administration (2005). 2005 Statistical Report on Tourism in Laos. LNTA Planning and Cooperation Department Statistic Unit, Government of Lao PDR: Vientiane, Lao PDR.

Osborne L (2006) Sunlabob Rural Energy Ltd,. The Energy Situation and Policy and Programs on Sustainable Energy Development in Lao PDR. Presented at the SEE2006 Sustainable Energy and Environment Conference, 21-23 November, 2006, Bangkok, Thailand. Available online: http://www.jgsee.kmutt.ac.th/see1/presentation/Country%20Reports_SEE2006/Country%20Report_Lao%20PDR.pdf

Robichaud W, March C, Southammakoth S, Khounthikoummane (2001). Review of the National Protected Area System of Lao PDR, Lao Swedish Forestry Programme, Division of Forest Resource Conservation and the World Conservation Union: Vientiane, Lao PDR.

STEA (2001). *State of the Environment Report Lao PDR 2001, Government of Lao PDR: Vientiane, Lao PDR.*

IUCN
The World Conservation Union

082/01 Fa Ngum Road
Ban Watt Chan
P.O.Box 4340
Vientiane, Lao PDR

Tel ++ 856-21 216401
Fax ++856-21 216127
info@iucnlao.org

www.iucn.org